# ຍຸດທະສາດ

## ພັດທະນາ ລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025

## ແລະ ວິໄສທັດຮອດປີ 2030

" ເພີ່ມທະວີການຜະລິດ ແລະ ການເຜີຍແຜ່ ຂໍ້ມູນສະຖິຕິທາງການໃຫ້ຄົບຖ້ວນ, ຊັດເຈນ ແລະ ທັນເວລາ ເພື່ອກ້າວສູ່ການເຊື່ອມໂຍງ ທາງດ້ານ ຄຸນນະພາບ ຕາມມາດຕະຖານສະຖິຕິສາກົນ ນັບມື້ນັບດີຂຶ້ນເລື້ອຍໆ "

ນະຄອນຫລວງວຽງຈັນ, 2017

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 142/ລບ
ນະຄອນຫຼວງວຽງຈັນ, ວັນທີ 05.05.2017

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
## ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດ ຮອດປີ 2030

- ອີງຕາມກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມມະຕິຕົກລົງ ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນມັງກອນ 2017 ສະບັບເລກທີ 01/ລບ, ລົງວັນທີ 10 ກຸມພາ 2017.
- ອີງຕາມໜັງສືສະເໜີ ສະບັບເລກທີ 0647/ຜທ, ລົງວັນທີ 29 ມີນາ 2017 ຂອງກະຊວງແຜນການ ແລະ ການລົງທຶນ.

**ລັດຖະບານ ອອກດຳລັດ :**

**ມາດຕາ 1 :** ຮັບຮອງ ແລະ ປະກາດໃຊ້ " ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດ ຮອດປີ 2030 ".

**ມາດຕາ 2 :** ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດ ຮອດປີ 2030 ໃຫ້ໄດ້ຮັບຜົນດີ.

**ມາດຕາ 3 :** ບັນດາກະຊວງ-ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ພ້ອມທັງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4 :** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

F - 3873

ກະຊວງແຜນການ ແລະການລົງທຶນ

ເລກທີ........../ຜທ

ນະຄອນຫຼວງວຽງຈັນ, ວັນທີ 28 DEC 2016

**ຮຽນ: ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ທີ່ເຄົາລົບ ແລະນັບຖືຢ່າງສູງ**

**ເລື່ອງ: ການປັບປຸງຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016 – 2025 ແລະວິໄສທັດຮອດປີ 2030**

- ອີງຕາມກົດໝາຍວ່າດ້ວຍສະຖິຕິ ສະບັບເລກທີ 03/ສພຊ
- ອີງຕາມຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ 2010-2020
- ອີງຕາມໃບສະເໜີ ສະບັບເລກທີ 2690/ຜທ.ຫກ1, ລົງວັນທີ 03 ເດືອນພະຈິກ 2016, ວ່າດ້ວຍ ລາຍງານຫົວຂໍ້ຕໍ່ກອງປະຊຸມລັດຖະບານ ແລະກົມການເມືອງປະຈໍາປີ 2017 ຂອງກະຊວງແຜນການ ແລະການລົງທຶນ.

ຜ່ານຜົນການປະເມີນກາງສະໄໝໃນການຈັດຕັ້ງປະຕິບັດ ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ 2010-2020 ແລະການປ່ຽນແປງທາງດ້ານຂໍ້ມູນຂ່າວສານດ້ານສະຖິຕິ ທັງພາຍໃນ ແລະຕ່າງປະເທດ. ກະຊວງແຜນການ ແລະການລົງທຶນ ຖືເປັນກຽດຢ່າງສູງ ຮຽນສະເໜີມາຍັງທ່ານຊາບວ່າ: ສູນສະຖິຕິແຫ່ງຊາດ ໄດ້ເປັນເຈົ້າການ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງສູນກາງ ແລະທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ໄດ້ດໍາເນີນການປັບປຸງແຜນຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະວິໄສ ທັດຮອດປີ 2030, ໄດ້ຜ່ານຂະບວນການທົບທວນ, ປະເມີນ ແລະປັບປຸງ ຕາມຫຼັກການໂດຍອີງໃສ່ ແລະ ດໍາເນີນໂດຍແນໃສ່ ໃຫ້ມີເນື້ອໃນກະທັດຮັດ, ຮັບປະກັນຄຸນນະພາບ, ທິດທາງ, ວິໄສທັດ, ພາລະກິດ ແລະ ຄາດໝາຍຂອງການພັດທະນາລະບົບສະຖິຕິແຫ່ງຊາດ, ໂຄງປະກອບ ແລະເນື້ອໃນມີດັ່ງນີ້:

## I. ການປັບປຸງຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016–2025 ແລະວິໄສທັດຮອດປີ 2030:

- ການປັບປຸງໄດ້ອີງໃສ່ຜົນການປະເມີນກາງສະໄໝຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ 2010-2020, ໂດຍພື້ນຖານແມ່ນໄດ້ຮັກສາໂຄງສ້າງເກົ່າ, ແຕ່ໄດ້ເພີ່ມບາງຈຸດຕື່ມຄື: ຕີລາຄາ ໄດ້ເພີ່ມການຕີລາຄາດ້ານງົບປະມານ; ພາກຍຸດທະສາດໃນການພັດທະນາໃນຕໍ່ໜ້າ ໄດ້ເອົາພາລະກິດເຂົ້າຕື່ມ, ເພີ່ມຈາກ 4 ຍຸດທະສາດ ເປັນ 5 ຍຸດທະສາດ ໂດຍໄດ້ແຍກ (ຍຸດທະສາດການຄຸ້ມຄອງ ແລະການລະດົມຊັບພະຍາກອນລວມທັງທຶນຮອນ; ເພື່ອໃຫ້ເຫັນເດັ່ນຊັດວຽກງານການຄຸ້ມຄອງຄຸນນະພາບ, ລະດົມທຶນຮອນມາສະໜອງວຽກງານສະຖິຕິຢ່າງເປັນລະບົບ) ແລະສະເໜີເພີ່ມຕື່ມ 3 ແຜນງານ ຄື: (1). ປັບປຸງສະຖິຕິຂັ້ນທ້ອງຖິ່ນ; (2). ການສ້າງ ແລະຜະລິດຕົວຊີ້ບອກ ເພື່ອຕິດຕາມ ແລະປະເມີນການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ (LDC); (3). ການສ້າງ ແລະພັດທະນາຕົວຊີ້ບອກທາງດ້ານເປົ້າໝາຍການພັດທະນາແບບຍືນຍົງ (SDGIs) ເຊິ່ງລວມທັງໝົດເປັນ 15 ແຜນງານ (ເພີ່ມຈາກ 12 ແຜນງານຈາກຍຸດທະສາດສະບັບປະຈຸບັນ).
- ບົນພື້ນຖານຄວາມຕ້ອງການໃໝ່ ແລະການປ່ຽນແປງທາງດ້ານແຜນງານ ແລະກິດຈະກຳ ໄດ້ປັບປຸງການຄາດຄະເນຄວາມຕ້ອງການທຶນຕາມຄວາມອາດສາມາດສະໜອງຂອງງົບປະມານແຫ່ງລັດ ແລະຄວາມອາດສາມາດລະດົມແຫຼ່ງທຶນຈາກຜູ້ໃຫ້ທຶນເພື່ອໃຫ້ພຽງພໍກັບການຈັດຕັ້ງປະຕິບັດຍຸດທະສາດນີ້.
- ສຳລັບຍຸດທະສາດນີ້ຍັງໄດ້ເໜັ້ນໃສ່ການປັບປຸງກົງຈັກສະຖິຕິ ທັງລະບົບການຈັດຕັ້ງສາຍຕັ້ງ ແລະສາຍຂວາງ ໃຫ້ມີຄວາມຈະແຈ້ງຕາມກົດໝາຍວ່າດ້ວຍສະຖິຕິໄດ້ກຳນົດໄວ້, ນັບທັງການກຳນົດຈຳນວນພະນັກງານເຂົ້າໃນແຕ່ລະຕຳແໜ່ງງານຢູ່ໃນແຕ່ຂັ້ນ, ຍັງຊີ້ໃຫ້ເຫັນແຜນການສ້າງ ແລະພັດທະນາຊັບພະຍາກອນມະນຸດທັງໄລຍະສັ້ນ, ໄລຍະກາງ ແລະໄລຍະຍາວ.

## II. ເນື້ອໃນຂອງຍຸດທະສາດໂດຍສັງເຂບ

### 1. ສະຫລຸບຫຍໍ້ສະພາບການຈັດຕັ້ງປະຕິບັດວຽກງານສະຖິຕິ

ຈາກຜົນການປະເມີນກາງສະໄໝ (2010-2015) ການຕັ້ງປະຕິບັດຍຸດທະສາດພັດທະນາລະບົບສະຖິຕິແຫ່ງ 2010-2020 ທັງພາຍໃນ ແລະ ພາຍນອກ (ສາກົນຕີລາຄາ) ໄດ້ສັງລວມໂດຍຫຍໍ້ເອົາບັນດາຜົນສຳເລັດທີ່ພົ້ນເດັ່ນ, ພ້ອມທັງຕີລາຄາ ດ້ານດີ, ດ້ານອ່ອນ, ສາເຫດ ແລະບົດຮຽນທີ່ຖອດຖອນໄດ້ ໃນແຕ່ລະດ້ານ ດັ່ງນີ້:

- ດ້ານນິຕິກຳ ແລະການຈັດຕັ້ງ
- ການພັດທະນາໂຄງລ່າງພື້ນຖານດ້ານສະຖິຕິ
- ການຄຸ້ມຄອງບໍລິການ ແລະການພັດທະນາຂໍ້ມູນສະຖິຕິ
- ການສ້າງຄວາມອາດສາມາດ ແລະການຮ່ວມມື

- ດ້ານງົບປະມານ
- ການຕີລາຄາລວມ, ເຊິ່ງເພີ່ມໃສ່ດ້ານດີ, ດ້ານອ່ອນ/ສິ່ງທ້າທາຍ ແລະບົດຮຽນຖອດຖອນໄດ້.

## 2. ວິໄສທັດຂອງແຜນຍຸດທະສາດ ການພັດທະນາລະບົບສະຖິຕິແຫ່ງຊາດ

ວິໄສທັດນີ້ໄດ້ປັບປຸງ ແລະຮຽບຮຽງຄືນຈາກ 2 ຈຸດມາເປັນ 3 ຈຸດຕົ້ນຕໍຄື:

- ເສີມສ້າງປະຖົມປັດໄຈທີ່ແໜ້ນໜາ ໃຫ້ແກ່ການພັດທະນາລະບົບສະຖິຕິແຫ່ງຊາດ ເພື່ອເຊື່ອມໂຍງກັບມາດຕະຖານສາກົນ ໃນປີ 2020 ໂດຍຕິດພັນສະໜິດແໜ້ນ ກັບການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ ແລະລັດຖະບານ ໃນກົນໄກເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ;
- ເພີ່ມທະວີການຜະລິດຂໍ້ມູນຂ່າວສານສະຖິຕິທາງການ ທີ່ມີຄຸນນະພາບໃນທຸກຂົງເຂດ ເພື່ອຕອບສະໜອງໃຫ້ແກ່ການສ້າງ ແລະປະເມີນຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ກໍ່ຄືການຫລຸດພົ້ນອອກຈາກສະຖານນະພາບປະເທດດ້ອຍພັດທະນາ ແລະບັນລຸເປົ້າໝາຍການພັດ ທະນາແບບຍືນຍົງ ແລະເຊື່ອມໂຍງຖານຂໍ້ມູນແຫ່ງຊາດກັບສາກົນ ໃນປີ 2025;
- ຮັບປະກັນການເຜີຍແຜ່ ແລະແລກປ່ຽນຂໍ້ມູນສະຖິຕິທາງການ ຄົບຖ້ວນ, ຊັດເຈນ ແລະທັນເວລາ ໃນປີ 2030.

## 3. ພະລາກິດ/ໜ້າທີ່

ໃນຂໍ້ນີ້ໄດ້ເພີ່ມເອົາເຂົ້າໃໝ່ເພື່ອຢາກສ່ອງແສງການສັງລວມ ໜ້າທີ່ຕົ້ນຕໍ ທີ່ລະບົບສະຖິຕິແຫ່ງຊາດຈະຕ້ອງໄດ້ຮັບຜິດຊອບໃນການຈັດຕັ້ງປະຕິບັດຕາມໜ້າທີ່, ພາລະບົດບາດ, ຂອບເຂດສິດວຽກງານການຜະລິດສະຖິຕິ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ ເຊິ່ງມີເນື້ອໃນຄື: "ພາລະກິດຂອງລະບົບສະຖິຕິແຫ່ງ ສປປ ລາວ ແມ່ນສ້າງລະບົບສະຖິຕິແຫ່ງຊາດໃຫ້ເຂັ້ມແຂງ, ສາມາດຜະລິດສະຖິຕິທາງການທີ່ຄົບຖ້ວນ, ຮັບປະກັນຄຸນນະພາບມາດຖານສາກົນ, ເປັນລະບົບຂໍ້ມູນດຽວ, ສ່ອງແສງຄວາມເປັນຈິງ ແລະຮັບໃຊ້ໄດ້ທຸກຂົງເຂດ ເພື່ອເຮັດໃຫ້ທຸກຄົນທີ່ອາໄສ ແລະເຄື່ອນໄຫວຢູ່ພື້ນແຜ່ນດິນລາວ ຖືກຈັດນັບເຂົ້າໃນຖານຂໍ້ມູນໂດຍຜ່ານຂະບວນການເກັບກຳຂໍ້ມູນສະຖິຕິຈາການສຳຫຼວດ ແລະລະບົບການລາຍງານແບບບໍລິຫານໃນແຕ່ລະໄລຍະ".

## 4. ຄາດໝາຍສູ້ຊົນ

ໄດ້ປັບປຸງຈາກ 9 ຄາດໝາຍສູ້ຊົນ ມາເປັນ 10 ຄາດໝາຍສູ້ຊົນ, ໄດ້ເພີ່ມຄາດໝາຍກ່ຽວກັບສ້າງແຜນງານຍຸດທະສາດການເຜີຍແຜ່ສະຖິຕິທາງການໃຫ້ເປັນລະບົບການເຜີຍແຜ່ທີ່ຄົບຊຸດ, ຮັບປະກັນການເຂົ້າເຖິງຂໍ້ມູນສະຖິຕິໃນຫຼາຍຮູບການ ເພື່ອຮັບປະກັນການນຳໃຊ້ສະຖິຕິໃຫ້ມີປະໂຫຍດສູງສຸດ, ເຊິ່ງໄດ້ສະແດງເຖິງໜ້າວຽກຕົ້ນຕໍທີ່ຕ້ອງ ໄດ້ປະຕິບັດໃຫ້ສຳເລັດໃນແຕ່ລະໄລຍະ, ພ້ອມກັນນັ້ນກໍ່ໄດ້ປັບປຸງ ຄື

ເລກຄາດໝາຍ ດ້ານບຸກຄະລາກອນ, ການກໍ່ສ້າງຍົກລະດັບຄວາມຮູ້ຄວາມສາມາດພະນັກງານ, ກໍານົດບັນດາຕົວຊີ້ບອກ, ບັນດາກິດຈະກໍາ ການສໍາຫຼວດ, ການປັບປຸງ ການຜະລິດ ຂໍ້ມູນສະຖິຕິໃນແຕ່ ລະຂະແໜງການ ແລະການສ້າງຍຸດທະສາດການເຜີຍແຜ່.

## 5. ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ

ສໍາລັບ 4 ຍຸດທະສາດແມ່ນໄດ້ຮັກສາຄືເກົ່າ ແລະໄດ້ເພີ່ມ 1 ຍຸດທະສາດ (ຍຸດທະສາດຍຸດທະສາດການລະດົມ ແລະຄຸ້ມຄອງຊັບພະຍາກອນລວມທັງການເງິນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານສະຖິຕິ ເພື່ອໃຫ້ມີປະສິດທິພາບ ແລະປະສິດທິຜົນ), ພ້ອມກັນນັ້ນກໍ່ໄດ້ຈັດສັນແຜນງານ ເຂົ້າໃສ່ແຕ່ລະຍຸດທະສາດ ແລະທົບທວນ, ເພີ່ມກິດຈະກໍາໃໝ່ຈໍານວນໜຶ່ງໃຫ້ສອດຄ່ອງຕື່ມກວ່າເກົ່າ ຕາມການປ່ຽນແປງຄວາມຕ້ອງການລວມ ແລະສະເພາະ.

## 6. ໄດ້ເພີ່ມ 12 ແຜນງານ ມາເປັນ 15 ແຜນງານ

ຮັກສາ 12 ແຜນງານ ແລະເພີ່ມ 3 ແຜນງານດັ່ງນີ້: (1). ປັບປຸງສະຖິຕິຂັ້ນທ້ອງຖິ່ນ; (2). ການສ້າງ ແລະຜະລິດຕົວຊີ້ບອກເພື່ອຕິດຕາມ ແລະປະເມີນການຫຼຸດພົ້ນອອກຈາກຄວາມ ດ້ອຍພັດທະນາ (LDC); (3). ການສ້າງ ແລະພັດທະນາຕົວຊີ້ບອກທາງດ້ານເປົ້າໝາຍການພັດທະນາແບບຍືນຍົງ (SDGIs).

## 7. ໄດ້ປັບປຸງ ແລະກໍານົດຕົວບັນດາຕົວຊີ້ບອກໂດຍໄດ້ຈັດແບ່ງອອກເປັນລະດັບຊາດ, ລະດັບຂະແໜງການ ແລະແຂວງ

ເພື່ອໃຫ້ສາມາດຕອບສະໜອງແກ່ການຕິດຕາມການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະ ກິດ-ສັງຄົມ, ເປົ້າໝາຍການພັດທະນາແບບຍືນຍົງ ແລະການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ໃນປີ 2020 ບັນດາຕົວຊີ້ບອກຈະໄດ້ມີການຂະຫຍາຍເພີ່ມຕື່ມຕາມຄວາມຕ້ອງການຂອງລັດຖະ ບານ ແລະສາກົນ. ນອກນັ້ນ, ສູນສະຖິຕິແຫ່ງຊາດ ໃນຂະບວນການຈັດຕັ້ງປະຕິບັດຍຸດທະສາດຈະສົມທົບກັບຂະແໜງການ ແລະທ້ອງຖິ່ນທີ່ກ່ຽວຂ້ອງເພື່ອລົງເລິກ ແລະເຮັດເປັນອັນລະອຽດເພື່ອສ້າງເປັນເອກະສານທາງການຕື່ມອີກ.

**ດັ່ງນັ້ນ, ກະຊວງແຜນການ ແລະການລົງທຶນ ຂໍຮຽນສະເໜີມາຍັງທ່ານນາຍົກລັດຖະມົນຕີ:**

1. ສະເໜີເອົາຍຸດທະສາດ ການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະວິໄສທັດ ຮອດປີ 2030 ເຂົ້າຜ່ານກອງປະຊຸມລັດຖະບານ (ຕາມວາລະແມ່ນເດືອນ ມັງກອນ ປີ 2017).
2. ພາຍຫຼັງມີການປັບປຸງຈາກຄໍາຄິດເຫັນກອງປະຊຸມລັດຖະບານແລ້ວ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ຈະໄດ້ນໍາສະເໜີທ່ານນາຍົກລັດຖະມົນຕີ ອອກດໍາລັດຮັບຮອງເອົາ ຍຸດທະສາດ ການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະວິໄສທັດຮອດ ປີ 2030 ດັ່ງກ່າວ.
3. ອະນຸມັດໃຫ້ກະຊວງ ຜທ ອອກຄໍາສັ່ງແນະນໍາການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ.
4. ຈັດພິມ ແລະ ຈັດຕັ້ງປະຕິບັດການເຜີຍແຜ່ ຍຸດທະສາດດັ່ງກ່າວໃນທົ່ວຂະແໜງການ, ທ້ອງຖິ່ນ ແລະສາກົນຢ່າງທົ່ວເຖິງ.

ດັ່ງນັ້ນ, ກະຊວງແຜນການ ແລະການລົງທຶນຈຶ່ງຮຽນຂໍສະເໜີມາຍັງທ່ານເພື່ອພິຈາລະນາອະນຸມັດຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະນັບຖືຢ່າງສູງ,

ລັດຖະມົນຕີ

ກະຊວງແຜນການ ແລະການລົງທຶນ

ກະຊວງແຜນການແລະການລົງທຶນ ລັດຖະມົນຕີ

ດຣ. ສຸພັນ ແກ້ວມີໄຊ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຍຸດທະສາດ
# ພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025
# ແລະ ວິໄສທັດຮອດປີ 2030

ເພີ່ມທະວີການຜະລິດ ແລະ ການເຜີຍແຜ່ ຂໍ້ມູນສະຖິຕິທາງການໃຫ້ຄົບຖ້ວນ, ຊັດເຈນ ແລະ ທັນເວລາ
ເພື່ອກ້າວສູ່ການເຊື່ອມໂຍງ ທາງດ້ານຄຸນນະພາບ ຕາມມາດຕະຖານສະຖິຕິສາກົນ ນັບມື້ນັບດີຂຶ້ນເລື້ອຍໆ.

ນະຄອນຫຼວງວຽງຈັນ, ພຶດສະພາ 2017

## ສາລະບານ


**ຄຳນຳ................. ...................................................................................................ii**
ພາກທີ I: ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດ ວຽກງານສະຖິຕິ 2010-2015 ......................................... 1
1. ສະຫຼຸບໂດຍຫຍໍ້ສະພາບການຈັດຕັ້ງປະຕິບັດວຽກງານສະຖິຕິ..................................................... 1
1.1. ດ້ານນິຕິກຳ ແລະ ການຈັດຕັ້ງ................................................................................ 1
1.2. ການພັດທະນາໂຄງລ່າງພື້ນຖານດ້ານສະຖິຕິ ............................................................... 2
1.3. ການຄຸ້ມຄອງ ແລະພັດທະນາຂໍ້ມູນສະຖິຕິທາງການ ......................................................... 2
1.4. ການສ້າງຄວາມອາດສາມາດ ແລະການຮ່ວມມື ............................................................. 3
1.5. ງົບປະມານ.......................................................................................................... 4
2. ຕີລາຄາລວມ ............................................................................................................ 4
2.1. ຜົນສຳເລັດພົ້ນເດັ່ນຈາກການຈັດຕັ້ງປະຕິບັດຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ.............. 4
2.2. ຈຸດດີ ແລະ ສາເຫດ .............................................................................................. 5
2.3. ຂໍ້ຄົງຄ້າງ ແລະ ສາເຫດ ........................................................................................ 5
2.4. ຖອດຖອນບົດຮຽນ ............................................................................................... 7
ພາກທີ II: ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະວິໄສທັດຮອດ ປີ 2030....................................................................................................................... 8
1. ວິໄສທັດ (Vision) ແລະພາລະກິດ (Mission) ................................................................... 8
1.1. ວິໄສທັດ. ............................................................................................................ 8
1.2. ພາລະກິດ ............................................................................................................ 8
2. ເປົ້າໝາຍ ແລະ ຄາດໝາຍສູ້ຊົນ .................................................................................... 9
2.1. ເປົ້າໝາຍ............................................................................................................ 9
2.2. ຄາດໝາຍສູ້ຊົນ..................................................................................................... 9
3. ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025...............................12
3.1. ຍຸດທະສາດ ແລະແຜນງານ: ການປັບປຸງ ແລະຈັດຕັ້ງປະຕິບັດບັນດານິຕິກຳ. ............................13
3.2. ຍຸດທະສາດ ແລະແຜນງານ: ການພັດທະນາໂຄງລ່າງພື້ນຖານດ້ານສະຖິຕິ...............................13
3.3. ຍຸດທະສາດ ແລະແຜນງານ: ການຄຸ້ມຄອງ, ບໍລິຫານ ແລະ ພັດທະນາຂໍ້ມູນ............................13
3.4. ຍຸດທະສາດ ແລະແຜນງານ: ການຮັບປະກັນລະບົບປະສານງານດ້ານສະຖິຕິ ແລະ ການເຊື່ອມໂຍງ ເຄືອຂ່າຍ ....................................................................................................14
3.5. ຍຸດທະສາດ ແລະແຜນງານ: ລະດົມ ແລະຄຸ້ມຄອງຊັບພະຍາກອນເພື່ອສະໜັບສະໜູນການຈັດຕັ້ງ ປະຕິບັດວຽກງານສະຖິຕິ ເພື່ອໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ................................14
4. ແຜນງານ ແລະ ກິດຈະກຳຕົ້ນຕໍໃນການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025........14
5. ແຜນຄວາມຕ້ອງການງົບປະມານ ..................................................................................40
ພາກທີ III: ມາດຕະການຈັດຕັ້ງປະຕິບັດຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025..41
ເອກະສານຊ້ອນທ້າຍ ......................................................................................................43

# ຄຳນຳ

ການພັດທະນາລະບົບສະຖິຕິແຫ່ງຊາດ ໃຫ້ເປັນລະບົບທີ່ດີ, ມີປະສິດທິພາບ ແລະ ປະສິດທິຜົນ ແມ່ນຄວາມຈຳເປັນຢ່າງພາວະວິໄສ ແລະ ອັດຕະວິໄສ ຂອງປະເທດເຮົາ ເພື່ອເຮັດໃຫ້ວຽກງານສະຖິຕິທາງການໄດ້ຮັບການປັບປຸງບົນພື້ນຖານຫຼັກການວິທະຍາສາດ, ລະບອບວິທີວິທະຍາດ້ານສະຖິຕິ ແລະ ຜ່ານບັນດາຂະບວນການຜະລິດ, ການນຳສະເໜີ, ເຜີຍແຜ່ ແລະ ນຳໃຊ້ທີ່ເໝາະສົມ.

ຄວາມຈຳເປັນຕົ້ນຕໍໃນການປັບປຸງ ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ 2010-2020. ພາຍຫຼັງທີ່ມີການຈັດຕັ້ງປະຕິບັດໃນໄລຍະ 5 ປີ ທີ່ຜ່ານມາ 2010-2015 ໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງ ແລະ ຮຽກຮ້ອງ ໃຫ້ມີການຄົ້ນຄວ້າ ແລະ ປັບປຸງຄືນ ບັນດາວິໄສທັດ, ພາລະກິດ, ເປົ້າໝາຍ, ຄາດໝາຍ, ຜົນໄດ້ຮັບ, ແຜນງານ ແລະ ບັນດາມາດຕະການໃນການພັດທະນາວຽກງານສະຖິຕິ ໃຫ້ສອດຄ່ອງກັບໄລຍະເວລາຂອງ ຍຸດທະສາດການພັດທະນາຂອງ ສປປ ລາວ 2016-2025 ແລະ ວິໄສທັດ 2030; ເພື່ອຕິດຕາມ ແລະ ຢັ້ງຢືນຢ່າງຈະແຈ້ງຄວາມຄືບໜ້າ ການປະຕິບັດແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII-IX, ການນຳພາປະເທດຊາດຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ແລະ ເປົ້າໝາຍການພັດທະນາແບບຍືນຍົງ ປີ 2030; ເພື່ອຕອບສະໜອງຂໍ້ມູນຮັບໃຊ້ໃຫ້ແກ່ ການເຊື່ອມໂຍງພາກພື້ນ ແລະ ສາກົນ; ເພື່ອເປັນບ່ອນອີງໃນການລະດົມແຫຼ່ງທຶນ, ທັງຍາດແຍ່ງການສະໜັບສະໜູນ ແລະ ຊ່ວຍເຫຼືອ ຈາກທຸກພາກສ່ວນໃນສັງຄົມທັງພາຍໃນ ແລະ ຕ່າງປະເທດ.

ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ໄດ້ແນໃສ່ການເສີມສ້າງ ແລະ ປັບປຸງພື້ນຖານການພັດທະນາວຽກງານສະຖິຕິ ໃຫ້ມີຄວາມເຂັ້ມແຂງ ທັງດ້ານປະລິມານ ແລະ ຄຸນນະພາບ, ຮັບປະກັນໃຫ້ ລະບົບສະຖິຕິແຫ່ງຊາດ ທຽບທັນກັບມາດຖານສະຖິຕິສາກົນ ທັງສ້າງຄວາມເຊື່ອໝັ້ນຕໍ່ ລະບົບສະຖິຕິແຫ່ງຊາດໃຫ້ແກ່ ພາກລັດ, ບັນດາຄູ່ຮ່ວມພັດທະນາ, ຜູ້ໃຫ້ທຶນ, ພາກສ່ວນເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ.

ພ້ອມນັ້ນ, ກໍ່ເພື່ອຮັບປະກັນການຕອບສະໜອງຂໍ້ມູນສະຖິຕິທາງການ ໃນຂົງເຂດເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຄວາມໝັ້ນຄົງ ໃຫ້ມີເນື້ອໃນຄົບຖ້ວນ ກ້າວໄປສູ່ຄວາມພຽງພໍ, ມີຄຸນນະພາບ, ທັນເວລາ, ໂປ່ງໃສ ແລະ ເຊື່ອຖືໄດ້; ຮັບປະກັນການຜະລິດຂໍ້ມູນສະຖິຕິທາງການໃຫ້ມີປະສິດທິພາບ ໂດຍນຳໃຊ້ລະບົບຂໍ້ມູນຂ່າວສານ ແລະ ວິທະຍາການທີ່ທັນສະໄໝ ແລະ ໃຫ້ທຸກພາກສ່ວນໃນສັງຄົມ ມີສ່ວນຮ່ວມໃນຂະບວນການຜະລິດຂໍ້ມູນສະຖິຕິດ້ວຍຄວາມຮັບຜິດຊອບສູງ.

ຍຸດທະສາດການພັດທະນາ ລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ໄດ້ ກຳນົດເອົາ 5 ຍຸດທະສາດ ເພື່ອການພັດທະນາລະບົບສະຖິຕິແຫ່ງຊາດ, 15 ແຜນງານ ແລະ ບັນດາກິດຈະກຳຕົ້ນຕໍທີ່ກ່ຽວຂ້ອງຄື: ການປັບປຸງດ້ານນິຕິກຳ ແລະ ການຈັດຕັ້ງ (3 ແຜນງານ); ການພັດທະນາໂຄງລ່າງພື້ນຖານດ້ານສະຖິຕິ (2 ແຜນງານ), ການຄຸ້ມຄອງ, ບໍລິຫານ ແລະ ພັດທະນາຂໍ້ມູນສະຖິຕິທາງການ (5 ແຜນງານ); ປັບປຸງ ແລະຮັບປະກັນການເຄື່ອນໄຫວຂອງເຄືອຂ່າຍສະຖິຕິ (3 ແຜນງານ); ການລະດົມ ແລະ ການຄຸ້ມຄອງຊັບພະຍາກອນ (2 ແຜນງານ) ໂດຍແນໃສ່ການປັບປຸງ ແລະ ພັດທະນາລະບົບ ແລະ ວຽກງານສະຖິຕິແຫ່ງຊາດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ.

ເພື່ອຮັບປະກັນໃຫ້ຍຸດທະສາດສະບັບນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ຂໍສະເໜີມາຍັງຜູ້ວາງນະໂຍບາຍ, ຜູ້ວາງແຜນ, ຜູ້ຜະລິດຂໍ້ມູນ, ຜູ້ນຳໃຊ້ຂໍ້ມູນສະຖິຕິ ແລະ ຕະຫຼອດຮອດພໍ່ແມ່ປະຊາຊົນທຸກທົ່ວໜ້າ ຈົ່ງໃຫ້ການຮ່ວມມື ແລະ ສະໜັບສະໜູນຢ່າງຕັ້ງໜ້າ ເຂົ້າໃນວຽກງານສະຖິຕິເພື່ອບັນລຸ ແລະ ໄດ້ຮັບຜົນສຳເລັດຢ່າງສະຫງ່າງາມ.

# ພາກທີ I: ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວຽກງານສະຖິຕິ 2010-2015

## 1. ສະຫຼຸບໂດຍຫຍໍ້ສະພາບການຈັດຕັ້ງປະຕິບັດວຽກງານສະຖິຕິ

### 1.1. ດ້ານນິຕິກຳ ແລະ ການຈັດຕັ້ງ

#### 1.1.1. ດ້ານນິຕິກຳ

1) ສຳເລັດການສ້າງ ກົດໝາຍວ່າດ້ວຍ ສະຖິຕິ ໃນປີ 2010 ແລະ ດຳລັດແນະນຳການຈັດຕັ້ງປະຕິບັດກົດໝາຍ ແລະ ໄດ້ສຳເລັດ ການຈັດຕັ້ງການເຜີຍແຜ່ໃນຂອບເຂດທົ່ວປະເທດ, ພ້ອມກັບການຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ, ໄດ້ຕີລາຄາ ແລະ ປະເມີນ ການຈັດຕັ້ງປະຕິບັດ-ຜັນຂະຫຍາຍ ກົດໝາຍວ່າດ້ວຍ ສະຖິຕິ ສະບັບເລກທີ 03/ສພຊ, ລົງວັນທີ 30 ມິຖຸນາ 2010 ຊຶ່ງເປັນບ່ອນອີງໃຫ້ແກ່ການປັບປຸງກົດໝາຍວ່າດ້ວຍ ສະຖິຕິ ໂດຍຜ່ານຂະບວນການປຶກສາຫາລື ແລະ ປະກອບຄຳເຫັນ ຈາກທຸກພາກສ່ວນ ຢ່າງກວ້າງຂວາງ ເພື່ອນຳສະເໜີ ລັດຖະບານ ແລະ ໄປຜ່ານສະພາແຫ່ງຊາດ ເພື່ອຮັບຮອງໃນປີ 2017.
2) ສຳເລັດການສ້າງຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ 2010-2020 ໃນປີ 2010 ພ້ອມກັນນັ້ນແຕ່ລະຂະແໜງການ ກໍ່ໄດ້ມີການຈັດຕັ້ງຜັນຂະຫຍາຍ ທັງເປັນແຜນງານ ແລະ ໂຄງການ ໃນຂອບເຂດຮັບຜິດຊອບຂອງໃຜລາວ, ໄດ້ດຳເນີນການປະເມີນ ຜົນການຈັດຕັ້ງປະຕິບັດ ໃນໄລຍະ 5 ປີທີ່ຜ່ານມາ (2010-2015) ໂດຍຜ່ານຂະບວນການປະເມີນຕີລາຄາພາຍໃນ ແລະພາຍນອກ.

#### 1.1.2. ການປັບປຸງກົງຈັກການຈັດຕັ້ງ

1) ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ໄດ້ຍົກລະດັບຈາກ ກົມ ຂຶ້ນ ທຽບເທົ່າທະບວງ, ປັບປຸງຈາກ 7 ພະແນກ ຂອງກົມສະຖິຕິໃນເມື່ອກ່ອນ (ປີ 2010) ມາເປັນ 3 ກົມ, 1 ຫ້ອງການ ແລະ ມີ 13 ພະແນກ ຊຶ່ງໄດ້ກຳນົດໄວ້ໃນດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 51/ນຍ, ລົງວັນທີ 25 ເດືອນກຸມພາ ປີ 2011 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສະຖິຕິແຫ່ງຊາດ, ຂໍ້ຕົກລົງຂອງ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ກົມສະຖິຕິເສດຖະກິດ, ກົມສະຖິຕິສັງຄົມ ແລະ ກົມບໍລິການສະຖິຕິ ສະບັບເລກທີ 0703/ຜທ, 0706/ຜທ, 0707/ຜທ, 0708/ຜທ, ລົງວັນທີ 14 ມີນາ ປີ 2012 ຕາມລຳດັບ.
2) ສູນສະຖິຕິປະຈຳແຂວງ, ສູນສະຖິຕິປະຈຳເມືອງ, ຈຸງານສະຖິຕິປະຈຳບ້ານ ໄດ້ຖືກກຳນົດໃນການສ້າງຕັ້ງຕາມຂໍ້ຕົກລົງຂອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເລກທີ 0729/ຜທ ລົງວັນທີ 15 ເດືອນມີນາ ປີ 2012. ໃນພາກປະຕິບັດຕົວຈິງ ສູນສະຖິຕິປະຈຳແຂວງ ໄດ້ສ້າງສຳເລັດທັງໝົດ 17 ແຂວງ ແລະ ນະຄອນຫຼວງວຽງຈັນ, ສ່ວນເມືອງແມ່ນໄດ້ສຳເລັດ 107 ເມືອງຂອງຈຳນວນ 148 ເມືອງ, ສຳລັບຈຸງານສະຖິຕິປະຈຳບ້ານ ແມ່ນຍັງບໍ່ທັນໄດ້ຖືກສ້າງຕັ້ງຂຶ້ນ.
3) ຂະແໜງການ ກໍ່ມີຫຼາຍກະຊວງ ໄດ້ສ້າງສູນສະຖິຕິ ຫຼື ພະແນກສະຖິຕິຂຶ້ນ. ມາຮອດປະຈຸບັນມີສູນສະຖິຕິປະຈຳກະຊວງ ຈຳນວນ 3 ກະຊວງ, ສ່ວນຂັ້ນພະແນກ ມີຈຳນວນ 10 ກະຊວງ; ຂະແໜງສະຖິຕິຢູ່ບັນດາພະແນກການອ້ອມຂ້າງແຂວງ ແລະ ໜ່ວຍງານສະຖິຕິຂອງບັນດາຫ້ອງການອ້ອມຂ້າງເມືອງ ຍັງບໍ່ທັນປະຕິບັດໄດ້ເທົ່າທີ່ຄວນຕາມກົດໝາຍວ່າດ້ວຍສະຖິຕິ.

#### 1.1.3. ບຸກຄະລາກອນ

1) ໃນປີ 2010, ສູນສະຖິຕິແຫ່ງຊາດ ມີພະນັກງານປະມານ 60 ຄົນ ແລະ ປະຈຸບັນມີ 149 ຄົນ. ເມື່ອທຽບກັບຄວາມຕ້ອງການ ແມ່ນຍັງບໍ່ທັນພຽງພໍ ຕາມທີ່ໄດ້ກຳນົດໄວ້ໃນຍຸດທະສາດ (ຕ້ອງແມ່ນ 160 ຄົນ ໃນ ປີ 2015).

2) ສຳລັບ ສູນສະຖິຕິປະຈຳແຂວງ ໃນປີ 2010, ມີພະນັກງານສະເລ່ຍບໍ່ເຖິງ 5 ຄົນ ແຕ່ປະຈຸບັນມີທັງໝົດ 167 ຄົນ (ສະເລ່ຍປະມານ 8-10 ຄົນ); ສຳລັບຂັ້ນເມືອງ ແມ່ນຍັງບໍ່ມີການປ່ຽນແປງຫຼາຍ ຊຶ່ງປະຈຸບັນມີ 284 ຄົນ (ສະເລ່ຍປະມານ 2 ຄົນຕໍ່ເມືອງ) ເຖິງແນວໃດກໍ່ຕາມ ຢູ່ບາງເມືອງ ແມ່ນບໍ່ທັນມີພະນັກງານຮັບຜິດຊອບເລີຍ; ສ່ວນຂັ້ນບ້ານ ແມ່ນຍັງບໍ່ທັນມີພະນັກງານສະຖິຕິປະຈຳບ້ານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ສະຖິຕິ.
3) ກະຊວງ, ອົງການ ແມ່ນມີການເພີ່ມຂຶ້ນ ໃນປີ 2010 ມີຫຼາຍກະຊວງ, ອົງການ ບໍ່ທັນມີພະນັກງານຮັບຜິດຊອບວຽກງານສະຖິຕິ ແຕ່ມາຮອດປະຈຸບັນ ແມ່ນມີພະນັກງານທັງໝົດ 228 ຄົນ ໃນ 18 ກະຊວງ ແລະ 3 ອົງການ.

### 1.2. ການພັດທະນາໂຄງລ່າງພື້ນຖານດ້ານສະຖິຕິ

1) ໄດ້ມີການຄົ້ນຄວ້າກ່ຽວກັບ ຫຼັກມູນສະຖິຕິ ແລະ ນຳໃຊ້ລະບົບລະຫັດສາລະບານການຈັດແບ່ງຕາມຫຼັກການສາກົນ ໂດຍອີງໃສ່ເງື່ອນໄຂຄວາມເປັນຈິງຂອງປະເທດເຮົາ; ພ້ອມນັ້ນ, ກໍ່ມີການຊຸກຍູ້ສົ່ງເສີມໃຫ້ມີການນຳໃຊ້ລະຫັດສາລະບານການຈັດແບ່ງ ແລະ ມາດຕະຖານດັ່ງກ່າວ ເຂົ້າໃນການເກັບກຳ, ສັງລວມ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ. ໄດ້ສຳເລັດການສ້າງ ແລະ ຮຽບຮຽງປຶ້ມຄູ່ມືສິດສອນ ການນຳໃຊ້ສະຖິຕິເຂົ້າໃນວິຊາສະເພາະຈຳນວນ 10 ເຫຼັ້ມ ຮ່ວມກັບ ມະຫາວິທະຍາໄລແຫ່ງຊາດ, ປຶ້ມວັດຈະນານຸກົມສະຖິຕິ, ປຶ້ມບົດຮຽນສະຖິຕິພື້ນຖານ ແລະ ສະຖິຕິນຳໃຊ້, ບົດແນະນຳການຮຽນຮູ້ສະຖິຕິສຳລັບຜູ້ນຳໃຊ້ຂໍ້ມູນ ແລະ ປຶ້ມບົດຮຽນອື່ນໆ ທີ່ກ່ຽວຂ້ອງກັບການຜະລິດຂໍ້ມູນສະຖິຕິ ໃນແຕ່ລະຂະແໜງການ.
2) ໄດ້ສຳເລັດການສ້າງ ແຜນພັດທະນາລະບົບຂໍ້ມູນຂ່າວສານເຕັກໂນໂລຊີ (ໄອທີ) ເພື່ອແນໃສ່ການປັບປຸງການນຳໃຊ້ຄອມພິວເຕີທີ່ທັນສະໄໝ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ວຽກງານສະຖິຕິເຊັ່ນ: ສ້າງລະບົບເກັບຮັກສາຖານຂໍ້ມູນສະຖິຕິ (ເຊີບເວີ), ສ້າງເວັບໄຊ, ລະບົບໂຮມເພດ (Home page) ຂອງສູນສະຖິຕິແຫ່ງຊາດ, ສ້າງລະບົບເຄືອຂ່າຍພາຍໃນ ແລະ ພາຍນອກ ເພື່ອເຊື່ອມໂຍງຂໍ້ມູນສະຖິຕິ ລະຫວ່າງສູນກາງ ແລະ ທ້ອງຖິ່ນ.
3) ນອກນັ້ນ ການຮັກສາຄວາມປອດໄພ, ການບຳລຸງຮັກສາ ແລະ ຍົກລະດັບເຄື່ອງມື ດ້ານຂໍ້ມູນຂ່າວສານເຕັກໂນໂລຊີ ກໍ່ໄດ້ຮັບການປັບປຸງເທື່ອລະກ້າວ, ເຖິງແມ່ນວ່າຍັງມີຄວາມຈຳກັດດ້ານງົບປະມານ ແລະ ຄວາມຊຳນານງານ ຂອງພະນັກງານສະຖິຕິກໍ່ຕາມ.

### 1.3. ການຄຸ້ມຄອງ ແລະພັດທະນາຂໍ້ມູນສະຖິຕິທາງການ

1) ໃນໄລຍະ 2010-2015, ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ແມ່ນດຳເນີນໄປໂດຍຜ່ານ ການເກັບກຳ, ສັງລວມ, ວິໄຈ, ສ້າງບົດລາຍງານ ແລະ ເຜີຍແຜ່ຜົນຜະລິດສະຖິຕິເຊັ່ນ: ປຶ້ມວາລະສານສະຖິຕິປະຈຳປີ, ວາລະສານ 40 ປີ, ສະຖິຕິລາຄາ (ດັດຊະນີລາຄາການຊົມໃຊ້ ແລະ ອັດຕາເງິນເຟີ້) ປະຈຳເດືອນ, ງວດ ແລະ ປີ; ນັບທັງການສຳຫຼວດລາຄາ ເພື່ອສະໜອງຂໍ້ມູນໃຫ້ແກ່ການສົມທຽບຂໍ້ມູນລະຫວ່າງຊາດ, ຄິດໄລ່ ແລະ ຄາດຄະເນລວມຍອດຜະລິດຕະພັນພາຍໃນປະຈຳປີ, ຄາດຄະເນພົນລະເມືອງປະຈຳປີ. ເກັບກຳ ແລະ ສັງລວມຂໍ້ມູນຄວາມທຸກຍາກປະຈຳປີ ໂດຍອີງໃສ່ຂໍ້ມູນສະຖິຕິມາຈາກບ້ານ.
2) ບັນດາກະຊວງ, ອົງການທຽບເທົ່າ ໄດ້ສຳເລັດການສັງລວມລາຍງານ ແລະ ສ້າງປຶ້ມວາລະສານປະຈຳປີຂອງຂະແໜງການຕົນ, ສູນສະຖິຕິປະຈຳແຂວງ, ນະຄອນຫຼວງ ກໍ່ໄດ້ສຳເລັດການເກັບກຳ, ສັງລວມຂໍ້ມູນສະຖິຕິ ເພື່ອລາຍງານໃຫ້ການນຳຂອງຕົນ ຕາມລະບົບສາຍຕັ້ງ ແລະ ສາຍຂວາງ, ແລະ ຄິດໄລ່ຂໍ້ມູນການຂະ

ຫຍາຍຕົວທາງດ້ານເສດຖະກິດລະດັບແຂວງ, ພ້ອມດຽວກັນນັ້ນ ກໍ່ໄດ້ສ້າງປຶ້ມສະຖິຕິປະຈຳປີເພື່ອຮັບໃຊ້ພາຍໃນແຂວງ, ກະຊວງ ແລະ ອົງການ.

3) ສຳເລັດການສຳຫຼວດ, ປຸງແຕ່ງ, ວິໄຈ, ສ້າງບົດລາຍງານ ແລະ ເຜີຍແຜ່ຜົນ ຈາກບັນດາການສຳຫຼວດໃຫຍ່ ແລະ ຕົວແທນຄື: ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດຄັ້ງທີ IV, ປີ 2015; ການສຳຫຼວດສະຖິຕິກະສິກຳທົ່ວປະເທດຄັ້ງທີ II ປີ 2011; ສຳຫຼວດເສດຖະກິດທົ່ວປະເທດຄັ້ງທີ II ປີ 2013; ສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ V ປີ 2012-2013; ການສຳຫຼວດຄົວເຮືອນປະຈຳປີ ເລີ່ມແຕ່ປີ 2011, 2014 ແລະ 2015; ການສຳຫຼວດວິສາຫະກິດປະຈຳປີ 2012-2015, ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ 1 ປີ 2011-2012, ການສຳຫຼວດສະພາບກຳລັງແຮງງານ ແລະ ການນຳໃຊ້ແຮງງານເດັກປີ 2010, ການສຳຫຼວດຄວາມເພິ່ງພໍໃຈຂອງຜູ້ຊົມໃຊ້ຂໍ້ມູນສະຖິຕິທາງການປີ 2014 ແລະ ການສຳຫຼວດອື່ນໆ. ໄດ້ສ້າງຖານຂໍ້ມູນສະຖິຕິລວມ ແລະ ຖານຂໍ້ມູນ ໂດຍນຳໃຊ້ໂປຣແກຣມລາວອິນໂຟ (Laoinfo) ເພື່ອເຜີຍແຜ່ບັນດາຕົວຊີ້ບອກ ກ່ຽວກັບ ເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ ແອວນາດາ (LNADA) ເພື່ອເປັນຖານສຳນວນຂໍ້ມູນບັນດາການສຳຫຼວດ, ດີຊາຍອິນໂຟ (Decide info) ເພື່ອເຜີຍແຜ່ຂໍ້ມູນຮູບແບບແຜນທີ່, ທົດລອງສ້າງສູນຂໍ້ມູນສະຖິຕິພາກໃຕ້, ໄດ້ປະກອບສ່ວນເຂົ້າໃນການສ້າງບົດລາຍງານຄວາມຄືບໜ້າ ຂອງເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ເຫຼັ້ມທີ 3 ປີ 2013 ແລະ ອື່ນໆ.

4) ປັບປຸງລະບົບການເກັບກຳຂໍ້ມູນສະຖິຕິປະຈຳບ້ານ ຕິດພັນກັບສະຖິຕິຄວາມທຸກຍາກ, ສ້າງ ແລະ ວິໄຈຂໍ້ມູນຄວາມທຸກຍາກ ເພື່ອສະໜອງໃຫ້ແກ່ລັດຖະບານໃນແຕ່ລະໄລຍະ.

## 1.4. ການສ້າງຄວາມອາດສາມາດ ແລະການຮ່ວມມື

1) ນັບແຕ່ປີ 2010 ເປັນຕົ້ນມາ, ໄດ້ຈັດກອງປະຊຸມ ການສະໜອງ ແລະ ຄວາມຕ້ອງການຂໍ້ມູນສະຖິຕິທາງການປະຈຳປີທົ່ວປະເທດ ຊຶ່ງເປັນກອງປະຊຸມສະຖິຕິປະຈຳປີ ແລະ ທັງເປັນກອງປະຊຸມ ທີ່ຜູ້ຜະລິດ ແລະຜູ້ນຳໃຊ້ຂໍ້ມູນ ມີການປຶກສາຫາລື ແລະ ວາງແຜນການເຄື່ອນໄຫວວຽກງານສະຖິຕິປະຈຳປີ. ການປະສານງານໄດ້ຮັບການປັບປຸງເທື່ອລະກ້າວ ໂດຍຜ່ານ ກົນໄກການເກັບກຳ, ການລາຍງານຂໍ້ມູນ ແລະ ກອງປະຊຸມປະຈຳປີ ກໍ່ຄື ຜ່ານການຈັດຕັ້ງປະຕິບັດການສຳຫຼວດຕ່າງໆໃນແຕ່ລະໄລຍະ, ພ້ອມກັນນັ້ນ ກໍ່ໄດ້ຈັດກອງປະຊຸມສຳມະນາ ສຳລັບ ຜູ້ບໍລິຫານຂັ້ນສູງຂອງລະບົບສະຖິຕິສາຍຕັ້ງ ເພື່ອເພີ່ມຄວາມອາດສາມາດໃນການຄຸ້ມຄອງບໍລິຫານ ແລະ ການນຳພາໃນການຈັດຕັ້ງປະຕິບັດວຽກງານສະຖິຕິ ໃນແຕ່ລະຂົງເຂດໃຫ້ມີຜົນສຳເລັດ.

2) ພະນັກງານນັບແຕ່ສູນກາງລົງຮອດທ້ອງຖິ່ນຈຳນວນໜຶ່ງ ໄດ້ຍົກລະດັບທາງດ້ານວິຊາສະເພາະ ທາງດ້ານສະຖິຕິ ໄປຄຽງຄູ່ກັນກັບການຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ໂດຍຜ່ານການເຂົ້າຮ່ວມການສຳມະນາ, ຝຶກອົບຮົມ, ທັດສະນະສຶກສາທັງພາຍໃນ ແລະ ຕ່າງປະເທດ.

3) ໄດ້ເຂົ້າຮ່ວມກອງປະຊຸມສຳມະນາດ້ານສະຖິຕິພາຍໃນ ແລະ ລະດັບສາກົນເຊັ່ນ: ກອງປະຊຸມຫົວໜ້າສະຖິຕິ ຂອງບັນດາປະເທດສະມາຊິກອາຊຽນ, ກອງປະຊຸມຄະນະກຳມະທິການດ້ານສະຖິຕິ ຂອງສະຫະປະຊາຊາດກອງປະຊຸມຄະນະກຳມະທິການດ້ານສະຖິຕິ ຂອງອາຊີປາຊີຟິກ ແລະ ກອງປະຊຸມສາກົນອື່ນໆ.

4) ໄດ້ຮ່ວມມືກັບສາກົນ, ຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ວິຊາການ, ພັດທະນາ ແລະ ຍົກລະດັບຄວາມອາດສາມາດຂອງລະບົບສະຖິຕິແຫ່ງຊາດ. ການຮ່ວມມື ແມ່ນໄດ້ຈັດຕັ້ງປະຕິບັດໃນຫຼາຍຮູບແບບເຊັ່ນ: ໂຄງການສ້າງຄວາມອາດສາມາດດ້ານສະຖິຕິຈາກ ທະນາຄານໂລກ, ການສະໜັບສະໜູນຈາກອົງການສະຫະປະຊາຊາດ ເປັນຕົ້ນແມ່ນ ອົງການສະຫະປະຊາຊາດເພື່ອການພັດທະນາ, ອົງການສະຫະປະຊາຊາດສຳລັບປະຊາກອນ, ອົງການສະຫະປະຊາຊາດສຳລັບເດັກ, ອົງການອະນາໄມໂລກ, ອົງການ

ອາຫານ ແລະ ການກະເສດ, ທະນາຄານພັດທະນາອາຊີ, ບັນດາສະຖາບັນການເງິນບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນອື່ນໆ.

### 1.5. ງົບປະມານ

ພາຍຫຼັງ ກົດໝາຍວ່າດ້ວຍ ສະຖິຕິ ແລະ ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ໄດ້ຖືກຮັບຮອງຈາກ ສະພາແຫ່ງຊາດ ແລະ ລັດຖະບານ, ການຈັດຕັ້ງປະຕິບັດວຽກງານສະຖິຕິກໍ່ໄດ້ຮັບການປັບປຸງເປັນລະບົບເລື້ອຍມາ; ການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແຕ່ສູນກາງຮອດທ້ອງຖິ່ນ ໄດ້ເປັນຫົວໜ່ວຍການເງິນຂັ້ນໜຶ່ງ, ໄດ້ຮັບງົບປະມານເພີ່ມຂຶ້ນແຕ່ລະປີ ເພື່ອຈັດຕັ້ງປະຕິບັດວຽກງານສະຖິຕິເວົ້າລວມ, ເວົ້າສະເພາະແມ່ນການສຳຫຼວດຕ່າງໆ ແມ່ນຮັບງົບປະມານຫຼາຍສົມຄວນ ຊຶ່ງເວົ້າໄດ້ວ່າສາມາດເປັນເຈົ້າການໃນການດຳເນີນການສຳຫຼວດໃຫ່ຍ ແລະ ການສຳຫຼວດຕົວແທນ. ງົບປະມານສະເພາະຂອງສູນສະຖິຕິແຫ່ງຊາດໄລຍະ 5 ປີ 2010-2015 ທີ່ໄດ້ຮັບທັງໝົດແມ່ນ 264,621 ລ້ານກີບ; ໃນນັ້ນ ສຳລັບການສະໜອງແກ່ການປັບປຸງ ແລະ ຜະລິດຂໍ້ມູນສະຖິຕິ ຈຳນວນ 88,204 ລ້ານກີບ, ສະເລ່ຍຕໍ່ປີແມ່ນ 17,641 ລ້ານກີບ. ນອກຈາກນັ້ນ, ການຊ່ວຍເຫຼືອດ້ານວິຊາການ, ທຶນຮອນ ແລະ ວັດຖຸ ຈາກຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ຜູ້ໃຫ້ທຶນ ແລະ ປະເທດເພື່ອນມິດ ແມ່ນປະມານ 56,133 ລ້ານໂດລາສະຫະລັດ.

## 2. ຕີລາຄາລວມ

### 2.1. ຜົນສຳເລັດພົ້ນເດັ່ນຈາກການຈັດຕັ້ງປະຕິບັດຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ

ຈາກການຈັດຕັ້ງປະຕິບັດບັນດາກົດຈະກຳຕົ້ນຕໍທີ່ກ່າວມາຂ້າງເທິງນັ້ນ, ສາມາດຍາດໄດ້ບັນດາຜົນສຳເລັດທີ່ພົ້ນເດັ່ນດັ່ງນີ້:

1) ບົດບາດ ແລະ ຄວາມຮັບຮູ້ ກ່ຽວກັບ ສະຖິຕິ ໃນສັງຄົມໄດ້ເພີ່ມຂຶ້ນ ໂດຍຜ່ານຂະບວນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍ ສະຖິຕິ ແລະ ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ເຮັດໃຫ້ສູນສະຖິຕິແຫ່ງຊາດໄດ້ຮັບການຍົກຖານະຂຶ້ນທຽບເທົ່າທະບວງ ແລະ ມີງົບປະມານຂັ້ນໜຶ່ງຈາກງົບປະມານແຫ່ງລັດ;
2) ການປະສານງານໃນລະບົບສະຖິຕິແຫ່ງຊາດ ໄດ້ມີຄວາມຄືບໜ້າ ແລະ ສືບຕໍ່ປັບປຸງລະຫວ່າງ ຜູ້ຜະລິດ ແລະ ຜູ້ນຳໃຊ້ຂໍ້ມູນສະຖິຕິ;
3) ໄດ້ມີການຝຶກອົບຮົມສະຖິຕິພື້ນຖານ, ການນຳໃຊ້ ແລະ ສະຖິຕິສະເພາະຂະແໜງການວິຊາສະເພາະໃຫ້ພະນັກງານສະຖິຕິສາຍຕັ້ງ ແລະສາຍຂວາງ, ເຜີຍແຜ່ຂໍ້ມູນສະຖິຕິທາງການທັງພາຍໃນ ແລະຕ່າງປະເທດ;
4) ພະນັກງານສະຖິຕິ ໄດ້ມີຄວາມຊຳນານງານຂຶ້ນ ສາມາດເຊື່ອມໂຍງໃນການປະຕິບັດວຽກງານສະຖິຕິ ແລະ ມີຄວາມສາມາດໃນການດຳເນີນໜ້າທີ່ຕ່າງໆ ຢູ່ໃນເວທີສາກົນ ແລະ ຈັດກອງປະຊຸມລະດັບພາກພື້ນໄດ້;
5) ສາມາດຜະລິດຂໍ້ມູນສະຖິຕິທາງການ (ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຄວາມທຸກຍາກ) ໂດຍພື້ນຖານ ແລະ ສ້າງຖານຂໍ້ມູນສະຖິຕິລະດັບຊາດ ເພື່ອຮັບໃຊ້ການຕີລາຄາການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ 7 (2011-2015) ແລະ ການວາງແຜນດັ່ງກ່າວ ໂດຍສະເພາະແມ່ນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ບົດລາຍງານຄວາມຄືບໜ້າ ໃນການບັນລຸເປົ້າໝາຍສະຫັດສະຫວັດ ດ້ານການພັດທະນາ ປີ 2015 ແລະ ການຕິດຕາມປະເມີນຜົນແຜນງານແຫ່ງຊາດອື່ນໆ, ອັນພົ້ນເດັ່ນແມ່ນມີຜົນສຳເລັດ ໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສຄັ້ງທີ IV ປີ 2015 ຊຶ່ງ ລັດຖະບານ ໄດ້ເປັນເຈົ້າໃຫ້ການສະໜັບສະໜູນງົບປະມານ ກວມຫຼາຍກວ່າເຄິ່ງໜຶ່ງຂອງມູນຄ່າການສຳຫຼວດ;
6) ການຍາດແຍ່ງການຊ່ວຍເຫຼືອຈາກສາກົນ ແມ່ນໄດ້ດີພໍສົມຄວນ ໃນໄລຍະ 5 ປີ ຜ່ານມາ, ອົງການຈັດຕັ້ງສາກົນ, ຜູ້ໃຫ້ທຶນ ແລະ ປະເທດເພື່ອນມິດ ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ, ທຶນຮອນ ແລະ ວັດຖຸ

ໃນຈັດຕັ້ງປະຕິບັດກິດຈະກຳທີ່ສຳຄັນໃນຂົງເຂດວຽກງານສະຖິຕິ ໃຫ້ສຳເລັດຕາມ ຈຸດປະສົງ ແລະ ລະດັບຄາດໝາຍ.

## 2.2. ຈຸດດີ ແລະ ສາເຫດ

1) ມີການຊີ້ນຳ-ນຳພາຂອງ ລັດຖະບານ, ຄະນະນຳຂອງກະຊວງແຜນການ ແລະ ການລົງທຶນ, ແລະ ຄະນະນຳຂອງສູນສະຖິຕິແຫ່ງຊາດ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງວຽກງານສະຖິຕິແຫ່ງຊາດ ເຮັດໃຫ້ ສູນສະຖິຕິແຫ່ງຊາດ ກາຍເປັນໃຈກາງໃນການເກັບກຳ, ສັງລວມ, ວິໄຈ ແລະ ເຜີຍແຜ່ຂໍ້ມູນສະຖິຕິທາງການ ເພື່ອສະໜອງຂໍ້ມູນສະຖິຕິດັ່ງກ່າວໃຫ້ແກ່ ການວາງແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ແລະ ຜູ້ຊົມໃຊ້ທົ່ວໄປທັງພາຍໃນ ແລະ ຕ່າງປະເທດ;
2) ກົດໝາຍວ່າດ້ວຍ ສະຖິຕິ ແລະ ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ໄດ້ເປັນບ່ອນອີງໃນການກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ໃນແຕ່ລະຂັ້ນ ບວກໃສ່ປະສົບປະການໃນການດຳເນີນການຈັດຕັ້ງປະຕິບັດ ແລະ ເກັບກຳຂໍ້ມູນ ຂອງພະນັກງານໃນລະບົບສະຖິຕິແຫ່ງຊາດ ຈຶ່ງເຮັດໃຫ້ວຽກງານສະຖິຕິ ມີຜົນສຳເລັດ; ໄດ້ມີການສ້າງໜ່ວຍງານທີ່ຮັບຜິດຊອບວຽກສະຖິຕິຂຶ້ນຢູ່ຂະແໜງການຕ່າງໆ ເຖິງແມ່ນວ່າຈະມີຂໍ້ຈຳກັດທາງດ້ານຈຳນວນ ແລະ ຂີດຄວາມອາດສາມາດ ກໍ່ຕາມ. ກົດໝາຍວ່າດ້ວຍ ສະຖິຕິ ໄດ້ຮັບການປັບປຸງ ແລະ ຄາດວ່າຈະໄດ້ນຳໃຊ້ໃນປີ 2017;
3) ພະນັກງານ ແລະ ບຸກຄະລາກອນ ມີຄວາມຕັດສິນໃຈ ແລະ ຄວາມຮັບຜິດຊອບສູງ, ມີຄວາມຊຳນານງານ ແລະ ມີຄວາມຮູ້ຄວາມສາມາດ ໃນລະດັບທີ່ຮອງຮັບໄດ້ຕໍ່ຄຸນນະພາບຂອງວຽກງານ; ພະນັກງານ ແລະ ບຸກຄະລາກອນ ມີຄວາມສົມດຸນລະຫວ່າງພະນັກງານຍິງ ແລະ ຊາຍ; ພະນັກງານໜຸ່ມນ້ອຍສາມາດຮຽນຮູ້ໄດ້ຢ່າງວ່ອງໄວ;
4) ມີຫຼາຍໜ່ວຍງານວິຊາການໄດ້ສ້າງຕັ້ງຂຶ້ນ ເພື່ອສະດວກໃນການປະສານງານ ແລະ ເຮັດວຽກລົງສະເພາະດ້ານໃນການປັບປຸງຄຸນນະພາບສະຖິຕິລະຫວ່າງລະຫວ່າງສູນສະຖິຕິແຫ່ງຊາດ ແລະ ກະຊວງ, ອົງການ;
5) ສາເຫດທີ່ພາໃຫ້ມີຈຸດດີ (1) ພັກ ແລະ ລັດຖະບານ ເວົ້າລວມ, ເວົ້າສະເພາະແມ່ນ ຄະນະນຳຂອງກະຊວງແຜນການ ແລະ ການລົງທຶນ; ແລະ ຄະນະນຳສູນສະຖິຕິແຫ່ງຊາດ ໄດ້ເຫັນຄວາມສຳຄັນຂອງວຽກງານສະຖິຕິ; (2) ມີການປະກອບສ່ວນ ຂອງປະຊາຊົນບັນດາເຜົ່າ, ຫົວໜ່ວຍທຸລະກິດ ແລະ ຫ້າງຮ້ານໃນເຂດຕົວເມືອງ ແລະ ຊົນນະບົດ ໃນການຕອບສະໜອງຂໍ້ມູນຢ່າງຈິງໃຈ ຕໍ່ຂະບວນການເກັບກຳຂໍ້ມູນການສຳຫຼວດດ້ານເສດຖະກິດ ແລະ ສັງຄົມ ບໍ່ວ່າຈະເປັນການສຳຫຼວດໃຫ່ຍ (ໂດຍສະເພາະການສຳຫຼວດພົນລະເມືອງ) ແລະ ການສຳຫຼວດແບບຕົວແທນ; (3) ຍ້ອນຜູ້ຜະລິດ ແລະ ນຳໃຊ້ຂໍ້ມູນສະຖິຕິໃນສັງຄົມມີຄວາມຮັບຮູ້ໄດ້ໂດຍພື້ນຖານ ກ່ຽວກັບ ບົດບາດຂອງສະຖິຕິຕໍ່ການເຊື່ອມໂຍງກັບສາກົນ ແລະ ບັນດາຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ກໍ່ມີຄວາມສົນໃຈ, ໃຫ້ຄວາມສຳຄັນ ແລະ ສະໜັບສະໜູນວຽກງານສະຖິຕິ.

## 2.3. ຂໍ້ຄົງຄ້າງ ແລະ ສາເຫດ

❖ **ຂໍ້ຄົງຄ້າງ**

ຜ່ານຈາກການຈັດຕັ້ງປະຕິບັດຍຸດທະສາດ ໃນໄລຍະ 2010-2015 ທີ່ຜ່ານມາ ມີຂໍ້ຄົງຄ້າງ ດັ່ງນີ້:

1) ຍຸດທະສາດການພັດທະນາ ລະບົບສະຖິຕິແຫ່ງຊາດ ຍັງບໍ່ທັນໄດ້ເຜີຍແຜ່ ແລະ ນຳໄປຈັດຕັ້ງຜັນຂະຫຍາຍຢ່າງກວ້າງຂວາງ ເຮັດໃຫ້ຄວາມຮັບຮູ້ ແລະ ຄວາມເຂົ້າໃຈຕໍ່ວຽກງານສະຖິຕິ ຍັງບໍ່ທັນກວ້າງຂວາງເທົ່າທີ່ຄວນ; ບໍ່ມີບົດແນະນຳລະອຽດ ໃນການຈັດຕັ້ງຜັນຂະຫຍາຍຕົວຈິງ, ບາງຂະແໜງການກໍ່ຍັງບໍ່ທັນມີແຜນດຳເນີນງານ ໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດຢ່າງຈະແຈ້ງ;

2) ການປັບປຸງການຈັດຕັ້ງລະບົບສະຖິຕິແຫ່ງຊາດ ຕາມການຈັດຕັ້ງສະຖິຕິລະບົບສາຍຕັ້ງ ຍັງບໍ່ທັນສຳເລັດ ໂດຍສະເພາະແມ່ນ ຂັ້ນເມືອງ, ສະຖິຕິຂັ້ນບ້ານ ແມ່ນບໍ່ສາມາດເຮັດໄດ້; ການຈັດຕັ້ງສະຖິຕິລະບົບສາຍຂວາງ, ແລະ ສູນສະຖິຕິແຂວງ ກໍ່ຍັງບໍ່ທັນສາມາດສ້າງຕັ້ງຂະແໜງສະຖິຕິໄດ້ທັງໝົດ;
3) ຄວາມຮູ້ຄວາມສາມາດຂອງພະນັກງານ ບໍ່ພຽງພໍຕາມຄວາມຕ້ອງການ ຂອງລະບົບສະຖິຕິແຫ່ງຊາດ; ຖ້າທຽບໃສ່ຫຼາຍປະເທດ ແລະ ຄວາມຕ້ອງການ ຂອງວຽກງານສະຖິຕິ ໃນສັງຄົມໄລຍະໃໝ່ເຫັນວ່າ ຈຳນວນພະນັກງານ ທີ່ເຮັດວຽກສະຖິຕິມີຈຳນວນໜ້ອຍ ໂດຍສະເພາະຢູ່ຂັ້ນເມືອງ ແລະ ບ້ານ ແມ່ນຍັງບໍ່ມີຜູ້ຮັບຜິດຊອບຢ່າງຈະແຈ້ງ;
4) ການນຳໃຊ້ເທັກໂນໂລຊີໃໝ່ເຂົ້າໃນວຽກງານສະຖິຕິໃຫ້ທັນການ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານຍັງຈຳກັດ ເນື່ອງຈາກຄວາມອາດສາມາດ ແລະ ທຶນຮອນບໍ່ພຽງພໍ;
5) ການຕອບສະໜອງງົບປະມານໃນການຈັດຕັ້ງປະຕິບັດ ກິດຈະກຳ, ການຈັດຊື້ເຄື່ອງມືອຸປະກອນ, ພາຫະນະຮັບໃຊ້ ແມ່ນຍັງມີຈຳກັດ ແລະ ບໍ່ທັນພຽງພໍກັບຄວາມຕ້ອງການຕົວຈິງ;
6) ການຜະລິດຂໍ້ມູນສະຖິຕິ ແລະ ການລາຍງານ ຍັງບໍ່ທັນຄົບຖ້ວນ ຊຶ່ງສະແດງອອກດັ່ງນີ້:
   - ການນຳໃຊ້ບັນດາຫຼັກການ, ມາດຕະຖານ ແລະ ລະບອບວິທີວິທະຍາດ້ານສະຖິຕິ ລວມທັງການນຳໃຊ້ລະບົບລະຫັດສາລະບານການຈັດແບ່ງ ເຂົ້າໃນການຜະລິດສະຖິຕິ ຍັງເຮັດບໍ່ທັນໄດ້ຄົບຖ້ວນຕາມມາດຖານສາກົນ;
   - ການຂຶ້ນທະບຽນການເກີດ-ການຕາຍ ຍັງບໍ່ທັນໄດ້ແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ ລະຫວ່າງສູນສະຖິຕິແຫ່ງຊາດ ກັບຂະແໜງການກ່ຽວຂ້ອງ ຊຶ່ງໄລຍະຜ່ານມາ ການຈັດຕັ້ງປະຕິບັດ ຍັງບໍ່ທັນເປັນລະບົບ ແລະ ຕໍ່ເນື່ອງ; ການຂຶ້ນທະບຽນຫົວໜ່ວຍທຸລະກິດ ແລະ ຫ້າງຮ້ານ ແມ່ນບໍ່ທັນໄດ້ມີກົນໄກດຳເນີນງານຢ່າງເປັນລະບົບ, ການປັບປຸງໃຫ້ທັນກັບສະພາບ ແລະ ຍັງບໍ່ມີຄວາມເປັນເອກະພາບກັນ;
   - ການຜະລິດສະຖິຕິ ໂດຍສະເພາະແມ່ນ ບັນດາຕົວຊີ້ບອກຕົ້ນຕໍ ຍັງບໍ່ທັນຄົບຖ້ວນ ເຊັ່ນ: ລາຍໄດ້ແຫ່ງຊາດຕົວຈິງ, ສະຖິຕິລາຄາ ຍັງບໍ່ທັນສາມາດຄິດໄລ່ ດັດຊະນີລາຄາຜູ້ຜະລິດ ໃນທຸກຂະແໜງການໄດ້, ດັດຊະນີນຳເຂົ້າ ແລະ ສົ່ງອອກ, ດັດຊະນີລາຄາຂາຍຍົກ-ຂາຍຍ່ອຍ; ສະຖິຕິຄວາມທຸກຍາກສາມາດຕີລາຄາໄດ້ໃນໄລຍະ 5 ປີ ເທົ່ານັ້ນ ໃນລະດັບຊາດ ແລະ ລະດັບແຂວງ ການຕິດຕາມປະຈຳປີຍັງບໍ່ທັນຕໍ່ເນື່ອງ ແລະ ມີພື້ນຖານວິທີວິທະຍາຢ່າງຈະແຈ້ງ ແລະ ເປັນເອກະພາບ;
   - ການລາຍງານສ່ວນໃຫຍ່ ແມ່ນການລາຍງານປະຈຳປີ, ຂາດການລາຍງານປະຈຳໄຕມາດ ແລະ ປະຈຳເດືອນ; ເອກະສານສຳນວນຂ່າວສານຂອງຂໍ້ມູນ ຍັງບໍ່ທັນຄົບຖ້ວນ. ສປປ ລາວ ເປັນປະເທດດຽວໃນບັນດາປະເທດສະມາຊິກອາຊຽນ ທີ່ຍັງບໍ່ທັນມີລະບົບການເຜີຍແຜ່ຂໍ້ມູນຂ່າວສານສະຖິຕິ ຕາມຂອບການເຜີຍແຜ່ຂໍ້ມູນທົ່ວໄປຂອງສາກົນ;
   - ການປະສານລະຫວ່າງການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ຢູ່ຂັ້ນທ້ອງຖິ່ນ ແມ່ນຍັງຈັດຕັ້ງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ; ການລາຍງານສ່ວນໃຫຍ່ ແມ່ນລາຍງານໃຫ້ສາຍຕັ້ງຂອງຕົນທີ່ຂຶ້ນກັບ, ສ່ວນການລາຍງານໃຫ້ການຈັດຕັ້ງສະຖິຕິລະບົບສາຍຂວາງ ແມ່ນຍັງບໍ່ທັນເປັນລະບົບຕໍ່ເນື່ອງເຮັດໃຫ້ຂໍ້ມູນບໍ່ມີຄວາມເປັນເອກະພາບ.

❖ **ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ ດັ່ງນີ້:**

1) ມີຄວາມເຂົ້າໃຈເຖິງຄວາມໝາຍ ແລະ ຄວາມສຳຄັນຂອງວຽກງານສະຖິຕິ ແຕ່ຂາດຄວາມຮັບຜິດຊອບ, ການນຳໄປຜັນຂະຫຍາຍໃນການຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ ຍັງບໍ່ທັນເລິກຊຶ້ງ ແລະ ບໍ່ທັນຖືກ

ຈັດເປັນວຽກງານບູລິມະສິດ ຊຶ່ງສະແດງອອກໃນການຈັດສັນງົບປະມານ ແລະ ຊັບຊ້ອນພະນັກງານ ແມ່ນບໍ່ພຽງພໍ ເພື່ອຕອບສະໜອງໄດ້ຕາມຄວາມຕ້ອງການ ດ້ານສະຖິຕິຂອງສັງຄົມໃນໄລຍະໃໝ່;

2) ລະບົບການຈັດຕັ້ງທົ່ວລະບົບສະຖິຕິ ຍັງບໍ່ທັນສຳເລັດ ໂດຍສະເພາະຢູ່ຂັ້ນເມືອງ ແລະ ຂະແໜງການສາຍຂວາງ ຊຶ່ງຫຼາຍພາກສ່ວນຍັງບໍ່ທັນໄດ້ສ້າງຕັ້ງຂຶ້ນ; ບຸກຄະລາກອນ ຍັງຈຳກັດທາງດ້ານຈຳນວນ ບໍ່ໄດ້ຕາມໂກຕາທີ່ກຳນົດໄວ້, ດ້ານຄວາມຮູ້ຄວາມສາມາດ ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ ທີ່ຮັບຜິດຊອບໂດຍກົງໃນການເກັບກຳຂໍ້ມູນ ລວມທັງການບໍລິຫານຄຸ້ມຄອງວຽກງານສະຖິຕິ ໃນລະບົບສະຖິຕິແຫ່ງຊາດ ຍັງບໍ່ມີປະສິດທິຜົນ ແລະ ປະສິດທິພາບເທົ່າທີ່ຄວນ;
3) ກົນໄກປະສານງານຍັງບໍ່ທັນເປັນລະບົບ ແລະ ດຳເນີນຢ່າງຕໍ່ເນື່ອງການເຮັດວຽກກະແຈກກະຈາຍ ແລະ ບໍ່ມີຄວາມເປັນເອກະພາບທາງດ້ານວິຊາການຢ່າງເລິກເຊິ່ງ ຢູ່ໃນບາງຂົງເຂດ;
4) ງົບປະມານໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆໃນທົ່ວລະບົບສະຖິຕິ ແມ່ນຍັງມີຈຳກັດ ໂດຍສະເພາະແມ່ນ ການລະດົມແຫຼ່ງທຶນທັງພາຍໃນ ແລະ ຕ່າງປະເທດ ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ດີ, ຂາດແຜນງານ/ແຜນກິດຈະກຳທີ່ຊັດເຈນ ລວມທັງຄວາມເຂົ້າໃຈຢ່າງເລິກເຊິ່ງ ຕໍ່ກັບນະໂຍບາຍ ທາງດ້ານການຊ່ວຍເຫຼືອ ແລະ ຂະບວນການດຳເນີນຂອງຜູ້ໃຫ້ທຶນ.

## 2.4. ຖອດຖອນບົດຮຽນ

1) ຄວນມີການປັບປຸງ ແລະ ການຜັນຂະຫຍາຍ ກົດໝາຍວ່າດ້ວຍ ສະຖິຕິ; ເພີ່ມທະວີຄວາມເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ ຂອງພາກສ່ວນຕ່າງໆ ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ສະຖິຕິ, ດຳລັດແນະນຳປະຕິບັດ ກົດໝາຍວ່າດ້ວຍ ສະຖິຕິ, ກົດລະບຽບ ແລະ ຫຼັກການຕ່າງໆຢ່າງເຂັ້ມງວດ. ການສ້າງ ແລະ ປັບປຸງລະບົບລາຍງານ ໃຫ້ເປັນລະບົບທີ່ດຳເນີນເປັນປະຈຳ ດ້ວຍຄວາມຕື່ນຕົວ ແລະ ປະກອບສ່ວນຢ່າງຕັ້ງໜ້າ;
2) ປັບປຸງ ແລະ ຮັບຮອງ ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ໃນແຕ່ລະໄລຍະ ແມ່ນຄວາມຈຳເປັນຢ່າງພາວະວິໄສ. ສະນັ້ນ, ເມື່ອລັດຖະບານຮັບຮອງເອົາແລ້ວ ຕ້ອງດຳເນີນການຜັນຂະຫຍາຍເຂົ້າໃນວຽກງານຕົວຈິງເພື່ອຮັບໃຊ້ໃຫ້ແກ່ວຽກງານຂອງພັກ-ລັດ;
3) ເພີ່ມທະວີ ແລະ ຍົກສູງບົດບາດອົງການທີ່ກ່ຽວຂ້ອງຢູ່ໃນແຕ່ລະຂັ້ນ ເຊັ່ນ: ຂັ້ນກົມ, ຂັ້ນພະແນກ, ຂັ້ນຂະແໜງ ແລະ ຂັ້ນໜ່ວຍງານສະຖິຕິ ຂອງລະບົບສາຍຕັ້ງ ແລະສາຍຂວາງ ໃຫ້ເຂັ້ມແຂງ. ການສ້າງຕັ້ງ ແລະ ພັດທະນາໜ່ວຍງານສະຖິຕິພື້ນຖານໃນບັນດາຂະແໜງການ. ປັບປຸງ, ສ້າງລະບົບ ແລະ ກົນໄກປະສານງານຂອງລະບົບສະຖິຕິແຫ່ງຊາດ ໂດຍເນັ້ນໃສ່ ການປັບປຸງການຈັດຕັ້ງ, ປັບປຸງສະພາບແວດລ້ອມ, ສິ່ງອຳນວຍຄວາມສະດວກ ແລະ ປະກອບບຸກຄະລາກອນ ໃນແຕ່ລະຂັ້ນໃຫ້ພຽງພໍ ໂດຍສະເພາະແມ່ນ ສະຖິຕິຢູ່ຂັ້ນເມືອງ;
4) ເພີ່ມທະວີການພັດທະນາ, ຊຸກຍູ້ສົ່ງເສີມຄວາມເຂົ້າໃຈ ກ່ຽວກັບ ຄວາມສຳຄັນ, ບູລິມະສິດຈຳເປັນ ຂອງຂະບວນການຜະລິດ ແລະ ການນຳໃຊ້ຂໍ້ມູນສະຖິຕິທາງການ ຊຶ່ງເກັບກຳຈາກຫຼາຍພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ;
5) ພັດທະນາລະບົບຂໍ້ມູນຂ່າວສານເທັກໂນໂລຊີໄປສູ່ທັນສະໄໝເທື່ອລະກ້າວ, ພື້ນຖານໂຄງລ່າງດ້ານສະຖິຕິ, ເພີ່ມທະວີການເຜີຍແຜ່ໂຄສະນາຜົນຜະລິດສະຖິຕິໃຫ້ກວ້າງຂວາງ ແລະ ສົ່ງເສີມການນຳໃຊ້ຂໍ້ມູນ ຢ່າງຖືກຕ້ອງຕາມວິຊາການສະຖິຕິ ແລະ ການເຂົ້າເຖິງຂໍ້ມູນໄດ້ງ່າຍ;
6) ເພີ່ມທະວີ ແລະ ສົ່ງເສີມການຄົ້ນຄວ້າ ການນຳໃຊ້ລະບົບຂໍ້ມູນຂ່າວສານເຕັກໂນໂລຊີ ເຂົ້າຊ່ວຍໃນການຜະລິດສະຖິຕິ, ການແລກປ່ຽນ ກໍ່ຄືການເຜີຍແຜ່ໃຫ້ຫຼາຍຂຶ້ນ ເພື່ອຫຼຸດຜ່ອນຈຳນວນພະນັກງານ ປະຕິບັດ

ຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການປະຢັດມັດທະຍັດ ເພື່ອເພີ່ມປະສິດທິພາບ ແລະປະສິດທິຜົນ;

7) ເປັນເຈົ້າການໃນການຍາດແຍ່ງການຊ່ວຍເຫຼືອ, ການລະດົມແຫຼ່ງທຶນທັງພາຍໃນ ແລະ ພາຍນອກ ໃຫ້ພຽງພໍເພື່ອຕອບສະໜອງງົບປະມານໃນການເຄື່ອນໄຫວວຽກງານສະຖິຕິ ໂດຍເລີ່ມຈາກທ້ອງຖິ່ນຮອດສູນກາງ. ໃຫ້ມີ ຍຸດທະຍາດການລະດົມແຫຼ່ງທຶນ, ແຜນວຽກ ທີ່ຈະແຈ້ງ ຊັດເຈນ ສອດຄ່ອງ ຕາມກິດຈະກຳລວມ ແລະ ຕາມກອບການຮ່ວມມືທັງສອງຝ່າຍ ແລະ ຫຼາຍຝ່າຍຂອງຜູ້ໃຫ້ທຶນແກ່ ສປປ ລາວ;
8) ການຮ່ວມມືສາກົນຢ່າງກວ້າງຂວາງ ແລະ ເລິກເຊິ່ງໃນວຽກງານສະຖິຕິ ທາງດ້ານລະບອບວິທີວິທະຍາ, ຫຼັກການ ແລະ ມາດຖານສາກົນ ເພື່ອເຊື່ອມໂຍງເຂົ້າໃນຂົງເຂດ ແລະ ພາກພື້ນ ຕາມແນວທາງນະໂຍບາຍ ແລະ ແຜນການພັດທະນາທີ່ຍືນຍົງ ຂອງພັກ ແລະ ລັດຖະບານ.

# ພາກທີ II: ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດຮອດ ປີ 2030

## 1. ວິໄສທັດ ແລະພາລະກິດ

### 1.1. ວິໄສທັດ

ເພື່ອເຮັດໃຫ້ການພັດທະນາວຽກງານສະຖິຕິ ມີຄວາມສອດຄ່ອງກັບການພັດທະນາໃນໄລຍະໃໝ່, ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດຮອດປີ 2030 ໄດ້ກຳນົດວິໄສທັດຄື:

- ໃນປີ 2020: ເສີມສ້າງປະຖົມປັດໄຈທີ່ແໜ້ນໜາໃຫ້ແກ່ ການພັດທະນາລະບົບສະຖິຕິແຫ່ງຊາດ ໃຫ້ສາມາດເຊື່ອມໂຍງເຂົ້າກັບ ລະບົບສະຖິຕິ ໃນຂົງເຂດ, ພາກພື້ນ ແລະ ສາກົນ;
- ໃນປີ 2025: ເພີ່ມທະວີການຜະລິດຂໍ້ມູນຂ່າວສານສະຖິຕິທາງການ ທີ່ມີຄຸນນະພາບໃນທຸກຂົງເຂດ ຕາມຫຼັກວິທະຍາສາດສະຖິຕິ ເພື່ອຮັບປະກັນໃຫ້ແກ່ ການສະໜອງຂໍ້ມູນ ແລະ ຕອບສະໜອງໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ;
- ໃນປີ 2030: ຮັບປະກັນລະບົບການເຜີຍແຜ່ ແລະ ລະບົບການແລກປ່ຽນຂໍ້ມູນສະຖິຕິທາງການທີ່ມີຄຸນນະພາບສູງ, ປະສິດທິພາບ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາ ເພື່ອສະໜອງໄດ້ຕາມຄວາມຕ້ອງການຂອງຜູ້ຊົມໃຊ້ຂໍ້ມູນ.

### 1.2. ພາລະກິດ

ພາລະກິດຂອງ ລະບົບສະຖິຕິແຫ່ງຊາດ ແມ່ນການສ້າງລະບົບສະຖິຕິຂອງຊາດໃຫ້ເຂັ້ມແຂງ, ສາມາດຜະລິດສະຖິຕິທາງການທີ່ຄົບຖ້ວນ, ຮັບປະກັນຄຸນນະພາບຕາມມາດຖານສາກົນ, ເປັນລະບົບຂໍ້ມູນທີ່ມີຄວາມສອດຄ່ອງ ແລະ ເປັນເອກະພາບສູງ, ສ່ອງແສງຄວາມເປັນຈິງ ແລະ ຮັບໃຊ້ໄດ້ທຸກຂົງເຂດ, ຮັບປະກັນໃຫ້ທຸກຄົນທີ່ອາໄສ ແລະ ເຄື່ອນໄຫວຢູ່ພື້ນແຜ່ນດິນລາວ ຖືກຈົດນັບເຂົ້າໃນຖານຂໍ້ມູນ ໂດຍຜ່ານລະບົບ ແລະ ຂະບວນການເກັບກຳຂໍ້ມູນ ທັງການສຳຫຼວດ ແລະ ລະບົບການລາຍງານແບບບໍລິຫານ ໃນແຕ່ລະໄລຍະ ດັ່ງຄຳຂວັນທີ່ວ່າ “ທຸກຄົນຕ້ອງຖືກຈົດນັບ” ແລະ “ບໍ່ຖິ້ມປະໃຜຜູ້ໜຶ່ງໄວ້ເບື້ອງຫຼັງ”.

## 2. ເປົ້າໝາຍ ແລະ ຄາດໝາຍສູ້ຊົນ

### 2.1. ເປົ້າໝາຍ

1) ພັດທະນາລະບົບສະຖິຕິແຫ່ງຊາດ ເພື່ອຮັບປະກັນແກ່ຂອດການຜະລິດ ແລະ ເຜີຍແຜ່ຂໍ້ມູນສະຖິຕິຕາມມາດຕະຖານສາກົນ ສາມາດຕອບສະໜອງການຜະລິດຂໍ້ມູນສະຖິຕິທາງການທີ່ມີຄຸນນະພາບ, ເຊື່ອຖືໄດ້ ແລະ ທັນເວລາ;
2) ສ້າງ ແລະ ປັບປຸງ ລະບົບກົນໄກປະສານງານທີ່ມີປະສິດພາບ ແລະ ປະສິດທິຜົນ, ເພີ່ມທະວີການຮ່ວມມືລະຫວ່າງການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ໃຫ້ເປັນລະບົບຕໍ່ເນື່ອງ ເພື່ອຫຼີກຫຼ່ຽງຄວາມຊ້ຳຊ້ອນ ແລະ ຫຼຸດຜ່ອນການສິ້ນເປືອງເວລາ ແລະ ງົບປະມານ;
3) ຊຸກຍູ້, ສະໜັບສະໜູນ ແລະ ຊ່ວຍເຫຼືອ ບັນດາຜູ້ຜະລິດຂໍ້ມູນ ໃນການຜະລິດຂໍ້ມູນ ໃຫ້ຄົບຖ້ວນ, ຊັດເຈນ ແລະ ທັນເວລາ ເພື່ອໃຫ້ຜູ້ຊົມໃຊ້ໄດ້ນຳໃຊ້ຂໍ້ມູນມີປະສິດທິຜົນສູງສຸດ ແລະ ສະດວກວ່ອງໄວທັນເວລາ;
4) ສ້າງ ແລະ ຍົກລະດັບຄວາມຮູ້ຄວາມສາມາດບຸກຄະລາກອນ ແລະ ວິຊາການ ໃນລະບົບສະຖິຕິແຫ່ງຊາດ ໃຫ້ມີຄວາມຊຳນານງານດ້ານສະຖິຕິ ໃນຂອບເຂດທົ່ວປະເທດ ທີ່ມີຄວາມສອດຄ່ອງກັບຄວາມຕ້ອງການໃນການພັດທະນາວຽກງານສະຖິຕິໃນແຕ່ລະໄລຍະ;
5) ເສີມຂະຫຍາຍການຮ່ວມມື ດ້ານການພັດທະນາສະຖິຕິກັບ ພາກພື້ນ ແລະ ສາກົນ, ຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ທຶນຮອນ;
6) ຊຸກຍູ້ ແລະ ສົ່ງເສີມການປະຕິບັດພັນທະຂອງສັງຄົມ, ການໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນສະຖິຕິ, ການປະກອບສ່ວນທຶນຮອນ ແລະ ສະຕິປັນຍາ ດ້ວຍການປະກອບຄຳເຫັນ ແລະ ສະເໜີແນະຕໍ່ວຽກງານສະຖິຕິ.

### 2.2. ຄາດໝາຍສູ້ຊົນ

1) ສືບຕໍ່ຈັດຕັ້ງຜັນຂະຫຍາຍ ກົດໝາຍວ່າດ້ວຍ ສະຖິຕິ, ດຳເນີນການປະເມີນ ແລະ ປັບປຸງກົດໝາຍດັ່ງກ່າວເພື່ອນຳສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດໃນປີ 2017 ແລະ ສືບຕໍ່ຈັດຕັ້ງປະຕິບັດຢ່າງຈິງຈັງຫ້າວຫັນ ພາຍຫຼັງກົດໝາຍສະບັບປັບປຸງຖືກຮັບຮອງ ແລະ ປະກາດໃຊ້;
2) ປັບປຸງ ແລະ ພັດທະນາລະບົບສະຖິຕິແຫ່ງຊາດ ໂດຍການປັບປຸງກົງຈັກການຈັດຕັ້ງ ແລະ ສ້າງເປັນລະບົບລວມສູນສາຍຕັ້ງ ແຕ່ຂັ້ນສູນກາງຮອດຂັ້ນບ້ານ ໃຫ້ເປັນລະບົບຄົບຊຸດໃຫ້ສຳເລັດໃນຂອບເຂດທົ່ວປະເທດໃນປີ 2017. ສູນສະຖິຕິແຫ່ງຊາດ ເປັນທະບວງ ທີ່ຂຶ້ນກັບກະຊວງ ແຜນການ ແລະ ການລົງທຶນ ໂດຍສູນສະຖິຕິປະຈຳແຂວງ, ນະຄອນຫຼວງ, ສູນສະຖິຕິປະຈຳເມືອງ, ເທດສະບານ, ນະຄອນ ແລະ ມີຜູ້ຮັບຜິດຊອບວຽກງານສະຖິຕິຢູ່ຂັ້ນບ້ານ. ພ້ອມນັ້ນ, ກໍ່ປັບປຸງລະບົບການຈັດຕັ້ງສະຖິຕິລະບົບສາຍຂວາງຕາມການກຳນົດໃນ ກົດໝາຍວ່າດ້ວຍ ສະຖິຕິ ໃຫ້ເຂັ້ມແຂງ ເພື່ອໃຫ້ມີລະບອບປະສານງານຢ່າງກົມກຽວ;
3) ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແລະ ບັນລຸຕາມຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດມີຄວາມຈຳເປັນຕ້ອງເພີ່ມຈຳນວນພະນັກງານໃຫ້ໄດ້ທັງໝົດ 2,049 ຄົນ ຮອດປີ 2025 (ລວມ ພະນັກງານສະຖິຕິທັງໝົດໃນທົ່ວລະບົບສະຖິຕິແຫ່ງຊາດ), ໃນນັ້ນ:
   - ສູນສະຖິຕິແຫ່ງຊາດຈາກ 149 ຄົນໃນປະຈຸບັນມາເປັນ 200 ຄົນຮອດປີ 2020 ແລະ ເພີ່ມຂຶ້ນເປັນ 250 ຄົນ ຮອດປີ 2025
   - ລະດັບກະຊວງໃຫ້ມີພະນັກງານໂດຍສະເລ່ຍຢ່າງໜ້ອຍ 6-10 ຄົນ ຕໍ່ກະຊວງ
   - ລະດັບແຂວງ ໃຫ້ມີພະນັກງານໂດຍສະເລ່ຍຢ່າງໜ້ອຍ 6-10 ຄົນ ຕໍ່ແຂວງ
   - ລະດັບເມືອງ ໃຫ້ໄດ້ໂດຍສະເລ່ຍຢ່າງໜ້ອຍ 4-6 ຄົນ ຕໍ່ເມືອງ

4) ປັບປຸງ ແລະ ພັດທະນາການຈັດຕັ້ງລະບົບສະຖິຕິສາຍຂວາງ, ສ້າງເຄືອຂ່າຍການແລກປ່ຽນຂໍ້ມູນຂ່າວສານໃຫ້ໄດ້ 60%[1] ຂອງຜູ້ຜະລິດຂໍ້ມູນຕົ້ນຕໍໃນປີ 2020 ແລະ ບັນລຸ 90% ຂອງຜູ້ຜະລິດຕົ້ນຕໍໃນປີ 2025;
5) ເພີ່ມການຜະລິດສະຖິຕິໃຫ້ຄົບຖ້ວນ, ມີຄຸນນະພາບ ແລະ ສອດຄ່ອງ ໃນຂົງເຂດເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ໃຫ້ສາມາດຜະລິດຂໍ້ມູນສະຖິຕິທາງການ ຕາມຕົວຊີ້ບອກທີ່ໄດ້ກຳນົດໄວ້ ໃຫ້ໄດ້ໂດຍພື້ນຖານ ເພື່ອຮັບໃຊ້ຄວາມຕ້ອງການພາຍໃນ ແລະ ສາກົນ ໃນແຕ່ລະໄລຍະ;

5.1 ຕົວຊີ້ບອກລະດັບຊາດ:
- ໃນປີ 2020 ໃຫ້ໄດ້ຢ່າງຕໍ່າ 300 ຕົວຊີ້ບອກຕົ້ນຕໍ ແລະ ສາມາດເຊື່ອມໂຍງກັບຕົວຊີ້ບອກທັງໝົດ ຂອງການປະເມີນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ (LDCs) ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII;
- ໃນປີ 2025 ແມ່ນໃຫ້ສາມາດຕອບສະໜອງໃຫ້ໄດ້ຢ່າງຕໍ່າ 350 ຕົວຊີ້ບອກ ແລະ ສາມາດເຊື່ອມໂຍງກັບຕົວຊີ້ບອກ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃຫ້ໄດ້ 125 ຕົວຊີ້ບອກ;

5.2 ຕົວຊີ້ບອກລະດັບຂະແໜງການ:
- ໃນປີ 2020 ໃຫ້ໄດ້ຢ່າງຕໍ່າ 550 ຕົວຊີ້ບອກຕົ້ນຕໍ;
- ໃນປີ 2025 ແມ່ນໃຫ້ສາມາດຕອບສະໜອງໃຫ້ໄດ້ທັງໝົດ 600 ຕົວຊີ້ບອກຕົ້ນຕໍ;

5.3 ຕົວຊີ້ບອກລະດັບແຂວງ ແລະ ເມືອງ:
- ຄຽງຄູ່ກັບຕົວຊີ້ບອກລະດັບຊາດ ແລະ ຂະແໜງການແລ້ວ ມີຄວາມຈຳເປັນທີ່ສຸດຕ້ອງແຍກຕົວຊີ້ບອກດັ່ງກ່າວ ໃຫ້ສາມາດລາຍງານໄດ້ໃນລະດັບແຂວງ ແລະ ເມືອງ ຕາມຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຕົວຈິງ ທີ່ເປັນພື້ນຖານ ພ້ອມກັບສະໜອງໃຫ້ແກ່ ການເຊື່ອມໂຍງກັບບັນຕົວຊີ້ບອກຂອງ ການປະເມີນການຫຼຸດພົ້ນອອກຈາກ ສະຖານະພາບດ້ອຍພັດທະນາ (LDCs) ແລະ ບັນດາຕົວຊີ້ບອກເປົ້າໝາຍການພັດທະນາແບບຍືນຍົງ (SDGs), ຊຶ່ງຮຽກຮ້ອງໃຫ້ມີການອອກແບບ, ການເກັບກຳ ລວມທັງ ການອອກແບບການສຳຫຼວດຕົວແທນ ເພື່ອຮັບປະກັນຄວາມຊັດເຈນໃນລະດັບແຂວງ;

6) ສູ້ຊົນໃຫ້ໄດ້ຈັດຕັ້ງປະຕິບັດ ບັນດາການສຳຫຼວດໃຫຍ່ ແລະ ສຳຫຼວດຕົວແທນ ທີ່ເປັນພື້ນຖານໃນການຜະລິດຂໍ້ມູນສະຖິຕິທາງການຮັບໃຊ້ການວາງແຜນພັດທະນາເສດຖະກິດ-ສັງຄົມ, ການຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ເພື່ອຫຼຸດພົ້ນອອກຈາກບັນຊີສະຖານະພາບປະເທດດ້ອຍພັດທະນາ, ການແກ້ໄຂ ແລະ ຫຼຸດຜ່ອນຄວາມທຸກຍາກ, ແລະ ການຕິດຕາມຄວາມຄືບໜ້າຂອງການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ໃນແຕ່ລະໄລຍະດັ່ງນີ້:

6.1. ໄລຍະແຕ່ປີ 2016-2020
- ການສຳຫຼວດເສດຖະກິດທົ່ວປະເທດຄັ້ງທີ 3 ປີ 2018
- ການສຳຫຼວດສະຖິຕິກະສິກຳທົ່ວປະເທດ ຄັ້ງທີ 3 ປີ 2019 (ທຸກໆ 10 ປີ)
- ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຄົວເຮືອນຄັ້ງທີ 6 ປີ 2017/2018
- ການສຳຫຼວດຄົວເຮືອນປະຈຳປີ ແຕ່ປີ 2016-2020
- ການສຳຫຼວດຫົວໜ່ວຍວິສາຫະກິດ ແລະຫ້າງຮ້ານປະຈຳງວດ ແຕ່ ປີ 2016-2020

[1] ອີງຕາມການຈັດຕັ້ງປະຕິບັດຂອງທີມງານເຜີຍແຜ່ (13 ກະຊວງ ແລະ ອົງການ)

- ສຳຫຼວດການເຄື່ອນໄຫວວິສາຫະກິດ ແລະ ຫ້າງຮ້ານ ໃນເຂດເສດຖະກິດພິເສດ ແລະ ສະເພາະປະຈຳປີ ແຕ່ປີ 2017-2020.
- ການສຳຫຼວດກຳລັງແຮງງານ ໃນ ສປປ ລາວ ຄັ້ງທີ 2 ປີ 2016 (ທຸກໆ 5 ປີ) ແລະ ໃຫ້ມີການຄົ້ນຄ້ວານຳສະເໜີໃນການສຳຫຼວດປະຈຳປີ, ງວດຕາມຄວາມເປັນຈິງ
- ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ 2 ປີ 2017
- ການຂຶ້ນທະບຽນການເກີດ-ການຕາຍ ແຕ່ປີ 2016-2020
- ການຂຶ້ນບັນຊີບ້ານ ແລະ ຄົວເຮືອນປີ ແຕ່ປີ 2016-2020
- ການຈົດນັບພົນລະເມືອງປີ 2020 (ທຸກໆ 5 ປີ)
- ສະຖິຕິຂັ້ນບ້ານ ແລະ ຄວາມທຸກຍາກ ປີ 2016-2020
- ສຳຫຼວດຄວາມເພິ່ງພໍໃຈຂອງຜູ້ຊົມໃຊ້ສະຖິຕິ ປີ 2018 (ທຸກ 2 ປີ)
- ສະຖິຕິການຂຶ້ນທະບຽນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ປີ 2016-2020
- ສຳຫຼວດເກັບກຳລາຄາເພື່ອການສົມທຽບອຳນາດຊື້ລະຫວ່າງປະເທດ (ICP) ປີ 2017-2018
- ການສຳຫຼວດປັດໄຈການຜະລິດ (Input-Output) ປີ 2019
- ການສຳຫຼວດ ເພື່ອຄິດໄລ່ GNI ປີ 2017-2020 (ທຸກໆ ປີ)
- ການສຳຫຼວດການຄ້າຜ່ານແດນ (Shuttle Trade Survey) ປີ 2017-2020 (ທຸກໆ ປີ)
- ການສຳຫຼວດການຄ້າລະຫວ່າງປະເທດດ້ານການບໍລິການ (SITS Survey) ປີ 2017-2020 (ທຸກໆ ປີ)
- ການສຳຫຼວດການຖານະການລົງທຶນ ແລະ ໜີ້ສິນລະຫວ່າງປະເທດ (IIP & EDP Survey) ປີ 2016-2020 (ທຸກໆ ປີ)
- ຈັດຕັ້ງປະຕິບັດການສຳຫຼວດອື່ນໆ ທີ່ເຫັນວ່າຈຳເປັນ ເພື່ອເພີ່ມຂໍ້ມູນສະຖິຕິທາງດ້ານສິ່ງແວດລ້ອມ, ຮັບໃຊ້ການຜະລິດຕົວຊີ້ບອກ ເພື່ອປະເມີນການຫຼຸດພົ້ນຈາກປະເທດດ້ອຍພັດທະນາ, ການພັດທະນາແບບຍືນຍົງ, ຄວາມໝັ້ນຄົງ ແລະ ອື່ນໆ ຕາມຄວາມເໝາະສົມ. ສ່ວນລາຍລະອຽດ ແມ່ນໃຫ້ມີການສົມທົບກັບພາກສ່ວນກ່ຽວຂ້ອງ ໃນເວລາຈັດຕັ້ງປະຕິບັດຍຸດທະສາດໃນຕົວຈິງ;

### 6.2. ໄລຍະແຕ່ປີ 2021-2025

ສືບຕໍ່ຈັດຕັ້ງປະຕິບັດການສຳຫຼວດໃຫຍ່ ທີ່ໄດ້ຖືກຈັດຕັ້ງປະຕິບັດໃນໄລຍະປີ 2021-2025, ກໍລະນີຈຳເປັນ ອາດຈະມີການປ່ຽນແປງທາງດ້ານໄລຍະເວລາ ກໍ່ຄື ເນື້ອໃນຕາມຄວາມຕ້ອງການຂອງພັກ ແລະ ລັດຖະບານ ໃນແຕ່ລະໄລຍະ ຊຶ່ງການສຳຫຼວດຕົ້ນຕໍປະກອບມີ:

- ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ 5 ປີ 2025 (ທຸກໆ 10 ປີ)
- ການສຳຫຼວດເສດຖະກິດທົ່ວປະເທດ ຄັ້ງທີ 4 ປີ 2023 (ທຸກໆ 5 ປີ)
- ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຄົວເຮືອນ ຄັ້ງທີ 7 ປີ 2022/2023 (ທຸກໆ 5 ປີ)
- ການສຳຫຼວດຄົວເຮືອນ ປີ 2021-2025
- ການສຳຫຼວດຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ປີ 2021-2025
- ສຳຫຼວດການເຄື່ອນໄຫວວິສາຫະກິດ ແລະ ຫ້າງຮ້ານໃນເຂດເສດຖະກິດພິເສດ ແລະ ສະເພາະປີ 2021-2025
- ການສຳຫຼວດກຳລັງແຮງງານໃນ ສປປ ລາວ ຄັ້ງທີ 3 ປີ 2021
- ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ 3 ປີ 2022

- ການຂຶ້ນທະບຽນການເກີດ-ການຕາຍ ປີ 2021-2025
- ການຂຶ້ນບັນຊີບ້ານ ແລະ ຄົວເຮືອນປີ 2021-2025
- ສະຖິຕິຂັ້ນບ້ານ ແລະ ຄວາມທຸກຍາກ ປີ 2021-2025
- ສຳຫຼວດຄວາມເພິ່ງພໍໃຈຂອງຜູ້ຊົມໃຊ້ສະຖິຕິ ປີ 2022 (ທຸກ 2ປີ)
- ສຳຫຼວດເກັບກຳລາຄາເພື່ອການສົມທຽບອຳນາດຊື້ລະຫວ່າງປະເທດ (ICP) ປີ 2021-2022 ແລະ ປີ 2025
- ການສຳຫຼວດປັດໄຈການຜະລິດ (Input-Output) ປີ 2024
- ການສຳຫຼວດ ເພື່ອຄິດໄລ່ GNI ປີ 2021-2025 (ທຸກໆ ປີ)
- ການສຳຫຼວດການຄ້າຜ່ານແດນ (Shuttle Trade Survey) ປີ 2021-2025 (ທຸກໆ ປີ)
- ການສຳຫຼວດການຄ້າລະຫວ່າງປະເທດດ້ານການບໍລິການ (SITS Survey) ປີ 2021-2025 (ທຸກໆ ປີ)
- ການສຳຫຼວດການຖານະການລົງທຶນ ແລະ ໜີ້ສິນລະຫວ່າງປະເທດ (IIP & EDP Survey) ປີ 2021-2025 (ທຸກໆ ປີ)
- ຈັດຕັ້ງປະຕິບັດການສຳຫຼວດອື່ນໆ ທີ່ເຫັນວ່າຈຳເປັນ ເພື່ອເພີ່ມຂໍ້ມູນສະຖິຕິທາງດ້ານສິ່ງແວດລ້ອມ, ຮັບໃຊ້ການຜະລິດຕົວຊີ້ບອກ ເພື່ອຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດການພັດທະນາແບບຍືນຍົງ, ຄວາມໝັ້ນຄົງ ແລະ ອື່ນໆ ຕາມຄວາມເໝາະສົມ. ສ່ວນລາຍລະອຽດແມ່ນໃຫ້ມີການສົມທົບກັບພາກສ່ວນກ່ຽວຂ້ອງ ໃນເວລາຈັດຕັ້ງປະຕິບັດຍຸດທະສາດໃນຕົວຈິງ.

7) ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ, ການສ້າງຄວາມອາດສາມາດ, ການຍົກລະດັບພະນັກງານ ດ້ວຍຫຼາຍຮູບການ ຊຶ່ງລວມເອົາດ້ານການຄຸ້ມຄອງບໍລິຫານ ແລະ ວິຊາສະເພາະສະຖິຕິ ສຳລັບທົ່ວລະບົບສະຖິຕິແຫ່ງຊາດ ແຕ່ປີ 2016-2020 ພາຍຫຼັງມີການປະເມີນການຈັດຕັ້ງປະຕິບັດ ແລະ ໃນໄລຍະປີ 2021-2025. ສູ້ຊົນໃຫ້ມີການຍົກລະດັບພະນັກງານໃນທຸກຂັ້ນໃນລະດັບຊັ້ນສູງ, ປະລິນຍາຕີ, ປະລິນຍາໂທ ໃຫ້ໄດ້ 5 ຄົນຕໍ່ປີ ຫຼື 50 ຄົນພາຍໃນ 10 ປີ ແລະ ຍົກລະດັບໃນປະລິນຍາເອກ ໃຫ້ໄດ້ 5 ຄົນ ໃນ 10 ປີ;
8) ສະຖິຕິການຂຶ້ນທະບຽນ (ທັງຄົວເຮືອນ ແລະ ວິສາຫະກິດ) ຕ້ອງປັບປຸງ ແລະ ດັດແກ້ປະຈຳປີ ແລະ ໃນທ້າຍໄລຍະຂອງແຜນຍຸດທະສາດ ໃຫ້ສາມາດສ້າງລະບົບນີ້ຂຶ້ນຢ່າງເປັນທາງການ ແລະ ກາຍເປັນລະບົບການຂຶ້ນທະບຽນທີ່ນຳໃຊ້ເປັນທາງການທີ່ແທ້ຈິງຢູ່ ສປປ ລາວ;
9) ຜັນຂະຫຍາຍແຜນຍຸດທະສາດພັດທະນາເສີມສ້າງລະບົບພື້ນຖານໂຄງລ່າງ ທາງດ້ານເຕັກໂນໂລຊີ ແລະ ເຄື່ອງມືການສື່ສານໃຫ້ທັນສະໄໝ, ມີຄວາມຍືນຍົງ ແລະ ສາມາດເຊື່ອມຕໍ່ລະຫວ່າງການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ;
10) ຈັດຕັ້ງຜັນຂະຫຍາຍຍຸດທະສາດການເຜີຍແຜ່ສະຖິຕິທາງການ ໃຫ້ເປັນລະບົບການເຜີຍແຜ່ທີ່ຄົບຊຸດ, ຮັບປະກັນການເຂົ້າເຖິງຂໍ້ມູນສະຖິຕິໃນຫຼາຍຮູບການເພື່ອຮັບປະກັນການນຳໃຊ້ສະຖິຕິໃຫ້ມີປະໂຫຍດສູງສຸດ.

## 3. ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025

ໜ້າທີ່ຕົ້ນຕໍຂອງຜູ້ຮັບຜິດຊອບວຽກງານສະຖິຕິ ແມ່ນຜະລິດຂໍ້ມູນສະຖິຕິທີ່ມີຄຸນນະພາບ, ເຊື່ອຖືໄດ້ ແລະທັນເວລາ ສາມາດຮັບໃຊ້ໃຫ້ແກ່ການວາງແຜນ, ການຕັດສິນບັນຫາ ຂອງຜູ້ວາງນະໂຍບາຍທັງພາຍໃນ, ຕ່າງປະເທດ ແລະ ຜູ້ນຳໃຊ້ທົ່ວໄປ. ຕ້ອງຖືກກັບທິດນຳ ຂອງມະຕິກອງປະຊຸມໃຫ່ຍຄັ້ງທີ X ຂອງພັກ, ແຜນ

ພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ VIII (2016-2020) ແລະ IX (2021-2025), ປັບປຸງ ແລະ ສົ່ງເສີມການເຄື່ອນໄຫວວຽກງານສະຖິຕິບົນພື້ນຖານຫຼັກການ ຕາມການກໍານົດໃນ ກົດໝາຍວ່າດ້ວຍ ສະຖິຕິ ແລະ ສະຖິຕິອີງການສະຫະປະຊາຊາດຄື: ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ; ຮັບປະກັນຄວາມຖືກຕ້ອງຕາມຫຼັກວິທະຍາສາດສະຖິຕິ ແລະ ຄວາມເປັນເອກະລາດທາງດ້ານວິຊາການໃນການຜະລິດ, ເຜີຍແຜ່, ການຕອບສະໜອງຂໍ້ມູນສະຖິຕິໃຫ້ຖືກຕ້ອງຕາມຄວາມເປັນຈິງ, ພາວະວິໄສ, ຊັດເຈນ, ຄົບຖ້ວນ ແລະ ທັນເວລາ; ຮັບປະກັນຄວາມເປັນເອກະພາບຂອງບັນດາຕົວຊີ້ບອກ, ລະບອບວິທີການຄິດໄລ່, ລະບົບຕາຕະລາງເກັບກໍາ, ຫົວໜ່ວຍວັດແທກ, ລະບົບລະຫັດສາລະບານ, ໄລຍະເວລາການລາຍງານ ໂດຍໃຫ້ເອົາໃຈໃສ່ສະຖິຕິແຍກເພດ; ຮັບປະກັນການເປີດເຜີຍກ່ຽວກັບວິທີການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ນໍາໃຊ້ຂໍ້ມູນສະຖິຕິ; ຮັບປະກັນສິດສະເໝີພາບໃນການເຂົ້າເຖິງ ແລະ ການນໍາໃຊ້ຂໍ້ມູນສະຖິຕິ ທີ່ໄດ້ເຜີຍແຜ່ ແລະ ປະກາດໃຊ້, ສາຍພົວພັນລະຫວ່າງຜູ້ຜະລິດ ແລະຜູ້ນໍາໃຊ້ຂໍ້ມູນສະຖິຕິ; ເຄົາລົບ ແລະ ປະຕິບັດສົນທິສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ, ຊຶ່ງໄດ້ກໍານົດເອົາທັງໝົດ 5 ຍຸດທະສາດ ແລະ 15 ແຜນງານຕົ້ນຕໍ[2] ຄືດັ່ງລຸ່ມນີ້:

**3.1. ຍຸດທະສາດ ແລະແຜນງານ: ການປັບປຸງ ແລະຈັດຕັ້ງປະຕິບັດບັນດານິຕິກໍາ.**

**<u>ແຜນງານ 1</u>**: ປັບປຸງ ແລະ ເຜີຍແຜ່ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ສະຖິຕິ ແລະ ບັນດາລະບຽບການລຸ່ມນິຕິກໍາ ກ້າວໄປສູ່ການເຄື່ອນໄຫວວຽກງານສະຖິຕິຕາມຫຼັກວິທະຍາສາດສະຖິຕິ;

**<u>ແຜນງານ 2</u>**: ປັບປຸງການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ໃນພາກສ່ວນສະຖິຕິຢູ່ແຕ່ລະຂັ້ນ ເພື່ອຮັບປະກັນການດໍາເນີນວຽກງານສະຖິຕິໃນແຕ່ລະໄລຍະ;

**<u>ແຜນງານ 3</u>**: ສ້າງກົນໄກ ແລະ ວິທີການ ເພື່ອປູກຈິດສໍານຶກໃຫ້ທຸກພາກສ່ວນ ແລະທຸກຊັ້ນຄົນໃນສັງຄົມໃຫ້ປະກອບສ່ວນເຂົ້າໃນຂະບວນການເຄື່ອນໄຫວວຽກງານສະຖິຕິ ດ້ວຍຄວາມຮັບຜິດຊອບສູງ.

**3.2. ຍຸດທະສາດ ແລະ ແຜນງານ: ການພັດທະນາໂຄງລ່າງພື້ນຖານດ້ານສະຖິຕິ**

**<u>ແຜນງານ 4</u>**: ສ້າງພັດທະນາໂຄງລ່າງພື້ນຖານ ດ້ານສະຖິຕິ ລວມທັງ ໂຄງລ່າງພື້ນຖານ ທາງດ້ານຂໍ້ມູນຂ່າວສານເຕັກໂນໂລຊີ (ICT) ແລະ ສິ່ງແວດລ້ອມ ເພື່ອອໍານວຍຄວາມສະດວກການເຮັດວຽກ ຂອງບັນດາພາກສ່ວນສະຖິຕິ ຢ່າງມີປະສິດທິຜົນ;

**<u>ແຜນງານ 5</u>**: ສະໜັບສະໜູນການນໍາໃຊ້ ແລະ ໝູນໃຊ້ຫຼັກມູນ, ມາດຕະຖານ, ລະບອບວິທີ ແລະ ການຈັດລຽງລະຫັດສາລະບານຕາມຫຼັກສາກົນ, ປັບຕາມເງື່ອນໄຂ ແລະ ສະພາບຄວາມເປັນຈິງຂອງປະເທດເຮົາ ເພື່ອກ້າວໄປສູ່ການຜະລິດທີ່ມີຄຸນນະພາບ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**3.3. ຍຸດທະສາດ ແລະ ແຜນງານ: ການຄຸ້ມຄອງ, ບໍລິຫານ ແລະ ພັດທະນາຂໍ້ມູນ**

**<u>ແຜນງານ 6</u>**: ເພີ່ມທະວີການຜະລິດ, ການພັດທະນາຕົວຊີ້ບອກຂໍ້ມູນສະຖິຕິທາງການ ແບ່ງຕາມຂະແໜງສະຖິຕິໃນແຕ່ລະລະດັບ ທັງພາຍໃນ ແລະ ສາກົນ ໃນແຕ່ລະໄລຍະດ້ວຍຄຸນນະພາບ ແລະ ຄວາມໜ້າເຊື່ອຖື;

**<u>ແຜນງານ 7</u>**: ສ້າງ ແລະ ປັບປຸງກົນໄກການເຮັດວຽກຂອງສະຖິຕິຢູ່ທ້ອງຖິ່ນ ເພື່ອກ້າວໄປສູ່ຄວາມເປັນການເຊື່ອມໂຍງຂໍ້ມູນໃນທົ່ວປະເທດ;

[2] ສໍາລັບການຈັດຕັ້ງປະຕິບັດຍຸດທະສາດລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດ 2030 ແມ່ນຈະມີບົດແນະນໍາການຈັດຕັ້ງປະຕິບັດລະອຽດຕ່າງຫາກ

**ແຜນງານ 8:** ສ້າງ ແລະ ປັບປຸງລະບົບການຜະລິດຂໍ້ມູນສະຖິຕິທາງການ ເພື່ອສະໜອງຂໍ້ມູນການຕິດຕາມ ແລະ ຜະລິດຕົວຊີ້ບອກ ເພື່ອປະເມີນສະຖານະພາບ ຂອງການຫຼຸດພົ້ນອອກຈາກ ບັນຊີປະເທດດ້ອຍພັດທະນາ (LDC);

**ແຜນງານ 9:** ສ້າງ ແລະ ປັບປຸງລະບົບການຜະລິດຂໍ້ມູນສະຖິຕິທາງການ, ລະບົບການລາຍງານບໍລິຫານ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃນການປະສານງານ ເພື່ອສະໜອງຂໍ້ມູນການຕິດຕາມ ແລະ ຜະລິດຕົວຊີ້ບອກ ເພື່ອປະເມີນການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (SDGs);

**ແຜນງານ 10**: ປັບປຸງການເຜີຍແຜ່, ສ້າງສໍານວນສໍາເນົາ ຂໍ້ມູນຂ່າວສານສະຖິຕິທາງການ, ການແລກປ່ຽນຂໍ້ມູນຂ່າວສານ, ເພີ່ມການເຂົ້າເຖິງ ຖານຂໍ້ມູນເຜີຍແຜ່ ດ້ວຍວິທີການທີ່ຫຼາກຫຼາຍ ເພື່ອເຮັດໃຫ້ຜູ້ຊົມໃຊ້ສາມາດເຂົ້າໃຈງ່າຍ ແລະ ນໍາໃຊ້ຖືກຕ້ອງຕາມຫຼັກການວິທະຍາສະຖິຕິ.

### 3.4. ຍຸດທະສາດ ແລະ ແຜນງານ: ການຮັບປະກັນລະບົບປະສານງານດ້ານສະຖິຕິ ແລະ ການເຊື່ອມໂຍງເຄືອຂ່າຍ

**ແຜນງານ 11**: ສ້າງເຄືອຂ່າຍເຊື່ອມໂຍງ ຢ່າງເປັນລະບົບ ໂດຍຜ່ານ ສູນກາງສັງລວມ ຂໍ້ມູນສະຖິຕິທາງການຕາມມາດຖານສາກົນ, ຮັບປະກັນ ລະບົບປ້ອງກັນຄວາມປອດໄພ ແລະ ການຮັກສາຂໍ້ມູນສະຖິຕິໃນບັນດາເຄືອຂ່າຍສະຖິຕິເພື່ອຫຼີກຫຼ່ຽງຖານຂໍ້ມູນສູນເສຍ, ຮັກສາຄວາມລັບຂອງຂໍ້ມູນສະຖິຕິ;

**ແຜນງານ 12:** ເພີ່ມທະວີການຮ່ວມມືກັບພາກພື້ນ ແລະ ສາກົນ ໃຫ້ມີຄວາມເຂັ້ມແຂງທາງດ້ານການຄຸ້ມຄອງບໍລິຫານ ແລະ ລະດັບວິຊາສະເພາະສະຖິຕິ ເພື່ອການແລກປ່ຽນປະສົບການ, ວິຊາການ ແລະ ການເຊື່ອມໂຍງເຂົ້າສູ່ມາດຕະຖານສາກົນ;

**ແຜນງານ 13**: ຍົກສູງບົດບາດ ແລະ ໃຫ້ຄວາມສໍາຄັນຕໍ່ການປະສານງານທີ່ມີປະສິດທິພາບ ແລະ ປະສິດທິຜົນທັງພາຍໃນ ແລະ ພາຍນອກ ເພື່ອຫຼີກຫຼ່ຽງຄວາມຊໍ້າຊ້ອນ, ສິ້ນເປືອງງົບປະມານ ແລະ ເວລາ.

### 3.5. ຍຸດທະສາດ ແລະ ແຜນງານ: ລະດົມ ແລະ ຄຸ້ມຄອງຊັບພະຍາກອນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານສະຖິຕິ ເພື່ອໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ

**ແຜນງານ 14**: ຍົກລະດັບຄວາມຮູ້, ຄວາມສາມາດ ແລະ ຄວາມຊໍານານວຽກຂອງພະນັກງານສະຖິຕິ ໃຫ້ສາມາດກ້າວໄປເປັນຊ່ຽວຊານທີ່ມີປະສົບການ ແລະ ມີຄວາມຊໍານານງານຕາມມາດຕະຖານສາກົນ;

**ແຜນງານ 15**: ຊຸກຍູ້ ແລະ ສະໜັບສະໜູນໃນການລະດົມທຶນຮອນຂໍ້າໃນວຽກງານສະຖິຕິ ເພື່ອໃຫ້ມີງົບປະມານໃນລະດັບອັນແນ່ນອນ ແລະ ສາມາດດໍາເນີນການເຄື່ອນໄຫວວຽກງານສະຖິຕິ ຂອງລະບົບສະຖິຕິແຫ່ງຊາດ.

## 4. ແຜນງານ ແລະ ກິດຈະກໍາຕົ້ນຕໍໃນການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025

**ແຜນງານ 1:** ປັບປຸງ ແລະ ເຜີຍແຜ່ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ສະຖິຕິ ແລະ ບັນດາລະບຽບການລຸ່ມນິຕິກໍາ ກ້າວໄປສູ່ການເຄື່ອນໄຫວວຽກງານສະຖິຕິຕາມຫຼັກວິທະຍາສາດສະຖິຕິສາກົນ.

**ກິດຈະກໍາ:**

- ປັບປຸງ ກົດໝາຍວ່າດ້ວຍ ສະຖິຕິ, ດໍາລັດຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ສະຖິຕິ ແລະ ນິຕິກໍາລຸ່ມກົດໝາຍ.
- ສ້າງນະໂຍບາຍ ເພື່ອສ້າງຄວາມເຂັ້ມແຂງດ້ານການບໍລິຫານ ແລະ ການຄຸ້ມຄອງວຽກງານສະຖິຕິທີ່ມີປະສິດທິພາບ ແລະ ປະສິດທິຜົນ.

- ຈັດຕັ້ງ ແລະ ສົ່ງເສີມການເຜີຍແຜ່ກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ສະຖິຕິ ຢ່າງຄົບຖ້ວນ ແລະ ມີປະສິດທິຜົນ.
- ປັບປຸງກົນໄກລະບົບປະສານງານ ແລະ ຈຸດປະສານງານ ການຮ່ວມມືຂອງການຈັດຕັ້ງສະຖິຕິແຫ່ງຊາດໃນການເຄື່ອນໄຫວວຽກງານສະຖິຕິແຫ່ງຊາດ.
- ສ້າງຕັ້ງສະພາທີ່ປຶກສາແຫ່ງຊາດດ້ານສະຖິຕິ ຖ້າເຫັນວ່າມີຄວາມຈໍາເປັນ ແລະ ມີເງື່ອນໄຂທີ່ເໝາະສົມ ເພື່ອເພີ່ມປະສິດທິພາບການປະສານງານ ໃນການຈັດຕັ້ງປະຕິບັດການລະດົມແນວຄວາມຄິດ, ການຈັດບຸລິມະສິດ, ການລະດົມແຫຼ່ງທຶນ ແລະ ການຕອບສະໜອງດ້ານວິຊາການທີ່ກ່ຽວຂ້ອງກັບ ການນໍາໃຊ້ຫຼັກການສາກົນດ້ານສະຖິຕິ, ລະຫັດສາລະບານ ກໍ່ຄື ການປັບປຸງສະຖິຕິຕ່າງໆ.

**<u>ແຜນງານ 2:</u>** ປັບປຸງການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ໃນພາກສ່ວນສະຖິຕິຢູ່ແຕ່ລະຂັ້ນ ເພື່ອຮັບປະກັນການດໍາເນີນວຽກງານສະຖິຕິໃນແຕ່ລະໄລຍະ.

**<u>ກິດຈະກໍາ</u>:**

- ຈັດຕັ້ງປະຕິບັດລະບົບການປະເມີນ-ຕີລາຄາການຈັດຕັ້ງ ໂດຍເນັ້ນໃສ່ພາລະບົດບາດ, ຄວາມຮັບຜິດຊອບ, ຄວາມອາດສາມາດ, ຄວາມຕ້ອງການພະນັກງານ ແລະ ໜ້າວຽກທີ່ໄດ້ປະຕິບັດ ຂອງລະບົບສະຖິຕິແຫ່ງຊາດ ຕາມສາຍຕັ້ງ ແລະ ສາຍຂວາງ ໂດຍສະເພາະແມ່ນ ລະບົບການເກັບກໍາ ແລະ ລາຍງານຂໍ້ມູນ ໃນແຕ່ລະໄລຍະ, ພ້ອມທັງຮັບປະກັນໃຫ້ມີ ສູນສະຖິຕິ/ພະແນກສະຖິຕິປະຈໍາຢູ່ໃນການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ນັບແຕ່ສູນກາງຮອດທ້ອງຖິ່ນ;
- ອອກແບບລະບົບຂໍ້ມູນຂ່າວສານທີ່ຄົບຖ້ວນ ແລະ ພັດທະນາລະບົບຄັງຂໍ້ມູນບຸກຄະລາກອນ/ພະນັກງານສັງກັດລັດ ຫຼື ການສໍາຫຼວດທີ່ແທດເໝາະໃນບັນດາກະຊວງທີ່ກ່ຽວຂ້ອງ;
- ສ້າງຄວາມເປັນເອກະພາບທາງດ້ານລະບົບຂໍ້ມູນຂ່າວສານ ໃນບັນດາກະຊວງ, ອົງການ ລວມທັງແຂວງ ແລະ ນະຄອນຫຼວງ ທົ່ວລະບົບການຈັດຕັ້ງສະຖິຕິແຫ່ງຊາດ ໂດຍຜ່ານການທົບທວນກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບ ເພື່ອຮັບໃຊ້ວຽກງານການຄຸ້ມຄອງບຸກຄະລາກອນທີ່ມີປະສິດທິພາບໃນແຕ່ລະໄລຍະ.

**<u>ແຜນງານ 3:</u>** ສ້າງກົນໄກ ແລະ ວິທີການ ເພື່ອປູກຈິດສໍານຶກໃຫ້ທຸກພາກສ່ວນ ແລະທຸກຊັ້ນຄົນໃນສັງຄົມໃຫ້ປະກອບສ່ວນເຂົ້າໃນຂະບວນການເຄື່ອນໄຫວວຽກງານສະຖິຕິ ດ້ວຍຄວາມຮັບຜິດຊອບສູງ.

**<u>ກິດຈະກໍາ:</u>**

- ຈັດຕັ້ງ ແລະ ສົ່ງເສີມການເຜີຍແຜ່ ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະວິໄສທັດ 2030, ພ້ອມກັບ ບົດແນະນໍາເພື່ອຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວໃຫ້ແກ່ທຸກພາກສ່ວນໃນລະບົບສະຖິຕິແຫ່ງຊາດ ຢ່າງຄົບຖ້ວນ ແລະ ມີປະສິດທິຜົນ;
- ສ້າງ ແລະ ປຸກລະດົມຈິດສໍານຶກ ກ່ຽວກັບຄວາມສໍາຄັນຂອງສະຖິຕິ ໂດຍຜ່ານຂະບວນການໂຄສະນາ, ການເຜີຍແຜ່ວຽກງານການພັດທະນາສະຖິຕິ ໂດຍຜ່ານຫຼາຍຮູບແບບ ເປັນຕົ້ນກອງປະຊຸມ, ຜ່ານສື່ມ່ວນຊົນ, ສ້າງຄູ່ມືແນະນໍາ ແລະ ອື່ນໆ ເພື່ອຮັບປະກັນການປະກອບສ່ວນຂອງທຸກພາກສ່ວນໃນສັງຄົມ;
- ສ້າງກົນໄກພົບປະກັບຜູ້ນໍາໃຊ້ ແລະ ຜູ້ຜະລິດຂໍ້ມູນ ໂດຍຜ່ານກົນໄກການປະຊຸມ, ສໍາມະນາ ແລະ ການເຮັດວຽກຮ່ວມກັນຢ່າງໃກ້ຊິດ ໃນລະດັບວິຊາການ ຢ່າງເປັນລະບົບປົກກະຕິ. ຈັດຕັ້ງ

ກອງປະຊຸມສະຖິຕິປະຈຳປີ ແລະ ກອງປະຊຸມສຳມະນາຜູ້ບໍລິຫານຂອງລະບົບສະຖິຕິແຫ່ງຊາດ ສໍາລັບການນໍາໃນແຕ່ລະຂັ້ນ;

- ສ້າງລະບົບການປະສານງານທີ່ມີປະສິດທິພາບ, ມີການຮ່ວມມື ແລະ ແລກປ່ຽນຂໍ້ມູນສະຖິຕິມີການເຊື່ອມຕໍ່ ແລະ ສ້າງລະບົບເຄືອຂ່າຍ ລະຫວ່າງ ຜູ້ຜະລິດ ແລະ ຜູ້ນໍາໃຊ້ຂໍ້ມູນສະຖິຕິ, ແລະ ຜູ້ມີສ່ວນຮ່ວມທຸກໆພາກສ່ວນ;
- ສົ່ງເສີມທັດສະນະ ແລະ ແນວຄິດແບບສະຖິຕິ ໂດຍການລົງທຶນໃສ່ລະບົບການຝຶກອົບຮົມກ່ຽວກັບການວິໄຈ ແລະ ການວິເຄາະສະຖິຕິ ລວມທັງການສ້າງເອກະສານສໍາມະນອນຂໍ້ມູນສະຖິຕິໃນລະດັບສູນກາງ ເພື່ອໃຫ້ຜູ້ນໍາໃຊ້ສາມາດປະເມີນຄຸນນະພາບ ແລະຄວາມເຊື່ອຖືຂອງຂໍ້ມູນສະຖິຕິ.

<u>**ແຜນງານ 4:**</u> ສ້າງພັດທະນາໂຄງລ່າງພື້ນຖານຂອງຂໍ້ມູນຂ່າວສານ ເຕັກໂນໂລຊີ (ICT) ແລະ ສິ່ງແວດລ້ອມເພື່ອອໍານວຍຄວາມສະດວກການເຮັດວຽກ ຂອງບັນດາພາກສ່ວນສະຖິຕິ ຢ່າງມີປະສິດທິຜົນ.

<u>**ກິດຈະກໍາ:**</u>

- ສຶກສາຄົ້ນຄ້ວາ ແລະປັບປຸງການນໍາໃຊ້ຊອບແວຕ່າງໆທີ່ຮັບໃຊ້ການເກັບກໍາ, ສັງລວມ, ການປຸງແຕ່ງ, ການວິໄຈ, ການເຜີຍແຜ່ຂໍ້ມູນ, ການຮັກສາຖານຂໍ້ມູນ ແລະ ຄວາມປອດໄພຂອງລະບົບເຄືອຂ່າຍ ໂດຍນໍາໃຊ້ໂປຼແກຼມຕ່າງໆ ທີ່ກ່ຽວຂ້ອງ;
- ສ້ອມແປງ, ບໍາລຸງຮັກສາອຸປະກອນໄອຊີທີ, ຍົກລະດັບ ແລະ ສັບປ່ຽນອຸປະກອນ ຂໍ້ມູນຂ່າວສານທາງດ້ານເຕັກໂນໂລຊີ (IT) ໃຫ້ມີຄຸນນະພາບ, ທັນສະໄໝ ແລະ ສອດຄ່ອງກັບຄວາມຕ້ອງການໃນແຕ່ລະໄລຍະ ແຕ່ສູນກາງລົງຮອດທ້ອງຖິ່ນ;
- ຈັດຕັ້ງປະຕິບັດ, ການຕິດຕັ້ງ, ສະໜອງອຸປະກອນ ແລະ ພັດທະນາລະບົບເຄືອຂ່າຍເຊື່ອມຕໍ່ (LAN, WAN, Internet, Web Server, Mail Service) ຢູ່ສູນສະຖິຕິແຫ່ງຊາດ, ສູນຂໍ້ມູນສະຖິຕິປະຈໍາພາກ ເພື່ອເຊື່ອມໂຍງກັບສູນສະຖິຕິປະຈໍາບັນດາກະຊວງ;
- ສ້າງຕັ້ງການເຊື່ອມໂຍງທາງດ້ານສະຖິຕິ ໃຫ້ກົມກຽວກັບລະບົບເຄືອຂ່າຍຂອງລັດຖະບານ ເພື່ອອໍານວຍຄວາມສະດວກ ແລະ ສ້າງເງື່ອນໄຂການເຊື່ອມໂຍງການເກັບກໍາຂໍ້ມູນສະຖິຕິຂັ້ນບ້ານ;
- ຄົ້ນຄວ້າ ແລະ ພັດທະນາເຄື່ອງມືໃນການລາຍງານ ແລະ ເຜີຍແຜ່ຂໍ້ມູນໃນທຸກຂັ້ນ, ທຸກລະດັບໃຫ້ເປັນລະບົບ, ທັນສະໄໝ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;
- ສ້າງ, ປັບປຸງ ແລະ ສ້ອມແປງ ສໍານັກງານ-ຫ້ອງການ ສະຖານທີ່ເຮັດວຽກ ແລະ ສູນຂໍ້ມູນຂ່າວສານສະຖິຕິທາງການ ຂອງທົ່ວລະບົບສະຖິຕິແຫ່ງຊາດຢ່າງເໝາະສົມ ເທື່ອລະກ້າວ;

<u>**ແຜນງານ 5:**</u> ສະໜັບສະໜູນການນໍາໃຊ້ ແລະ ໝູນໃຊ້ຫຼັກມູນ, ມາດຕະຖານ, ລະບອບວິທີ ແລະ ການຈັດລຽງລະຫັດສາລະບານຕາມຫຼັກສາກົນ, ປັບຕາມເງື່ອນໄຂ ແລະ ສະພາບຄວາມເປັນຈິງຂອງປະເທດເຮົາເພື່ອກ້າວໄປສູ່ການຜະລິດທີ່ມີຄຸນນະພາບ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

<u>**ກິດຈະກໍາ:**</u>

- ຄົ້ນຄວ້າຂໍ້ກໍານົດ, ຫຼັກການ ແລະ ລະບຽບການຕ່າງໆ ທີ່ກ່ຽວກັບການຄຸ້ມຄອງຄຸນນະພາບສະຖິຕິທາງການ ໃນຂະບວນການຈັດຕັ້ງປະຕິບັດວຽກງານສະຖິຕິ ໃນລະບົບສະຖິຕິແຫ່ງຊາດ;
- ສ້າງມາດຕະຖານດ້ານຄຸນນະພາບສະຖິຕິ ເພື່ອນໍາໃຊ້ເຂົ້າໃນການກວດກາ ແລະ ຄຸ້ມຄອງຄຸນນະພາບການຜະລິດຂໍ້ມູນທາງການ;

- ສົ່ງເສີມການຜະລິດ ຂໍ້ມູນສະຖິຕິທາງການ ໃຫ້ສາມາດຕອບສະໜອງຄວາມຕ້ອງການພາຍໃນປະເທດ ແລະ ຮັບປະກັນການສົມທຽບກັບສາກົນໄດ້;
- ພັດທະນາ, ປັບປຸງ ແລະ ສົ່ງເສີມການນໍາໃຊ້ລະຫັດສາລະບານສະຖິຕິທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ສະຖິຕິ ເປັນຕົ້ນແມ່ນ ລະຫັດການປົກຄອງ (ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ); ການຈັດແບ່ງ ຂະແໜງເສດຖະກິດ ມາດຕະຖານສາກົນ (ISIC); ການຈັດແບ່ງໝວດ ແລະ ລະຫັດຂອງສິນຄ້າຕາມລະບົບເອກະພາບ (HS); ການຈັດແບ່ງໝວດສໍາລັບການຄ້າລະຫວ່າງປະເທດລະບົບມາດຕະຖານ (SITC); ການຈັດແບ່ງຜະລິດຕະພັນ (CPC); ການຈັດແບ່ງການໃຊ້ຈ່າຍຂອງລັດຖະບານ (COFOG); ການຈັດແບ່ງສະຖິຕິການເງິນແຫ່ງລັດ (GFS); ການຈັດແບ່ງການໃຊ້ຈ່າຍຂອງສະຖາບັນ ບໍ່ສະແຫວງຫາຜົນກໍາໄລ ກ່ຽວກັບການບໍລິການພາກຄົວເຮືອນ (COPNI); ການຈັດແບ່ງການໃຊ້ຈ່າຍຕາມຈຸດປະສົງຂອງສ່ວນບຸກຄົນໃນຄົວເຮືອນ (COICOP); ສະຖິຕິການຈັດແບ່ງຜະລິດຕະພັນຕາມຂະແໜງເສດຖະກິດ (CPA); ການຈັດປະເພດອີງຕາມຄ່າໃຊ້ຈ່າຍຂອງຜູ້ຜະລິດ ໂດຍອີງຕາມຈຸດປະສົງ (COPP); ການຈັດແບ່ງອາຊີບມາດຕະຖານສາກົນ (ISCO); ການຈັດແບ່ງໝວດຂະແໜງເສດຖະກິດແບບທົ່ວໄປ (BEC); ການຈັດແບ່ງສະຖານະພາບໃນການສ້າງວຽກເຮັດງານທໍາ (ICSE); ການຈັດແບ່ງເຊື້ອພະຍາດສາກົນ (ICD); ແລະ ລະຫັດສາລະບານອື່ນທີ່ສູນສະຖິຕິແຫ່ງຊາດ ສ້າງຂຶ້ນໃນແຕ່ລະໄລຍະ ເມື່ອມີຄວາມຈໍາເປັນ;
- ຕິດຕາມ, ປະເມີນຜົນ, ກວດກາ ແລະ ຄຸ້ມຄອງຄຸນນະພາບ ຂອງຂະບວນການຜະລິດຂໍ້ມູນສະຖິຕິທາງການ ຕາມຫຼັກວິທະຍາສາດສະຖິຕິ ລວມທັງການນໍາໃຊ້ຫຼັກການ, ນິຍາມ, ບົດແນະນໍາ ແລະ ລະບົບລະຫັດສາລະບານ ຕາມມາດຖານສາກົນ ເພື່ອຄວາມເປັນເອກະພາບຢູ່ພາຍໃນ, ຂົງເຂດ, ພາກພື້ນ ແລະ ສາກົນ;
- ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ສະຖິຕິ, ບັນດານິຕິກໍາທີ່ກ່ຽວຂ້ອງກັບສະຖິຕິ, ແຜນຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ, ໂຄງການທີ່ຖືກຮັບຮອງ ແລະ ການນໍາໃຊ້ຫຼັກການວິທະຍາສາດສະຖິຕິ ໃຫ້ທົ່ວລະບົບສະຖິຕິແຫ່ງຊາດ.

**<u>ແຜນງານ 6:</u>** ເພີ່ມທະວີ ການຜະລິດ, ການພັດທະນາ ຕົວຊີ້ບອກຂໍ້ມູນສະຖິຕິທາງການ ແບ່ງຕາມຂະແໜງສະຖິຕິໃນແຕ່ລະລະດັບ ທັງພາຍໃນ ແລະ ສາກົນ ໃນແຕ່ລະໄລຍະດ້ວຍຄຸນນະພາບ ແລະ ຄວາມໜ້າເຊື່ອຖື, ພ້ອມທັງເພີ່ມທະວີການນໍາໃຊ້ລະບົບGIS(Geographical Information System) ເຂົ້າໃນການຜະລິດຂໍ້ມູນ.

ເພື່ອເປັນທິດທາງ ແລະ ເພີ່ມປະສິດທິຜົນໃນການຈັດຕັ້ງປະຕິບັດວຽກງານສະຖິຕິຂອງລະບົບສະຖິຕິແຫ່ງຊາດ, ສູນສະຖິຕິແຫ່ງຊາດ ສົມທົບກັບບັນດາກະຊວງ, ອົງການທຽບເທົ່າ ແຕ່ສູນກາງຮອດທ້ອງຖິ່ນ ໃຫ້ກໍານົດປະເພດຂອງຂໍ້ມູນ, ແຫຼ່ງຂໍ້ມູນ, ວິທີການເກັບກໍາ ເຊັ່ນ: ການຈັດຕັ້ງປະຕິບັດການສໍາຫຼວດ ຫຼື ຄວາມເປັນໄປໄດ້ໃນການນໍາໃຊ້ຂໍ້ມູນຈາກຫຼາຍແຫຼ່ງ (Big Data) ເພື່ອການຜະລິດຂໍ້ມູນ, ລວມເຖິງການແບ່ງຄວາມຮັບຜິດຊອບລະຫວ່າງຜູ້ຜະລິດ ແລະ ຄົ້ນຄວ້າບັນດາຕົວຊີ້ບອກຕົ້ນຕໍຂອງບັນດາປະເພດສະຖິຕິຄື: ສະຖິຕິເສດຖະກິດ, ສະຖິຕິສັງຄົມ, ສະຖິຕິສິ່ງແວດລ້ອມ, ແລະ ສະຖິຕິຄວາມໝັ້ນຄົງ ຊຶ່ງໄດ້ແບ່ງອອກເປັນລະດັບຊາດ, ລະດັບຂະແໜງການ ແລະ ແຂວງ (ສໍາລັບຈໍານວນຂອງຕົວຊີ້ບອກທີ່ຈະຜະລິດ ແມ່ນສະເໜີໃຫ້ເບິ່ງໃນເອກະສານຊ້ອນທ້າຍ II);

ໃນຂໍ້ 6.1-6.23 ແມ່ນການນໍາສະເໜີ ແຜນງານ ແລະ ກິດຈະກໍາລວມ ທີ່ຈໍາເປັນໃນການຜະລິດ ແລະ ການບໍລິການຂໍ້ມູນໃນແຕ່ລະຂົງເຂດສະຖິຕິ. ເນື່ອງຈາກແຜນງານທີ 6 ເປັນແຜນງານກ່ຽວຂ້ອງກັບການຜະລິດຂໍ້ມູນສະຖິຕິ, ດັ່ງນັ້ນ ແຜນງານທີ 6 ຈຶ່ງເປັນແຜນງານທີ່ກອມເອົາຫຼາຍກິດຈະກໍາ ເມື່ອທຽບໃສ່ 14 ແຜນງານອື່ນໆ. ບັນດາກິດຈະກໍາທີ່ນອນໃນແຜນງານ ຍັງມີລັກສະນະທິດທາງລວມ ໂດຍອີງໃສ່ຍຸດທະສາດຂອງບັນດາກະຊວງຈໍານວນໜຶ່ງທີ່ມີໃນປະຈຸບັນ, ສ່ວນລາຍລະອຽດຈະໄດ້ສົມທົບກັບກະຊວງ ແລະຂະແໜງການທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍເປັນແຜນງານ ແລະ ໂຄງການສະເພາະ ໃນແຕ່ລະຂະແໜງການ ຊຶ່ງຈະໄດ້ລະບຸລະອຽດໃນປຶ້ມແນະນໍາການຈັດຕັ້ງປະຕິບັດຍຸດທະສາດ.

### 6.1. ການປັບປຸງ ແລະ ສ້າງຄວາມເຂັ້ມແຂງ ລະບົບເກັບກໍາຂໍ້ມູນຂ່າວສານ

- ປັບປຸງລະບົບ ແລະ ວິທີການການເກັບກໍາຂໍ້ມູນ ໂດຍການສຶກສາຄົ້ນຄວ້າເຖິງຄວາມເປັນໄປໄດ້ທີ່ມີປະສິດທິຜົນທີ່ສູງສຸດ ໃນການນໍາໃຊ້ການເກັບກໍາຂໍ້ມູນ ດ້ວຍການລາຍງານແບບລະບົບບໍລິຫານ ແລະ ການສໍາຫຼວດ (ການສໍາຫຼວດໃຫຍ່ ແລະ ຕົວແທນ) ເພື່ອໃຫ້ສາມາດຕອບສະໜອງຂໍ້ມູນຕາມຕົວຊີ້ບອກທີ່ກໍານົດໄວ້ (ລະດັບຊາດ, ຂະແໜງການ ກໍ່ຄືແຂວງ) ໃຫ້ໄດ້ຕາມຄາດໝາຍໃນແຕ່ລະໄລຍະ;
- ປັບປຸງ ແລະ ສ້າງລະບົບຂໍ້ມູນຂ່າວສານທີ່ມີຄ່າສິ້ນເປືອງຕໍ່າສຸດ ແລະ ມີປະສິດທິຜົນສູງສຸດ, ການປັບປຸງໃຫ້ລະບົບການລາຍງານທີ່ເປັນໜຶ່ງດຽວ ໂດຍອີງໃສ່ ການລາຍງານຂອງບ້ານ ສໍາລັບບາງຂໍ້ມູນທີ່ເປັນອັນລວມ, ສ່ວນຂໍ້ມູນທີ່ເປັນອັນສະເພາະ ແມ່ນອີງໃສ່ຄວາມເປັນຈິງຂອງຂະແໜງການ;
- ປັບປຸງລະບົບຂໍ້ມູນຂ່າວສານຂອງບັນດາກະຊວງ ໂດຍອີງໃສ່ ການລາຍງານແບບບໍລິຫານ ລວມທັງການປັບປຸງເຄື່ອງມືການເກັບກໍາ ແລະ ສັງລວມ;
- ຄົ້ນຄວ້າສຶກສາ ແລະ ກໍານົດວິທີການ, ຂັ້ນຕອນການຄວບຄຸມຄຸນນະພາບ ເພື່ອຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ທັນເວລາຂອງລະບົບການເກັບກໍາຂໍ້ມູນ
- ນອກຈາກການເກັບກໍາຂໍ້ມູນ ດ້ວຍວິທີການລາຍງານຕາມລະບົບບໍລິຫານແລ້ວ, ຍັງຕ້ອງໄດ້ຄົ້ນຄວ້າ ແລະ ອອກແບບການເກັບກໍາຂໍ້ມູນ ດ້ວຍວິທີການສໍາຫຼວດທີ່ເໝາະສົມ ເພື່ອຈັດຕັ້ງປະຕິບັດການເກັບກໍາຂໍ້ມູນໃນແຕ່ລະໄລຍະ ໃຫ້ສາມາດບັນລຸຕາມຄາດໝາຍທີ່ໄດ້ກໍານົດໄວ້ໃນຍຸດທະສາດສະບັບນີ້ ພ້ອມກັບການສໍາຫຼວດເພື່ອກໍລະນີສຶກສາເພີ່ມຕື່ມຖ້າມີຄວາມຈໍາເປັນ. ບັນດາກິດຈະກໍາທີ່ຈໍາເປັນປະກອບມີ:
  - ຈັດຕັ້ງປະຕິບັດບັນດາກິດຈະກໍາ ການສໍາຫຼວດພື້ນຖານ ທີ່ໄດ້ກໍານົດໄວ້ ໃນຄາດໝາຍສູ້ຊົນ 6 (ຄາດໝາຍ 6.1 ແລະ 6.2) ໃນແຕ່ລະໄລຍະ;
  - ປະເມີນບັນດາການສໍາຫຼວດທີ່ກ່ຽວຂ້ອງ ປະຈໍາງວດ ແລະ ປີ, ແລະ ປັບປຸງການອອກແບບຕົວແທນ ເພື່ອຮັບປະກັນຄວາມສອດຄ່ອງດ້ານເຕັກນິກ ແລະ ການນໍາໃຊ້ຜົນສໍາລັບການຄິດໄລ່ບັນຊີແຫ່ງຊາດ ແລະ ສະຖິຕິທະບຽນ;
  - ສຶກສາ, ຄົ້ນຄວ້າ ແລະ ປັບປຸງ ບັນດາແບບສອບຖາມ ແລະ ລະບອບວິທີຂອງການສໍາຫຼວດຄົວເຮືອນປະຈໍາປີ, ວິສາຫະກິດ (ງວດ ແລະ ປີ) ເພື່ອຄວາມສອດຄ່ອງ ແລະ ຄວາມຄົບຖ້ວນ ຮັບປະກັນການເກັບກໍາຂໍ້ມູນໄດ້ຕາມຄວາມຕ້ອງການ ໃນການປັບປຸງການຄິດໄລ່ການບັນຊີແຫ່ງຊາດ;
  - ສ້າງຍຸດທະສາດການອອກແບບຕົວແທນ ສໍາລັບການສໍາຫຼວດ ປະຈໍາງວດ, ປີ ແລະ 5 ປີ ລວມທັງເພີ່ມຕົວແທນການສໍາຫຼວດຄົວເຮືອນປະຈໍາປີເພື່ອໃຫ້ສາມາດດໍາເນີນການສໍາຫຼວດ

ໃນພາກທີ່ກ່ຽວຂ້ອງກັບການສຶກສາ, ການຮູ້ໜັງສື, ແຮງງານຄວາມປອດໄພ ແລະ ຕົວປ່ຽນອື່ນໆທີ່ກ່ຽວພັນກັບສັງຄົມ ແລະ ປະຊາກອນສາດ ທີ່ຈຳເປັນຕ້ອງໄດ້ຕິດຕາມຜົນກະທົບໃນໄລຍະ 4-6 ປີ;

- ປັບປຸງການສຳຫຼວດປະຈຳງວດ ແລະ ປີ ບັນຫາຫົວໜ່ວຍທຸລະກິດ ແລະ ຫ້າງຮ້ານ; ປັບປຸງ ແລະ ສ້າງລະບົບສະຖິຕິການຂຶ້ນທະບຽນ ໂດຍຜ່ານການປະສານສົມທົບ ແລະ ເຮັດວຽກຮ່ວມກັບບັນດາກະຊວງ ເພື່ອກະກຽມເຂົ້າໃນ ການສຳຫຼວດເສດຖະກິດທົ່ວປະເທດ (ປີ 2018 ແລະ 2023);
- ປະເມີນຕົວຊີ້ບອກທີ່ກ່ຽວກັບສິ່ງແວດລ້ອມ, ເງື່ອນໄຂການຫຼຸດພົ້ນອອກຈາກ ປະເທດດ້ອຍພັດທະນາ (LDCs) ແລະ ການພັດທະນາແບບຍືນຍົງ (SDGIs) ທີ່ສາມາດສັງລວມໄດ້ ຈາກບັນດາການສຳຫຼວດຕ່າງໆທີ່ກຳນົດໃນຍຸດທະສາດ. ພ້ອມທັງສຶກສາ, ຄົ້ນຄ້ວາເຕັກນິກລະບອບວິທີ ແລະ ອອກແບບການສຳຫຼວດອື່ນໆທີ່ຍັງບໍ່ສາມາດສັງລວມໄດ້ ເພື່ອຮັບປະກັນການລາຍງານໃຫ້ແກ່ການຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ ແລະ 5 ປີ, ຕອບສະໜອງໃຫ້ແກ່ການສ້າງບົດລາຍງານການພັດທະນາແບບຍືນຍົງ ແລະ ການປະເມີນການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ;

- ສ້າງເອກະສານລະອຽດກ່ຽວກັບການສຳຫຼວດ, ຂັ້ນຕອນ ແລະ ວິທີການຕ່າງໆ, ການປ່ຽນແປງໃນແຕ່ລະການສຳຫຼວດ (ຖ້າມີ) ເປັນຕົ້ນແມ່ນ ຕົວແທນຂອງການສຳຫຼວດ, ໃບສອບຖາມ, ເນື້ອໃນ ນິຍາມ ແລະ ວິທີການສຳຫຼວດ;
- ຈັດຕັ້ງປະຕິບັດການຄົ້ນຄວ້າ-ວິໄຈ ໂດຍມີໃຫ້ສາມາດເຊື່ອມໂຍງກັບ ການປັບປຸງການເກັບກຳຂໍ້ມູນຂ່າວສານ ແທນທີ່ຈະເປັນພຽງແຕ່ການຄົ້ນຄວ້າແຕ່ພຽງຢ່າງດຽວ;
- ເພີ່ມທະວີການນຳໃຊ້ລະບົບ GIS ໃນການຜະລິດຂໍ້ມູນ.

## 6.2. ສະຖິຕິກະສິກຳ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ, ສູ້ຊົນໃຫ້ສາມາດລາຍງານສະຖິຕິປະຈຳງວດຢ່າງເປັນປົກກະຕິ ສຳລັບບາງຜົນຜະລິດໃນຂະແໜງກະສິກຳ; ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກ ຂອງຂະແໜງການ;
- ຈັດຕັ້ງປະຕິບັດການສຳຫຼວດສະຖິຕິກະສິກຳ ແບບຕົວແທນທີ່ຈຳເປັນ ແລະ ເປັນພື້ນຖານໃຫ້ແກ່ການວາງນະໂຍບາຍ, ແຜນພັດທະນາ ແລະ ຄົ້ນຄວ້າສຶກສາຂະແໜງການກະສິກຳ ເຊັ່ນ: ການສຳຫຼວດຕົວແທນກ່ຽວກັບ ເຂົ້າ ແລະ ພືດຕົ້ນຕໍ, ການສຳຫຼວດຕົວແທນກ່ຽວກັບ ສັດ, ການສຳຫຼວດເນື້ອທີ່ປ່າໄມ້, ເນື້ອທີ່ປູກຝັງກະສິກຳ ຫຼື ເນື້ອທີ່ສຳລັບຂະແໜງກະສິກຳເປັນຕົ້ນ;
- ຈັດຕັ້ງປະຕິບັດການສຳຫຼວດ ປະຈຳງວດ ແລະ ປະຈຳປີ ກ່ຽວກັບສະຖິຕິລາຄາຜູ້ຜະລິດກະສິກຳ ເພື່ອໃຫ້ສາມາດປະເມີນມູນຄ່າການຜະລິດຂະແໜງກະສິກຳຮັບໃຊ້ເຂົ້າໃນການບັນຊີແຫ່ງຊາດ;
- ສ້າງຕັ້ງລະບົບການສົ່ງຖ່າຍຂໍ້ມູນ ຈາກທ້ອງຖິ່ນຫາສູນກາງ ເພື່ອຮັບປະກັນໃຫ້ວ່ອງໄວທັນເວລາ, ຄົບຖ້ວນ, ຊັດເຈນ ແລະ ສາມາດກວດສອບຕາມຫຼັກວິຊາການສະຖິຕິ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນ ເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;

- ຈັດຕັ້ງປະຕິບັດການຄາດຄະເນຜົນຜະລິດ ພືດ, ສັດ ແລະ ປ່າໄມ້ ນັບທັງການຄິດໄລ່ມູນຄ່າເພີ່ມຂະແໜງກະສິກຳ ເພື່ອຕອບສະໜອງຕາມຄວາມຕ້ອງການ ຂອງຜູ້ວາງນະໂຍບາຍ, ຜູ້ວາງແຜນ ກໍ່ຄືຜູ້ຄົ້ນຄວ້າສຶກສາຂະແໜງກະສິກຳ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ;
- ປັບປຸງການປະສານງານ ແລະ ການຮ່ວມມືລະຫວ່າງບັນດາອົງການ ພາຍໃນລັດຖະບານທີ່ມີສ່ວນຮ່ວມໃນຄວາມຮັບຜິດຊອບຜະລິດສະຖິຕິ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ;
- ຈັດຫາແຫຼ່ງງົບປະມານຂອງ ລັດຖະບານ ແລະ ການສະໜັບສະໜູນ (ສະໜັບສະໜູນດ້ານການເງິນ ແລະ ວິຊາການ) ຮັບໃຊ້ໃນການສຳຫຼວດ ເວົ້າລວມ, ເວົ້າສະສະເພາະແມ່ນ ການສຳຫຼວດສະຖິຕິກະສິກຳທົ່ວປະເທດໃນທຸກໆ 10 ປີ.

### 6.3. ສະຖິຕິອຸດສາຫະກຳ (ຂຸດຄົ້ນບໍ່ແຮ່,ອຸດສາຫະກຳປຸງແຕ່ງ,ຫັດຖະກຳແລະພະລັງງານ)

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ ຕາມຕົວຊີ້ບອກທີ່ໄດ້ກຳນົດເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະທ້ອງຖິ່ນໃນແຕ່ລະໄລຍະ, ສູ້ຊົນໃຫ້ສາມາດລາຍງານສະຖິຕິປະຈຳງວດຢ່າງເປັນປົກກະຕິ, ຄຽງຄູ່ກັນນັ້ນຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ປັບປຸງລະບົບການຕິດຕາມ ແລະ ເກັບກຳຂໍ້ມູນຂ່າວສານສຳລັບສະຖິຕິອຸດສາຫະກຳ ໃຫ້ເປັນລະບົບ, ມີປະສິດທິພາບ ແລະ ປະສິດທິຜົນ; ຮັບປະກັນຄວາມຄົບຖ້ວນ, ລະອຽດ, ຈະແຈ້ງ ໂດຍອີງໃສ່ຫຼັກການ ແລະ ມາດຖານສາກົນ, ພ້ອມກັບສົ່ງເສີມການນຳໃຊ້ລະຫັດສາລະບານໃຫ້ເປັນລະບົບ;
- ປັບປຸງ ສະຖິຕິການຂຶ້ນທະບຽນ ໃຫ້ເປັນລະບົບ, ຈັດຕັ້ງປະຕິບັດການສຳຫຼວດຫົວໜ່ວຍວິສາຫະກິດ ປະຈຳງວດ ແລະ ປີ ແລະ ສຳຫຼວດເສດຖະກິດທົ່ວປະເທດ ທຸກໆ 5 ປີ;
- ສ້າງລະບົບການເກັບກຳຂໍ້ມູນ ໃຫ້ເປັນເອກະພາບທາງດ້ານ ວິທີການ, ເຕັກນິກ, ແລະ ນິຍາມລວມທັງບົດບາດໃນການຜະລິດຂໍ້ມູນ;
- ສ້າງລະບົບເກັບກຳ, ສັງລວມ ແລະ ຜະລິດສະຖິຕິອຸດສາຫະກຳ ໃນເຂດເສດຖະກິດພິເສດ ແລະ ສະເພາະ ເພື່ອຮັບໃຊ້ການປະເມີນການປະກອບສ່ວນຂອງເຂດດັ່ງກ່າວ ເຂົ້າໃນການຂະຫຍາຍຕົວຂອງເສດຖະກິດ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນ ເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຕັ້ງລະບົບການສົ່ງຖ່າຍຂໍ້ມູນຈາກທ້ອງຖິ່ນຮອດສູນກາງ ເພື່ອຮັບປະກັນໃຫ້ວ່ອງໄວ, ທັນເວລາ, ຊັດເຈນ ແລະ ມີການປະເມີນທາງດ້ານສະຖິຕິ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ;
- ປັບປຸງການປະສານງານ ແລະ ການຮ່ວມມືລະຫວ່າງບັນດາອົງການພາຍໃນລັດຖະບານ ທີ່ມີສ່ວນຮ່ວມໃນຄວາມຮັບຜິດຊອບຜະລິດສະຖິຕິໃນຂັ້ນສູນກາງ ແລະ ທ້ອງຖິ່ນ, ທ້ອງຖິ່ນກັບທ້ອງຖິ່ນ;

- ເປັນເຈົ້າການໃນການປະສານສົມທົບ, ຈັດຫາແຫຼ່ງງົບປະມານຂອງລັດຖະບານ ແລະ ການລະດົມການຊ່ວຍເຫຼືອ ໃນການຈັດຕັ້ງປະຕິບັດການຜະລິດສະຖິຕິ ກໍ່ຄືການສໍາຫຼວດເສດຖະກິດ, ວິສາຫະກິດໃນແຕ່ລະໄລຍະ.

## 6.4. ສະຖິຕິການຄ້າພາຍໃນ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ ຕາມຕົວຊີ້ບອກທີ່ໄດ້ກໍານົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ, ສູ້ຊົນໃຫ້ສາມາດລາຍງານສະຖິຕິປະຈໍາງວດຢ່າງເປັນປົກກະຕິ, ຄຽງຄູ່ກັນນັ້ນຕ້ອງດໍາເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ຈັດຕັ້ງປະຕິບັດການສໍາຫຼວດສະເພາະ ຫຼື ປະຈໍາປີ ຫາກຈໍາເປັນ ເພື່ອຮັບໃຊ້ການຜະລິດຕົວຊີ້ບອກໃນຂະແໜງການດັ່ງກ່າວ;
- ປັບປຸງການຕອບສະໜອງຂໍ້ມູນໃຫ້ທັນເວລາ ແລະ ຈັດຕັ້ງປະຕິບັດລົງເລິກການວິໄຈ ແລະ ການນໍາສະເໜີຂໍ້ມູນສະຖິຕິທາງການ;
- ຄົ້ນຄ້ວາ ແລະ ພັດທະນາລະບົບການເກັບກໍາ, ລາຍງານ ເພື່ອໃຫ້ມີປະສິດທິພາບ ແລະ ສົ່ງເສີມການນໍາໃຊ້ລະຫັດສາລະບານໃຫ້ນັບມື້ກວ້າງຂວາງ;
- ສ້າງຖານຂໍ້ມູນ ແລະ ເອກະສານສໍານວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສໍາລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ເປັນເຈົ້າການໃນການປະສານສົມທົບ ແລະ ຈັດສັນຫາແຫຼ່ງງົບປະມານ ໃນການຈັດຕັ້ງປະຕິບັດການຜະລິດສະຖິຕິຕາມກອບຄວາມຮັບຜິດຊອບໃນແຕ່ລະໄລຍະ.

## 6.5. ສະຖິຕິຄົມມະນາຄົມ, ຂົນສົ່ງ, ໄປສະນີ, ໂທລະຄົມມະນາຄົມ, ກໍ່ສ້າງ ແລະສະຖິຕິອື່ນໆ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງ ໃຫ້ໄດ້ຕາມຕົວຊີ້ບອກທີ່ໄດ້ກໍານົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນຕ້ອງດໍາເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ຈັດຕັ້ງປະຕິບັດການສໍາຫຼວດສະເພາະ ຫຼື ປະຈໍາປີ ຫາກຈໍາເປັນ ເພື່ອຮັບໃຊ້ການຜະລິດຕົວຊີ້ບອກໃນຂະແໜງການດັ່ງກ່າວ;
- ປັບປຸງການຕອບສະໜອງຂໍ້ມູນໃຫ້ທັນເວລາ ແລະ ຈັດຕັ້ງປະຕິບັດລົງເລິກການວິໄຈ ແລະ ການນໍາສະເໜີຂໍ້ມູນສະຖິຕິທາງການ;
- ຄົ້ນຄ້ວາ ແລະ ພັດທະນາລະບົບການເກັບກໍາ, ລາຍງານ ເພື່ອໃຫ້ມີປະສິດທິພາບ ແລະ ສົ່ງເສີມການນໍາໃຊ້ລະຫັດສາລະບານໃຫ້ນັບມື້ກວ້າງຂວາງ;
- ສ້າງສະຖິຕິການຂຶ້ນທະບຽນພາຫະນະຂົນສົ່ງ;
- ສ້າງຖານຂໍ້ມູນ ແລະ ເອກະສານສໍານວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສໍາລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກໍາຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ;
- ເປັນເຈົ້າການໃນການປະສານສົມທົບ ແລະ ຈັດສັນຫາແຫຼ່ງງົບປະມານ ໃນການຈັດຕັ້ງປະຕິບັດການຜະລິດສະຖິຕິຕາມກອບຄວາມຮັບຜິດຊອບໃນແຕ່ລະໄລຍະ.

## 6.6. ສະຖິຕິທ່ອງທ່ຽວ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ ດັ່ງກ່າວ ໂດຍສະເພາະແມ່ນ ຂໍ້ມູນທີ່ຕິດພັນກັບສະຖິຕິການຄ້າດ້ານການບໍລິການ;
- ພັດທະນາເກັບກຳ (ການສຳຫຼວດ ແລະ ການລາຍງານບໍລິຫານ) ແລະ ການວິໄຈຂໍ້ມູນສະຖິຕິການທ່ອງທ່ຽວ ຂອງ ສປປ ລາວ ຢ່າງເປັນປົກກະຕິ ແລະ ສອດຄ່ອງກັບຫຼັກການ ແລະ ມາດຖານສາກົນ ລວມທັງການນຳໃຊ້ລະບົບລະຫັດສາລະບານ ເພື່ອຄວາມສາມາດໃນການສົມທຽບ
- ຈັດຕັ້ງປະຕິບັດການສຳຫຼວດສະເພາະ ຫຼື ປະຈຳປີ ຫາກຈຳເປັນ ເພື່ອເກັບກຳຂໍ້ມູນການໃຊ້ຈ່າຍຂອງນັກທ່ອງທ່ຽວທີ່ເຂົ້າມາພາຍໃນປະເທດ ແລະ ເດີນທາງໄປຕ່າງປະເທດ ໂດຍແບ່ງຕາມປະເພດ ເຊັ່ນ: ຄ່າເດີນທາງ, ຄ່າທີ່ພັກ, ຄ່າອາຫານ ແລະ ເຄື່ອງດື່ມ, ຄ່າການບັນເທີງ, ຄ່າຊື້ເຄື່ອງທີ່ລະລຶກ, ຂອງຝາກຂອງຕ້ອນ, ຜະລິດຕະພັນທ້ອງຖິ່ນ, ຄ່າຜ່ານດ່ານ ຫຼື ຄ່າວີຊາ (ຂຶ້ນກັບແຕ່ລະປະເທດ), ການບໍລິຈາກ ຫຼື ການເຮັດບຸນຕ່າງໆ ເປັນຕົ້ນ ເພື່ອຮັບໃຊ້ປະເມີນທາງດ້ານເສດຖະກິດ ແລະ ຜົນປະໂຫຍດຂອງຂະແໜງການຕໍ່ສັງຄົມ ພ້ອມທັງເປັນການເພີ່ມການວິໄຈ ແລະ ຜະລິດຕົວຊີ້ບອກໃນຂະແໜງການດັ່ງກ່າວ;
- ສ້າງສູນຂໍ້ມູນຂ່າວສານການທ່ອງທ່ຽວ ຂອງ ສປປ ລາວ ຢູ່ນະຄອນຫຼວງວຽງຈັນ;
- ສົ່ງເສີມໃຫ້ມີການນຳໃຊ້ຂໍ້ມູນ ຈາກການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ແລະ ການສຳຫຼວດວິສາຫະກິດ ໃນການຄິດໄລ່ຂໍ້ມູນທາງດ້ານການສະໜອງ (ການທ່ອງທ່ຽວພາຍໃນ) ລວມກັນກັບການຄິດໄລ່ເບື້ອງຄວາມຕ້ອງການ (ການທ່ອງທ່ຽວຕ່າງປະເທດ);
- ສ້າງ ແລະ ຄິດໄລ່ບັນຊີການສັງລວມຂະແໜງທ່ອງທ່ຽວ ແລະ ເຊື່ອມໂຍງກັບເຄືອຂ່າຍທ່ອງທ່ຽວໃນຂົງເຂດອ່າງໂຕ່ງແມ່ນ້ຳຂອງ, ອາຊຽນ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສຶກສາຄົ້ນຄ້ວາ, ສ້າງລະບົບໂປຣແກຣມ ແລະ ສ້າງຄວາມເຂັ້ມແຂງ ໃນການນຳໃຊ້ລະບົບສະຖິຕິການທ່ອງທ່ຽວຂອງອົງການທ່ອງທ່ຽວໂລກເຂົ້າໃນການເກັບກຳຂໍ້ມູນດ້ານສະຖິຕິການທ່ອງທ່ຽວ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ;
- ເປັນເຈົ້າການໃນການປະສານສົມທົບ ແລະ ຈັດຫາແຫຼ່ງງົບປະມານ ໃນການຈັດຕັ້ງປະຕິບັດການຜະລິດສະຖິຕິ ກໍ່ຄືການສຳຫຼວດນັກທ່ອງທ່ຽວ.

## 6.7. ສະຖິຕິການລົງທຶນ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ຈັດຕັ້ງຄະນະ ຫຼື ໜ່ວຍງານເຮັດວຽກສະຖິຕິການລົງທຶນລະຫວ່າງປະເທດ ໂດຍຜ່ານກົນໄກການປະສານງານ ແລະ ໜ່ວຍງານວິຊາການ ລະຫວ່າງສູນສະຖິຕິແຫ່ງຊາດ, ທະນາຄານແຫ່ງ ສປປ ລາວ, ກົມສົ່ງເສີມການລົງທຶນ, ແລະ ພາກສ່ວນທີ່ກ່ຽວຂ້ອງກັບສະຖິຕິການລົງທຶນ ເຊັ່ນ: ກະຊວງອຸດສາຫະກຳ ແລະ ການຄ້າ, ຫ້ອງການຄຸ້ມຄອງເສດຖະກິດພິເສດ ແລະ ເສດຖະກິດສະ

ເພາະ ເປັນຕົ້ນ ເພື່ອຮັບປະກັນຄຸນນະພາບຂອງຂໍ້ມູນ ແລະ ການລາຍງານຂໍ້ມູນທີ່ມີປະສິດທະພາບ ສາມາດຕິດຕາມໄດ້ພ້ອມກັບຮ່ວມກັນພັດທະນາລະບົບຂໍ້ມູນ;
- ຄົ້ນຄວ້າ ແລະ ປັບປຸງວິທີການເກັບກຳຂໍ້ມູນເພື່ອຕິດຕາມ ແລະ ປະເມີນການລົງທຶນ ໂດຍນຳໃຊ້ລະບົບການລາຍງານແບບບໍລິຫານ ແລະ ການສຳຫຼວດຕ່າງໆ, ແລະ ສົ່ງເສີມການນຳໃຊ້ລະຫັດສາລະບານໃຫ້ນັບມື້ກວ້າງຂວາງ;
- ປັບປຸງສະຖິຕິການລົງທຶນຕ່າງປະເທດ ໂດຍການ ອອກແບບ ແລະ ສ້າງເຄື່ອງມື (ແບບຟອມເກັບກຳ, ຄູ່ມືແນະນຳ ແລະ ວິທີການປະຕິບັດ) ການສຳຫຼວດ ພ້ອມທັງໃຫ້ມີການປະສານສົມທົບ ກັບສູນສະຖິຕິແຫ່ງຊາດ ເພື່ອໃຫ້ສາມາດເກັບກຳຂໍ້ມູນການລົງທຶນລະຫວ່າງປະເທດ ແລະ ໜີ້ສິນລະຫວ່າງປະເທດ ເພື່ອຈັດສັນເຂົ້າສູ່ລະບົບບັນຊີ (ບັນຊີແຫ່ງຊາດ) ກໍ່ຄືການນຳໃຊ້ໃນການປະເມີນໃນວຽກງານການບັນຊີແຫ່ງຊາດ ລວມທັງການປະເມີນ ໃນດູນການຊຳລະລະຫວ່າງປະເທດ ເພີ່ມຄວາມສອດຄ່ອງໃນການຄາດຄະເນ ແລະ ຕິດຕາມສະພາບເສດຖະກິດ;
- ປັບປຸງ, ແລະ ສ້າງກົນໄກການປະສານງານ ລວມທັງ ເຄື່ອງມື ເພື່ອເກັບກຳຂໍ້ມູນສະຖິຕິການລົງທຶນໃນແຕ່ລະພາກສ່ວນ ເພື່ອຕິດຕາມສະພາບການລົງທຶນ ແລະ ສະໜອງຂໍ້ມູນດັ່ງກ່າວໃຫ້ແກ່ພາຍໃນ, ພາກພື້ນ ແລະ ສາກົນ;
- ປັບປຸງ ແລະ ກຳນົດບັນດາຕົວຊີ້ບອກທີ່ກ່ຽວຂ້ອງ ໂດຍອີງໃສ່ກົດໝາຍການລົງທຶນ ແລະ ຄຳນຶງເຖິງຄວາມສອດຄ່ອງ ແລະ ຄວາມຕ້ອງການທາງດ້ານຂໍ້ມູນການລົງທຶນ ຂອງສາກົນ ແລະຂໍ້ມູນການປະຕິບັດການລົງທຶນຕົວຈິງ;
- ຈັດຕັ້ງປະຕິບັດການສຳຫຼວດຖານະການລົງທຶນ ແລະ ໜີ້ສິນລະຫວ່າງປະເທດໃນທຸກໆປີ ເພື່ອຕິດຕາມ ແລະ ປະເມີນການເຄື່ອນໄຫວການລົງທຶນໃນປະເທດ ແລະ ຕ່າງປະເທດ ພ້ອມທັງເປັນບ່ອນອີງໃນການຜະລິດຕົວຊີ້ບອກອື່ນໆ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດໃຫ້ພະນັກງານນັບແຕ່ສູນກາງຮອດທ້ອງຖິ່ນກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

## 6.8. ສະຖິຕິການຊ່ວຍເຫຼືອລ້າດ້ານວິຊາການຈາກຕ່າງປະເທດ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ຄົ້ນຄ້ວາ ແລະ ພັດທະນາລະບົບການເກັບກຳຂໍ້ມູນ, ແລະ ລາຍງານຂໍ້ມູນ ລະຫວ່າງຂະແໜງການນັບແຕ່ສູນກາງຮອດທ້ອງຖິ່ນ ໃຫ້ມີປະສິດທິພາບ ແລະ ສົ່ງເສີມການນຳໃຊ້ລະຫັດສາລະບານໃຫ້ນັບມື້ກວ້າງຂວາງ;
- ສ້າງ ແລະຈັດພິມເຜີຍແຜ່ຂໍ້ມູນ ການຊ່ວຍເຫຼືອດ້ານວິຊາການ ໂດຍກວມເອົາໂຄງການ, ການຊ່ວຍເຫຼືອທັງໝົດ, ເກັບກຳສັງລວມໃຫ້ໄດ້ຂໍ້ມູນການຈັດຕັ້ງປະຕິບັດຕົວຈິງ ແບ່ງຕາມຂະແໜງການ, ຕາມເງື່ອນໄຂການຊ່ວຍເຫຼືອ, ອັດຕາສ່ວນການຊ່ວຍເຫຼືອ ເພື່ອບັນລຸການສ້າງຄວາມອາດສາມາດດ້ານການຄ້າ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;

- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

### 6.9. ສະຖິຕິການຄ້າຕ່າງປະເທດ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນໃຫ້ທັນເວລາ ນັບແຕ່ສູນກາງຮອດທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ຈັດຕັ້ງຄະນະ ຫຼື ໜ່ວຍງານເຮັດວຽກສະຖິຕິການຄ້າ (ສິນຄ້າ ແລະ ການບໍລິການ) ລະຫວ່າງປະເທດ ໂດຍຜ່ານກົນໄກການປະສານງານທີ່ເປັນເອກະພາບ ແລະ ໜ່ວຍງານວິຊາການລະຫວ່າງ ສູນສະຖິຕິແຫ່ງຊາດ , ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ ເພື່ອຮັບປະກັນການລາຍງານຂໍ້ມູນທີ່ເປັນເອກະພາບຂອງ 4 ພາກສ່ວນກ່ຽວຂ້ອງ ແລະ ຮ່ວມກັນພັດທະນາລະບົບຂໍ້ມູນ;
- ຄົ້ນຄວ້າ ແລະ ປັບປຸງລະບົບການເກັບກຳ, ສັງລວມ ແລະ ລາຍງານ ຂໍ້ມູນການນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ໃຫ້ສາມາດລາຍງານ ແລະ ເຜີຍແຜ່ຂໍ້ມູນສະຖິຕິການຄ້າຕ່າງປະເທດ, ຮັບປະກັນການລາຍງານໃຫ້ແກ່ອາຊຽນ ແລະ ຮັບໃຊ້ການຜະລິດສະຖິຕິບັນຊີແຫ່ງຊາດໃຫ້ທັນເວລາ;
- ນຳໃຊ້ຫຼັກການ, ບົດແນະນຳ, ແລະ ລະບົບລະຫັດສາລະບານມາດຖານສາກົນ ແລະ ພາກພື້ນແນະນຳ ເຊັ່ນ: ອັດຕາພາສີລະບົບເອກະພາບອາຊຽນໃນລະດັບ 8 ຕົວເລກ, ລະບົບເອກະພາບ (Hamonized System: HS) ແລະ ອື່ນໆທີ່ກ່ຽວຂ້ອງ ເພື່ອປັບປຸງລະບົບການຜະລິດ ແລະ ລາຍງານຂໍ້ມູນ;
- ຈັດຕັ້ງປະຕິບັດການສຳຫຼວດປະຈຳປີ ຫຼື ການສຳຫຼວດສະເພາະ ຫາກຈຳເປັນ ເພື່ອຮັບໃຊ້ການຜະລິດຕົວຊີ້ບອກໃນຂະແໜງການດັ່ງກ່າວ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານນັບແຕ່ສູນກາງຮອດທ້ອງຖິ່ນກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

### 6.10. ສະຖິຕິດຸນການຊຳລະລະຫວ່າງປະເທດ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ພັດທະນາລະບົບເກັບກຳ, ສັງລວມບັນຊີດຸນການຊຳລະລະຫວ່າງປະເທດ ແລະບັນຊີຍ່ອຍທີ່ຂຶ້ນກັບ, ຮັບປະກັນດ້ານເຕັກນິກ ແລະຄຸນນະພາບຂອງບັນດາຕົວຊີ້ບອກ ເພື່ອສະໜອງເຂົ້າໃນການຜະລິດສະຖິຕິບັນຊີແຫ່ງຊາດ ແລະການວັດແທກລວມຍອດລາຍຮັບແຫ່ງຊາດ (GNI);
- ພ້ອມດຽວກັນນັ້ນ, ຮັບປະກັນການລາຍງານເຂົ້າໃນການຜະລິດ ສະຖິຕິບັນຊີແຫ່ງຊາດ, ຊົມໃຊ້ພາຍໃນອື່ນໆ, ພາກພື້ນ ແລະສາກົນ ໃຫ້ທັນເວລາ. ຈັດຕັ້ງປະຕິບັດລົງເລິກການວິໄຈ ແລະ ການນຳສະເໜີຂໍ້ມູນສະຖິຕິທາງການ;

- ຈັດຕັ້ງປະຕິບັດການສຳຫຼວດເພື່ອເກັບກຳລາຍຮັບ ແລະການບໍລິການ ແລະ ການສຳຫຼວດອື່ນໆ ທີ່ເຫັນວ່າຈຳເປັນເພື່ອຮັບໃຊ້ໃນການປັບປຸງຄຸນນະພາບຂອງບັນຊີການຊຳລະລະຫວ່າງປະເທດ;
- ນຳໃຊ້ຄູ່ມືການຄິດໄລ່ດູນການຊຳລະສະສາງກັບຕ່າງປະເທດ ລຸ້ນ 6 ຂອງສາກົນ ແລະ ບົດແນະນຳຕ່າງໆທີ່ກ່ຽວຂ້ອງ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

## 6.11. ສະຖິຕິການເງິນ ແລະເງິນຕາ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະທ້ອງຖິ່ນ ໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ປັບປຸງລະບົບການລາຍງານຂອງກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ໃຫ້ສາມາດລາຍງານຂໍ້ມູນເປັນງວດ, ທັນເວລາ ແລະເປັນລະບົບ ໂດຍສະເພາະການນຳໃຊ້ລະຫັດສາລະບານ ໃນການເກັບກຳ ແລະ ສັງລວມ ເພື່ອຕອບສະໜອງການຄິດໄລ່ລວມຍອດຜະລິດຕະພັນພາຍໃນ, ລວມຍອດລາຍໄດ້ແຫ່ງຊາດ ແລະ ຕົວຊີ້ບອກດ້ານມະຫາພາກ;
- ປັບປຸງ ແລະ ສຶກສາຄວາມເປັນໄປໄດ້ໃນການນຳໃຊ້ລະບົບສາລະບານສາກົນ ເພື່ອນຳສະເໜີ ແລະ ເຜີຍແຜ່ຂໍ້ມູນການເງິນ ໂດຍການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງ;
- ສະໜອງວັດຖຸອຸປະກອນ, ຄອມພິວເຕີ, ຝຶກອົບຮົມ ແລະການຊ່ວຍເຫຼືອດ້ານວິຊາການໃນຮູບແບບຕ່າງໆເພື່ອເພີ່ມປະສິດທິຜົນ ແລະຫຼຸດຜ່ອນຄວາມຫຼ້າຊ້າໃນການລາຍງານ;
- ປັບປຸງ ແລະ ສ້າງລະບົບການເກັບກຳ, ລາຍງານຂໍ້ມູນທາງດ້ານການເງິນ ແລະ ເງິນຕາໃຫ້ເປັນລະບົບມີຖານຂໍ້ມູນປະຈຳເດືອນ, ງວດ ແລະ ປີ ເພື່ອສາມາດຕອບສະໜອງຄວາມຕ້ອງການຂອງລະບົບການບັນຊີແຫ່ງຊາດ ແລະສາກົນ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

## 6.12. ສະຖິຕິການບັນຊີແຫ່ງຊາດ

- ສ້າງແຜນລະອຽດ ແລະ ປັບປຸງການຄິດໄລ່ການບັນຊີແຫ່ງຊາດ ໃຫ້ໄປຕາມມາດຖານສາກົນ ໄປຕາມລະບົບການບັນຊີແຫ່ງຊາດ 2008 ເທື່ອລະກ້າວ;
- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ, ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ສ້າງສະຖິຕິການບັນຊີແຫ່ງຊາດໃຫ້ໄດ້ ເພື່ອຕອບສະໜອງຄວາມຕ້ອງການ ຂອງລະດັບປະເທດ, ຂົງເຂດ ແລະ ສາກົນ;

- ຜະລິດບັນດາຕົວຊີ້ບອກ ທີ່ນອນຢູ່ໃນລະບົບການບັນຊີແຫ່ງຊາດ ໂດຍສະເພາະລວມຍອດຜະລິດຕະພັນພາຍໃນໃຫ້ໄດ້ທັງໃນແງ່ການຜະລິດ ແລະ ການໃຊ້ຈ່າຍ ຢ່າງເປັນລະບົບ ປະຈຳ 6 ເດືອນ ແລະ ປີ ຕາມໄລຍະທີ່ກຳນົດໄວ້;
- ຜະລິດບົດລາຍງານການຂະຫຍາຍຕົວຂອງເສດຖະກິດປະຈຳປີ ຕາມໄລຍະທີ່ກຳນົດໄວ້, ເພື່ອອະທິບາຍເຖິງຜົນຂອງການຄາດຄະເນ ລວມຍອດຜະລິດຕະພັນພາຍໃນ, ປັດໄຈທີ່ເປັນຜົນກະທົບ ແລະ ແຫຼ່ງຂໍ້ມູນທີ່ນຳໃຊ້ ໃຫ້ແກ່ຜູ້ຊົມໃຊ້ໄດ້ເຂົ້າໃຈ ແລະ ນຳໃຊ້ຢ່າງກວ້າງຂວາງ;
- ຄົ້ນຄວ້າ ແລະ ຄິດໄລ່ລວມຍອດລາຍໄດ້ແຫ່ງຊາດປະຈຳປີ ນຳສະເໜີຜົນເບື້ອງຕົ້ນໃນປີ 2017. ຄົ້ນຄວ້າສະເໜີບັນຫາຂໍ້ຄົງຄ້າງ ແລະ ວິທີທາງແກ້ໄຂ ເພື່ອປັບປຸງການຄາດຄະເນຕົວຊີ້ບອກດັ່ງກ່າວໃຫ້ໄດ້ຄຸນນະພາບ ແລະ ໄປຕາມຫຼັກການ ຕາມມາດຖານສາກົນ;
- ຄົ້ນຄວ້າ, ຄິດໄລ່ ແລະ ເຜີຍແຜ່ຂໍ້ມູນຄາດຄະເນການບັນຊີແຫ່ງຊາດ ປະຈຳງວດໃຫ້ໄດ້ໃນປີ 2018;
- ຄົ້ນຄ້ວານຳສະເໜີ ວິທີທາງປັບປຸງຄຸນນະພາບຂອງຂໍ້ມູນ(ຂໍ້ມູນລາຍງານຈາກລະບົບການບໍລິຫານ ແລະການສຳຫຼວດ) ເພື່ອຮັບປະກັນຄຸນນະພາບ ການຄິດໄລ່ໃນລາຄາຄົງທີ່ ແລະລາຄາໃນປີ ເພື່ອສົ່ງເສີມການນຳໃຊ້ຂໍ້ມູນ ທີ່ມີຢູ່ຢ່າງມີປະສິດທິຜົນ;
- ປັບປຸງຄຸນນະພາບ ຂອງການຄາດຄະເນລວມຍອດຜະລິດຕະພັນພາຍໃນ, ແລະ ໃນທຸກໆ 5 ປີ ຕ້ອງມີການປັບປຸງປີຖານ (ໃຫ້ໄປຕາມການປ່ຽນແປງ ແລະພັດທະນາເສດຖະກິດ) ;
- ປັບປຸງຕົວປັບລາຄາ ເພື່ອເຮັດໃຫ້ການຄິດໄລ່ລວມຍອດຜະລິດຕະພັນພາຍໃນ ມີຄວາມຊັດເຈນຂຶ້ນ ໂດຍໃຫ້ປະຕິບັດໄປຕາມ ລະບົບລະຫັດສາລະບານ ການຈັດແບ່ງຂະແໜງອຸດສາຫະກຳລຸ້ນ 4.0 (ISIC.Rev.4 ຫຼື LSIC);
- ຄົ້ນຄວ້າ, ສຶກສາ ແລະປັບປຸງການຄາດຄະເນລວມຍອດຜະລິດຕະພັນພາຍໃນ ໃນລະດັບແຂວງ ແລະ ພາກ ເພື່ອຮັບປະກັນທາງດ້ານຄຸນນະພາບ ແລະມາດຖານການວັດແທກໃນລະດັບແຂວງ, ຄົ້ນຄວ້າ ແລະນຳສະເໜີຕົວຊີ້ບອກອື່ນໆ ທີ່ຄວນຄຳນຶງໃນການປະເມີນການຂະຫຍາຍຕົວຂອງເສດຖະກິດໃນລະດັບເມືອງ, ແຂວງ ແລະ ພາກ ເພື່ອຮັບປະກັນຄວາມສອດຄ່ອງກັບການຄາດຄະເນລະດັບຊາດ;
- ຄົ້ນຄວ້າຜະລິດຕົວຊີ້ບອກອື່ນໆ ທີ່ນອນຢູ່ໃນລະບົບການບັນຊີແຫ່ງຊາດ ໂດຍສະເພາະແມ່ນການຜະລິດຕາຕະລາງການສະໜອງ ແລະການຊົມໃຊ້ (Supply and Use Table: SUT), ຕາຕະລາງປັດໄຈການຜະລິດ ແລະ ຜົນຜະລິດ (Input-Output Table) ໃຫ້ເປັນລະບົບ ແລະໄປຕາມໄລຍະທີ່ກຳນົດໄວ້;
- ປັບປຸງປື້ມຄູ່ມືການຄິດໄລ່ການບັນຊີແຫ່ງຊາດ ຂອງ ສປປ ລາວ ເພື່ອໃຫ້ສາມາດຮັບໃຊ້ໃຫ້ແກ່ການຜະລິດພາຍໃນ ແລະເພື່ອເປັນບ່ອນອີງໃນການສ້າງຄວາມອາດສາມາດໃຫ້ແກ່ພະນັກງານ;
- ປະສານສົມທົບກັບທຸກໆພາກສ່ວນ ເພື່ອແກ້ໄຂບັນຫາຂໍ້ຄົງຄ້າງຂອງຂໍ້ມູນ ຈາກຂະແໜງການ (ບັນຫາທີ່ການລາຍງານຫຼ້າຊ້າ ບໍ່ໄປຕາມການກຳນົດໃນດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍສະຖິຕິ) ເພື່ອເຮັດໃຫ້ການຄິດໄລ່ລວມຍອດຜະລິດຕະພັນພາຍໃນທັນເວລາ;
- ຄົ້ນຄວ້າ, ທົດລອງ ແລະ ສະເໜີ ການສຳຫຼວດປັດໄຈການຜະລິດ ແລະ ຜົນຜະລິດ ເພື່ອປັບປຸງການຂໍ້ມູນໃນການຄາດຄະເນລວມຍອດຜະລິດຕະພັນພາຍໃນ ແລະຕາຕະລາງຕາຕະລາງປັດໄຈການຜະ ລິດ ແລະຜົນຜະລິດ (Input-Output Table);
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;

- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານຢູ່ສູນກາງຮອດທ້ອງຖິ່ນກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ ເພື່ອສະໜອງໃຫ້ແກ່ວຽກງານການບັນຊີແຫ່ງຊາດ.

## 6.13. ສະຖິຕິລາຄາ

- ຈັດຕັ້ງດຳເນີນການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງຊຸດຂໍ້ມູນສະຖິຕິ ຕາມຕົວຊີ້ບອກໃນລະດັບແຂວງ, ລະດັບຊາດ ແລະສາກົນ ໃນແຕ່ລະໄລຍະ;
- ປັບປຸງດັດສະນີລາຄາຜູ້ຊົມໃຊ້ ໂຄງການປັບປຸງກະຕ່າການຊົມໃຊ້ສິນຄ້າ (ອຸປະໂພກ ແລະບໍລິໂພກ) ແລະ ບໍລິການ ໂດຍນຳໃຊ້ຜົນການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນໃນທຸກໆ 5 ປີ (2017/2018 ແລະ 2022/2023);
- ຂະຫຍາຍການຄິດໄລ່ຈາກດັດຊະນີລາຄາ ຈາກ 12 ແຂວງ ມາເປັນທຸກແຂວງໃນຂອບເຂດທົ່ວປະເທດໃຫ້ໄດ້ໃນປີ 2016. ເພີ່ມທະວີຄວາມສາມາດໃນການລາຍງານສະຖິຕິລາຄາຜູ້ຊົມໃຊ້ໃຫ້ສາມາດລາຍງານລາຄາຕົ້ນຕໍປະຈຳອາທິດ;
- ສ້າງ ແລະ ຄິດໄລ່ດັດຊະນີລາຄາຜູ້ຜະລິດ ສຳລັບຜະລິດຕະພັນຫຼັກ ໂດຍປະສານກັບຂະແໜງການທີ່ກ່ຽວຂ້ອງໃນລະດັບຊາດ ໃຫ້ໄດ້ທຸກໆປີ;
- ຂະຫຍາຍ ແລະ ເພີ່ມການຄິດໄລ່ດັດຊະນີລາຄາເຄື່ອງກໍ່ສ້າງ (ປະຈຸບັນແມ່ນຄິດໄລ່ສະເພາະນະຄອນຫຼວງວຽງຈັນ) ອອກສູ່ບັນດາຕົວເມືອງໃຫຍ່ (5-8 ແຂວງ) ໃນຂອບເຂດທົ່ວປະເທດ ໃນປີ 2017;
- ສຶກສາ, ຄົ້ນຄວ້າ ແລະ ຂະຫຍາຍການຄິດໄລ່ດັດຊະນີລາຄາຊັບສິນ ໂດຍເລີ່ມຈາກນະຄອນຫຼວງວຽງຈັນ ໃນປີ 2018 ແລະ ກ້າວໄປສູ່ການລາຍງານໃນຂອບເຂດທົ່ວປະເທດໃນປີ 2020;
- ສຶກສາ, ຄົ້ນຄວ້າ ແລະ ຂະຫຍາຍການຄິດໄລ່ດັດຊະນີລາຄາສິ່ງອອກ-ນຳເຂົ້າ ແລະ ດັດຊະນີລາຄາອື່ນໆ ຕາມທີ່ເຫັນວ່າຈຳເປັນ ໂດຍອີງຕາມມາດຖານສາກົນ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

## 6.14. ສະຖິຕິພົນລະເມືອງ

- ຂຶ້ນແຜນກະກຽມ, ຈັດຕັ້ງປະຕິບັດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດທຸກໆ 10 ປີ ແລະ ລວມທັງການຈົດນັບພົນລະເມືອງກາງສະໄໝ;
- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ຈັດຕັ້ງປະຕິບັດການຄາດຄະເນພົນລະເມືອງປະຈຳປີ ແບ່ງຕາມເພດ, ອາຍຸ ແລະ ແຂວງ ໂດຍຜ່ານຜົນ ຂອງການເຮັດວຽກຮ່ວມກັນລະຫວ່າງໜ່ວຍງານວິຊາການ ເພື່ອໃຫ້ໄດ້ຜົນການຄາດຄະເນທີ່ເປັນທາງການ;
- ວິໄຈລົງເລິກຫົວຂໍ້ຕ່າງໆທີ່ກ່ຽວກັບພົນລະເມືອງ ໂດຍນຳໃຊ້ຂໍ້ມູນຈາກຜົນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ;

- ປັບປຸງການລາຍງານຂໍ້ມູນພົນລະເມືອງ ຕາມລະບົບການລາຍງານແບບບໍລິຫານ ໂດຍຕິດພັນກັບສະຖິຕິຂັ້ນບ້ານ ລວມທັງວິທີການນໍາສະເໜີຂໍ້ມູນໂດຍການນໍາໃຊ້ແຜນທີ່;
- ສ້າງຖານຂໍ້ມູນ ແລະ ເອກະສານສໍານວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສໍາລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງລະບົບສະຖິຕິການຂຶ້ນທະບຽນພົນລະເມືອງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງລະບົບການເກັບກໍາສະຖິຕິ ການຂຶ້ນທະບຽນການເກີດ-ການຕາຍ.

### 6.15. ສະຖິຕິຄວາມທຸກຍາກ ແລະ ບົດບາດຍິງຊາຍ.

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ ຕາມຕົວຊີ້ບອກທີ່ໄດ້ກໍານົດເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດໍາເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ປະກອບສ່ວນເຂົ້າໃນວຽກງານການຕອບສະໜອງຂໍ້ມູນ, ວິໄຈ ແລະ ສ້າງບົດລາຍງານຄວາມທຸກຍາກ ແລະ ບົດລາຍງານຄວາມຄືບໜ້າການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ;
- ສ້າງຖານຂໍ້ມູນ ແລະ ເອກະສານສໍານວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສໍາລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສົ່ງເສີມຄວາມເຂົ້າໃຈໃນການສ້າງສະຖິຕິແຍກເພດລະດັບຊາດ ແລະ ທ້ອງຖິ່ນ ໃຫ້ໄດ້ຫຼາຍຕົວຊີ້ບອກເທົ່າທີ່ຈະເປັນໄປໄດ້ໂດຍສະເພາະໃນການອອກແບບສໍາຫຼວດ, ການເກັບກໍາຂໍ້ມູນ, ວິໄຈຂໍ້ມູນ, ການວິເຄາະ ແລະອື່ນໆທີ່ກ່ຽວຂ້ອງ;
- ແກ້ໄຂບັນຫາຊ່ອງຫວ່າງ ແລະ ຄວາມຂາດເຂີນຂໍ້ມູນສະຖິຕິແຍກເພດ ໂດຍສົມທົບກັບຄະນະກໍາມະການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ ແລະ ສູນກາງສະຫະພັນແມ່ຍິງລາວ.

### 6.16. ສະຖິຕິສຶກສາ

- ພັດທະນານິຕິກໍາ ແລະເຄື່ອງມືຕ່າງໆ ລວມທັງຖານຂໍ້ມູນ ແລະລະບົບເລກລະຫັດ ຂອງຂະແໜງການສຶກສາ ແລະ ກິລາ;
- ຈັດຕັ້ງການຜະລິດຂໍ້ມູນສະຖິຕິເພື່ອຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກທີ່ໄດ້ກໍານົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະທ້ອງຖິ່ນໃນແຕ່ລະໄລຍະ, ທັງດໍາເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ປັບປຸງລະບົບການເກັບກໍາຂໍ້ມູນດ້ານການສຶກສາ ໃຫ້ເອກະພາບດ້ານຫຼັກການ, ນິຍາມ ແລະການຜະລິດຂໍ້ມູນ ເພື່ອແນໃສ່ເຮັດໃຫ້ຂໍ້ມູນທີ່ມີຄວາມຖືກຕ້ອງ ແລະ ຄົບຖ້ວນ;
- ສຶກສາຄົ້ນຄ້ວາຄວາມຕ້ອງການ ໃນການເກັບກໍາຂໍ້ມູນຄົນພິການ ແລະ ການສຶກສານອກໂຮງຮຽນ ໂດຍຜ່ານລະບົບບໍລິຫານ ແລະ ການສໍາຫຼວດຂອງຂະແໜງການສຶກສາ ແລະກິລາ ເປັນຕົ້ນແມ່ນການສໍາຫຼວດກ່ຽວກັບການຮູ້ໜັງສື;
- ສ້າງແຜນທີ່ໂຮງຮຽນ ແລະນໍາໃຊ້ແຜນທີ່ດັ່ງກ່າວເພື່ອການວາງແຜນຕ່າງໆ ທັງສະໜອງ ແລະເຜີຍແຜ່ແຜນທີ່ດັ່ງກ່າວໃນຫຼາຍຮູບແບບ; ສ້າງຖານຂໍ້ມູນ ແລະເອກະສານສໍານວນຂ່າວສານຂໍ້ມູນ ສໍາລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຖານຂໍ້ມູນ ແລະ ເອກະສານສໍານວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສໍາລັບການເຜີຍແຜ່ຂໍ້ມູນທົ່ວໄປ;

- ປັບປຸງ ແລະ ທົບທວນການເຜີຍແຜ່ໂຄສະນາຂໍ້ມູນຂ່າວສານສະຖິຕິການສຶກສາ ແລະກິລາ ໂດຍຜ່ານການພັດທະນາລະບົບເວັບໄຊ ຂອງກະຊວງສຶກສາທິການ ແລະກິລາ, ເວັບໄຊຂອງສູນສະຖິຕິການສຶກສາ ແລະກິລາ ແລະ ສື່ຕ່າງໆ;
- ສ້າງເງື່ອນໄຂ ແລະພັດທະນາເຕັກໂນໂລຊີ ເພື່ອຮັບໃຊ້ວຽກງານຂໍ້ມູນຂ່າວສານ ແລະສະຖິຕິ, ຫັນໄປສູ່ຄວາມທັນສະໄໝ ແລະຮັບໃຊ້ການພັດທະນາວຽກງານຕ່າງໆ ໃນຂະແໜງການສຶກສາ ແລະກິລາ ທັງກຽມພ້ອມ ເຊື່ອມໂຍງກັບລະບົບຕ່າງໆໃນລະດັບຊາດ;
- ສ້າງຄວາມເຂັ້ມແຂງວຽກງານສະຖິຕິຂອງກະຊວງ, ພະແນກການ, ເມືອງ, ໂຮງຮຽນ ແລະສະຖານການສຶກສາລະດັບຕ່າງໆ ກ່ຽວກັບການເກັບກຳຂໍ້ມູນ, ການວິເຄາະ ແລະ ການຄຸ້ມຄອງຖານຂໍ້ມູນ ໂດຍເອົາ ສູນສະຖິຕິປະຈຳກະຊວງ ແລະ ແຂວງ ເປັນໃຈກາງໃນການປະສານງານ.

### 6.17. ສະຖິຕິສາທາລະນະສຸກ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ປັບປຸງລະບົບການເກັບກຳຂໍ້ມູນພາຍໃນກະຊວງສາທາລະນະສຸກ ໂດຍຜ່ານການຈັດຕັ້ງປະຕິບັດ ພາລະບົດບາດ, ໜ້າທີ່ ແລະ ເພື່ອຮັບປະກັນທາງດ້ານຫຼັກການກ່ອນຈະພິຈາລະນາການຕອບສະໜອງຝຶກອົບຮົມທີ່ກ່ຽວຂ້ອງ;
- ສະໜັບສະໜູນການຂະຫຍາຍ ກອບການສຳຫຼວດດັດຊະນີໝາຍສັງຄົມ ສປປ ລາວ ທຸກໆ 5 ປີ;
- ປັບປຸງ ແລະ ສ້າງລະບົບການປະສານງານ ແລະ ລາຍງານວຽກງານສະຖິຕິໃນຂະແໜງສາທາລະນະສຸກແຕ່ສູນກາງຮອດທ້ອງຖິ່ນ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ເປັນເຈົ້າການໃນການປະສານສົມທົບ ແລະ ຈັດຫາແຫຼ່ງງົບປະມານໃນການຈັດຕັ້ງປະຕິບັດການຜະລິດສະຖິຕິ ກໍ່ຄືການສຳຫຼວດໃນແຕ່ລະໄລຍະ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

### 6.18. ສະຖິຕິແຮງງານ ແລະສະຫວັດດີການສັງຄົມ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ຈັດຕັ້ງປະຕິບັດການສຳຫຼວດໃຫຍ່, ການສຳຫຼວດຕົວແທນລະດັບຊາດ ແລະ ການສຳຫຼວດສະເພາະ ເຊັ່ນ: ການສຳຫຼວດພົນລະເມືອງ ແລະທີ່ຢູ່ອາໄສ ທົ່ວປະເທດ, ການສຳຫຼວດກຳລັງແຮງງານ ແລະການສຳຫຼວດອື່ນໆທີ່ກ່ຽວຂ້ອງ (ເປັນຕົ້ນແມ່ນ ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ) ໂດຍການກຳນົດບັນດາຕົວຊີ້ບອກທາງດ້ານແຮງງານ, ລະບົບປະກັນໄພ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ແລະ ອື່ນໆ;
- ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຕ້ອງໃຫ້ມີພາກຄຳຖາມສະເພາະແຮງງານ ເພື່ອຕອບສະໜອງຄຸນລັກສະນະຂອງກຳລັງແຮງງານ;

- ການສຳຫຼວດກຳລັງແຮງງານ (ຕະຫຼາດແຮງງານ) ຕ້ອງຕອບສະໜອງຂໍ້ມູນຂ່າວສານການດຸ່ນດ່ຽງແຮງງານ ກໍ່ຄືການສ້າງຊັບພະຍາກອນມະນຸດ ແລະ ກຳລັງແຮງານ ເພື່ອເພີ່ມການສ້າງວຽກເຮັດງານທຳ ແລະຮອງຮັບການຫັນເປັນອຸດສາຫະກຳທັນສະໄໝ ຕາມຄວາມຕ້ອງການຂອງຕະຫຼາດ, ພ້ອມທັງຕອບສະໜອງຂໍ້ມູນຂ່າວສານທາງດ້ານລະບົບປະກັນໄພ, ປະກັນສັງຄົມ ແລະສະຫວັດດີການສັງຄົມ;
- ເພີ່ມວິທີການວິໄຈ ກ່ຽວກັບຕະຫຼາດແຮງງານ, ລະບົບປະກັນໄພ, ປະກັນສັງຄົມ ແລະສະຫວັດດີການສັງຄົມ ໂດຍອີງໃສ່ຂໍ້ມູນຈາກການສຳຫຼວດໃຫຍ່, ການສຳຫຼວດຕົວແທນລະດັບຊາດ ແລະການສຳຫຼວດສະເພາະອື່ນໆ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ເປັນເຈົ້າການໃນການປະສານສົມທົບ ແລະຈັດຫາແຫຼ່ງງົບປະມານ ໃນການຈັດຕັ້ງປະຕິບັດການຜະລິດສະຖິຕິ ກໍ່ຄືການສຳຫຼວດແຮງງານແຕ່ລະໄລຍະ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະການຄຸ້ມຄອງຖານຂໍ້ມູນ.

## 6.19. ສະຖິຕິວັດທະນະທຳ ແລະ ກິລາ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນທະບຽນບັນຊີລາຍຊື່ມໍລະດົກວັດທະນາທຳ ທີ່ເປັນວັດຖຸ ແລະບໍ່ເປັນວັດຖຸ ລະດັບທ້ອງຖິ່ນທົ່ວປະເທດ;
- ລົງສຳຫຼວດ ເກັບກຳຂໍ້ມູນ ແລະອອກແບບ ສວນສາທາລະນະທາງດ້ານວັດທະນະທຳ ຢູ່ບັນດາແຂວງ ໃນທົ່ວປະເທດ. ສ້າງຖານຂໍ້ມູນ ແລະເອກະສານສຳນວນຂ່າວສານຂໍ້ມູນສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ. ສະໜັບສະໜູນການວິໄຈຈາກການສຳຫຼວດຕ່າງໆ ທີ່ກ່ຽວຂ້ອງກັບສະຖິຕິວັດທະນະທຳ ແລະກິລາ;
- ປັບປຸງ, ເກັບກຳ, ສັງລວມ, ວິໄຈຂໍ້ມູນສະຖິຕິຖະແຫຼງຂ່າວ ແລະວັດທະນະທຳ ທົ່ວປະເທດໃຫ້ມີຄວາມຊັດເຈນ ແລະເປັນລະບົບຄົບຊຸດ, ພ້ອມທັງສ້າງເປັນຖານຂໍ້ມູນຢູ່ສູນກາງ ແລະທ້ອງຖິ່ນ;
- ສ້າງຖານຂໍ້ມູນ ແລະເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະຄວາມຮູ້ຄວາມສາມາດໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະການຄຸ້ມຄອງຖານຂໍ້ມູນ.

## 6.20. ສະຖິຕິສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ

- ຄົ້ນຄວ້າເຕັກນິກ ແລະ ວິທີການເພື່ອຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາ

ຕົວຊີ້ບອກຂອງຂະແໜງການ ໃຫ້ສອດຄ່ອງກັບການພັດທະນາແບບຍືນຍົງ ແລະແຜນພັດທະນາເສດຖະກິດ-ສັງຄົມ;

- ປັບປຸງ ແລະ ກຳນົດບັນດາຕົວຊີ້ບອກທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ໂດຍອີງໃສ່ຍຸດທະສາດສິ່ງແວດລ້ອມ ແລະຄຳນຶງເຖິງຄວາມສອດຄ່ອງກັບສາກົນ, ໂດຍສະເພາະເປົ້າໝາຍການພັດທະນາແບບຍືນຍົງ;
- ສ້າງສູນສະຖິຕິ/ຂໍ້ມູນຂ່າວສານໃນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອໃຫ້ມີຄວາມເຂັ້ມແຂງ ເປັນໃຈກາງໃນການສັງລວມເກັບກຳຂໍ້ມູນຕາມພາລະບົດບາດຂອງສະຖິຕິຂະແໜງການ;
- ເກັບກຳຂໍ້ມູນສະພາບພື້ນຖານ ໃນການຄຸ້ມຄອງ ການຫຼຸດຜ່ອນທາດອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເສື່ອມໂຊມ;
- ເກັບກຳຂໍ້ມູນການປົກປັກຮັກສາ ແລະ ຟື້ນຟູປ່າປ້ອງກັນ ແລະ ປ່າສະຫງວນແຫ່ງຊາດ;
- ເກັບກຳ, ສັງລວມ, ຄົ້ນຄວ້າ, ພັດທະນາ ແລະ ສົ່ງເສີມການນຳໃຊ້ຂໍ້ມູນຂ່າວສານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ຄຸ້ມຄອງລະບົບຖານຂໍ້ມູນທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ສ້າງຕັ້ງ ແລະ ຄຸ້ມຄອງ ເຄືອຂ່າຍການຕິດຕາມຄຸນນະພາບ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ດ້ວຍລະບົບເຊື່ອມໂຍງຂໍ້ມູນຂ່າວສານ ໃນຂອບເຂດທົ່ວປະເທດ ແລະເຊື່ອມໂຍງເຂົ້າກັບເຄືອຂ່າຍການຄົ້ນຄວ້າສາກົນ;
- ຄົ້ນຄວ້າການສຳຫຼວດ ເພື່ອເກັບກຳຂໍ້ມູນສະຖິຕິສິ່ງແວດລ້ອມຕ່າງໆ ທີ່ມີຄວາມຈຳເປັນໃນແຕ່ລະໄລຍະ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດໃຫ້ພະນັກງານນັບແຕ່ສູນກາງຮອດທ້ອງຖິ່ນກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

## 6.21. ສະຖິຕິການນຳໃຊ້ທີ່ດິນ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ, ຄຽງຄູ່ກັບນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ປັບປຸງ ແລະ ກຳນົດບັນດາຕົວຊີ້ບອກທີ່ກ່ຽວຂ້ອງ ໂດຍອີງໃສ່ກົດໝາຍທີ່ດິນ ແລະ ຄຳນຶງເຖິງຄວາມສອດຄ່ອງຄວາມຕ້ອງການ ທາງດ້ານຂໍ້ມູນການນຳໃຊ້ດິນ, ສິດໃນການນຳໃຊ້, ເນື້ອທີ່ດິນແບ່ງຕາມປະເພດ ແລະ ອື່ນໆທີ່ກ່ຽວຂ້ອງ;
- ປັບປຸງ ແລະ ສ້າງລະບົບການເກັບກຳ, ສັງລວມຂໍ້ມູນ ກ່ຽວກັບການຈັດແບ່ງປະເພດດິນ ກໍ່ຄືການພັດທະນາຕະຫຼາດທີ່ດິນ ເພື່ອນຳເຂົ້າໃນການສ້າງສະຖິຕິໃນຮູບແບບແຜນທີ່ ໂດຍມີການແລກປ່ຽນຖານຂໍ້ມູນກັບຜູ້ຜະລິດ ແລະ ຜູ້ຊົມໃຊ້;
- ປັບປຸງລະບົບຂໍ້ມູນແຜນທີ່ອອກໃບຕາດິນ, ປັບປຸງລະບົບຂໍ້ມູນການເຊົ່າ ແລະ ສຳປະທານທີ່ດິນ, ປັບປຸງລະບົບສຳມະໂນທີ່ດິນ ເຂົ້າລະບົບດີຈີຕອນ ແລະ ເກັບກຳຈຳນວນເມືອງທີ່ມີການປະເມີນລາຄາທີ່ດິນ;

- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນສະຖິຕິ, ການປຸງແຕ່ງ ແລະການຄຸ້ມຄອງຖານຂໍ້ມູນ.

## 6.22. ສະຖິຕິຄວາມໝັ້ນຄົງ

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະທ້ອງຖິ່ນ ໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ປັບປຸງ ແລະກຳນົດບັນດາຕົວຊີ້ບອກ ທີ່ກ່ຽວຂ້ອງເປັນຕົ້ນ ຄວາມໝັ້ນຄົງທາງດ້ານເສດຖະກິດ, ດ້ານສັງຄົມ, ສິ່ງແວດລ້ອມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຄວາມຢູ່ດີກິນດີ, ຄວາມສ່ຽງດ້ານການດຳລົງຊີວິດ, ການປະກັນສຸຂະພາບ ແລະ ສະຫວັດດີການສັງຄົມ ແລະ ການຄ້ຳປະກັນສະບຽງອາຫານ ໂດຍອີງໃສ່ການຈັດຕັ້ງປະຕິບັດແຜນການ ແລະ ເປົ້າໝາຍຂອງແຕ່ລະພາກສ່ວນທີ່ໄດ້ກຳນົດໄວ້;
- ກຳນົດຕົວຊີ້ບອກເຂົ້າໃນການສຳຫຼວດໃຫຍ່, ການສຳຫຼວດຕົວແທນລະດັບຊາດ ແລະການສຳຫຼວດສະເພາະທີ່ເຫັນວ່າມີຄວາມຈຳເປັນ ເພື່ອໃຫ້ສະໜອງຕົວຊີ້ບອກຕາມຄວາມຕ້ອງການ;
- ປັບປຸງລະບົບການເກັບກຳ ແລະ ລາຍງານຂໍ້ມູນ (ໂດຍສະເພາະແມ່ນ ການລາຍງານບໍລິຫານ) ໂດຍການກຳນົດຄວາມເປັນເອກະພາບ ທາງດ້ານເນື້ອໃນ ແລະ ວິທີການຂອງການລາຍງານລະຫວ່າງສູນສະຖິຕິໃນລະບົບສາຍຕັ້ງ ກັບບັນດາຂະແໜງການຕ່າງໆ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ທັນເວລາ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບສູນກາງ ແລະ ທ້ອງຖິ່ນ ທັງສາຍຕັ້ງ ແລະ ສາຍຂວາງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ;

## 6.23. ສະຖິຕິອື່ນ (ອຸປະຕິເຫດ, ຄົມພິການ, ສານ, ຄະດີ ແລະອື່ນໆ)

- ຈັດຕັ້ງການຜະລິດຂໍ້ມູນສະຖິຕິ ເພື່ອສາມາດຕອບສະໜອງໃຫ້ໄດ້ຕາມຕົວຊີ້ບອກ ທີ່ໄດ້ກຳນົດ ເພື່ອຕອບສະໜອງໃຫ້ແກ່ການລາຍງານຂໍ້ມູນລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນ ຕ້ອງດຳເນີນການພັດທະນາຕົວຊີ້ບອກ ຂອງຂະແໜງການ;
- ປັບປຸງ ແລະ ກຳນົດບັນດາຕົວຊີ້ບອກ ທີ່ກ່ຽວຂ້ອງໂດຍອີງໃສ່ການຈັດຕັ້ງປະຕິບັດແຜນການ ແລະ ເປົ້າໝາຍຂອງແຕ່ລະພາກສ່ວນທີ່ໄດ້ກຳນົດໄວ້;
- ປັບປຸງລະບົບການລາຍງານຂໍ້ມູນ ລະຫວ່າງຂະແໜງການ ໃຫ້ສາມາດລາຍງານຂໍ້ມູນຄົບຖ້ວນ ແລະ ທັນເວລາ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;

- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນລະດັບກະຊວງ, ພະແນກການ ແລະ ຂັ້ນເມືອງ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ.

<u>**ແຜນງານ 7**</u>: ສ້າງ ແລະ ປັບປຸງກົນໄກການເຮັດວຽກຂອງສະຖິຕິຢູ່ທ້ອງຖິ່ນ ເພື່ອກ້າວໄປສູ່ຄວາມເປັນເອກະພາບທາງດ້ານການປະສານງານ, ການເກັບກຳຂໍ້ມູນ, ລະບົບການລາຍງານຂໍ້ມູນ ແລະ ການເຊື່ອມໂຍງຂໍ້ມູນໃນທົ່ວປະເທດ.

<u>**ກິດຈະກຳ:**</u>

- ຕ້ອງຜະລິດຂໍ້ມູນແບ່ງຕາມ ປະເພດສະຖິຕິ ແລະ ຈຳນວນຕົວຊີ້ບອກ ທີ່ກຳນົດໃນທີ່ໄດ້ກຳນົດໃນເອກະສານຊ້ອນທ້າຍ I ແລະ II;
- ຜະລິດຂໍ້ມູນ ຈາກລະບົບລາຍງານບໍລິຫານ ໃຫ້ສາມາດສະໜອງ ແລະ ຕິດຕາມຕົວຊີ້ບອກການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ແລະເປົ້າການພັດທະນາແບບຍືນຍົງ (ດ້ານຕົວຊີ້ບອກລະດັບຊາດ ແລະລະດັບທ້ອງຖິ່ນ ຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ;
- ຈັດຕັ້ງປະຕິບັດການເກັບກຳຂໍ້ມູນສະຖິຕິຂັ້ນບ້ານ ໃຫ້ບັນລຸ 51 ເມືອງສາມສ້າງ ທົ່ວປະເທດໃນປີ 2020;
- ປະເມີນ ແລະຕີລາຄາຄືນ ກ່ຽວກັບການຈັດຕັ້ງປະຕິບັດສະຖິຕິໃນຂັ້ນທ້ອງຖິ່ນ ໂດຍສະເພາະລະບົບລາຍງານແບບບໍລິຫານ ເຊັ່ນ: ສະຖິຕິຂັ້ນບ້ານ ແລະ ບົດລາຍງານເສດຖະກິດ-ສັງຄົມຂອງແຂວງ;
- ປັບປຸງລະບົບລາຍງານແບບບໍລິຫານ ສະຖິຕິຂັ້ນບ້ານ, ໂດຍການສ້າງຕົວແບບໃນການຈັດຕັ້ງປະຕິບັດສະຖິຕິຂັ້ນບ້ານ ໃຫ້ມີລະບົບຄົບຊຸດ ທີ່ເປັນແບບຢ່າງ ແລະ ຜັນຂະຫຍາຍໃຫ້ໄດ້ທົ່ວປະເທດໃນປີ 2020;
- ຄົ້ນຄວ້າ ແລະດຳເນີນການທົດລອງສ້າງສູນຂໍ້ມູນຂ່າວສານສະຖິຕິປະຈຳພາກ ເພື່ອເປັນສູນລວມ ແລະເຊື່ອມໂຍງຂໍ້ມູນສະຖິຕິລະຫວ່າງສູນກາງ ແລະທ້ອງຖິ່ນ;
- ສ້າງຄວາມເຂັ້ມແຂງ ໃນຂັ້ນແຂວງ ໃຫ້ສາມາດ ວິໄຈ ແລະ ຂຽນບົດລາຍງານ ໂດຍນຳໃຊ້ຂໍ້ມູນຈາກລະບົບລາຍງານບໍລິຫານ ເພື່ອໃຫ້ທັນກັບສະພາບການ ແລະ ສາມາດນຳໃຊ້ເຂົ້າໃນການວາງແຜນພັດທະນາເສດຖະກິດສັງຄົມໃນຂັ້ນແຂວງ ແລະ ເມືອງໄດ້;
- ສ້າງຄວາມເຂັ້ມແຂງ ໃນຂັ້ນເມືອງ ໃຫ້ມີວາລະສານສະຖິຕິ ໃນຂັ້ນເມືອງ, ສາມາດປ້ອນຂໍ້ມູນ ແລະ ມີຖານຂໍ້ມູນໃນຂັ້ນເມືອງ ທີ່ສາມາດເຊື່ອມໂຍງກັບແຂວງ ແລະສູນກາງໄດ້ ໃຫ້ໄດ້ 40 ສ່ວນຮ້ອຍໃນປີ 2025;
- ສ້າງຄວາມເຂັ້ມແຂງ ໃນຂັ້ນບ້ານໃຫ້ສາມາດເກັບກຳ ແລະລາຍງານຂໍ້ມູນໃຫ້ຂັ້ນເມືອງ ໄດ້ແຕ່ລະໄລຍະ ແລະໃນແຕ່ລະບ້ານຕ້ອງມີປຶ້ມສະຖິຕິປະຈຳບ້ານ ເພື່ອເປັນຄັງຂໍ້ມູນລວມ.

<u>**ແຜນງານ 8:**</u> ສ້າງ ແລະ ປັບປຸງລະບົບການຜະລິດຂໍ້ມູນສະຖິຕິທາງການ ເພື່ອສະໜອງຂໍ້ມູນການຕິດຕາມ ແລະ ຜະລິດຕົວຊີ້ບອກ ເພື່ອປະເມີນສະຖານະພາບ ຂອງການຫຼຸດພົ້ນອອກຈາກ ບັນຊີປະເທດດ້ອຍພັດທະນາ (LDC).

<u>**ກິດຈະກຳ:**</u>

- ຄົ້ນຄວ້າດ້ານເຕັກນິກ, ວິທີການ ເພື່ອຈັດຕັ້ງປະຕິບັດຜະລິດສະຖິຕິ ເພື່ອສາມາດສະໜອງໃຫ້ໄດ້ຕາມຕົວຊີ້ບອກ ໃຫ້ແກ່ການລາຍງານລະດັບຊາດ ໃນການຕິດຕາມ, ວັດແທກ ແລະ ປະເມີນການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ (LDC) ໃນປີ 2020;

- ຈັດຕັ້ງປະຕິບັດການເກັບກຳຂໍ້ມູນທັງໃນຮູບແບບການປະຕິບັດການສຳຫຼວດ ແລະ ການລາຍງານລະບົບບໍລິຫານ ເພື່ອຮັບໃຊ້ຂະບວນການຜະລິດຕົວຊີ້ບອກ ການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ (LDC) ໂດຍອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຕົວຊີ້ບອກທີ່ອົງການສະຫະປະຊາຊາດໄດ້ກຳນົດ;
- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນ ສຳລັບເຜີຍແຜ່ຂໍ້ມູນດ້ານການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ (LDC) ໃຫ້ທັນເວລາ;
- ປຸງແຕ່ງ ແລະ ວິໄຈໃນຫົວຂໍ້ຕ່າງໆ ເພື່ອໃຫ້ທັນກັບສະພາບການ ແລະ ສາມາດເຫັນຜົນການຈັດຕັ້ງປະຕິບັດເພື່ອການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ (LDC) ໃນປີ 2020;
- ສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ຄວາມສາມາດ ໃຫ້ພະນັກງານໃນສູນກາງ ແລະ ທ້ອງຖິ່ນກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ ແລະ ການຄຸ້ມຄອງຖານຂໍ້ມູນ;
- ປະສານງານ, ສ້າງຄວາມອາດສາມາດ ແລະຈັດກອງປະຊຸມສຳມະນາປຶກສາຫາລືຜົນການຄິດໄລ່ດັດຊະນີຄວາມອ່ອນໄຫວທາງດ້ານເສດຖະກິດ (EVI);
- ລະດົມແຫຼ່ງທຶນ ຈາກພາກສ່ວນລັດຖະບານ ແລະ ຄູ່ຮ່ວມພັດທະນາ (ສະໜັບສະໜູນດ້ານການເງິນ ແລະ ວິຊາການ) ເພື່ອຊ່ວຍເຫຼືອທາງດ້ານວິຊາການ ແລະ ເຕັກນິກຕ່າງໆ ໃນການຈັດຕັ້ງການຜະລິດບັນດາຕົວຊີ້ບອກ ແລະ ຮັບປະກັນມາດຖານສາກົນ.

**<u>ແຜນງານ 9:</u>** ສ້າງ ແລະ ປັບປຸງລະບົບການຜະລິດຂໍ້ມູນສະຖິຕິທາງການ, ລະບົບການລາຍງານບໍລິຫານ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃນການປະສານງານ ເພື່ອສະໜອງຂໍ້ມູນການຕິດຕາມ ແລະ ຜະລິດຕົວຊີ້ບອກ ເພື່ອປະເມີນການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (SDGs).

**<u>ກິດຈະກຳ:</u>**

- ສ້າງໜ່ວຍງານ ແລະ ພັດທະນາກົນໄກການເຮັດວຽກ ເພື່ອການຜະລິດຕົວຊີ້ບອກເປົ້າໝາຍການພັດທະນາແບບຍືນຍົງ (SDGIs) ຮ່ວມກັບພາກສ່ວນກ່ຽວຂ້ອງ;
- ຄົ້ນຄວ້າດ້ານເຕັກນິກ, ວິທີການ ເພື່ອຈັດຕັ້ງປະຕິບັດຜະລິດສະຖິຕິ ເພື່ອສາມາດສະໜອງໃຫ້ໄດ້ຕາມຕົວຊີ້ບອກທີ່ໄດ້ກຳນົດໃນ ເປົ້າໝາຍຂອງການພັດທະນາແບບຍືນຍົງ (SDGIs) ເພື່ອຕອບສະໜອງໃຫ້ແກ່ການລາຍງານລະດັບຊາດ ໃນແຕ່ລະໄລຍະ, ຄຽງຄູ່ກັນນັ້ນຕ້ອງດຳເນີນການພັດທະນາຕົວຊີ້ບອກຂອງຂະແໜງການ;
- ດຳເນີນການທົບທວນຄວາມຕ້ອງການ ແລະ ການສະໜອງຂໍ້ມູນສະຖິຕິໃນລະບົບທີ່ມີຢູ່ໃນປະຈຸບັນ ເພື່ອກຳນົດຊ່ອງຫວ່າງທາງດ້ານຂໍ້ມູນ ລວມທັງການກຳນົດແຫຼ່ງເກັບກຳຂໍ້ມູນຫຼື ການສຳຫຼວດໃໝ່ ທີ່ເຫັນວ່າຈຳເປັນ ໂດຍປະສານສົບທົບ ແລະ ການມີສ່ວນຮ່ວມຂອງທຸກໆພາກສ່ວນໃນລະບົບການຈັດຕັ້ງສະຖິຕິແຫ່ງຊາດ ແລະ ຜູ້ນຳໃຊ້ຂໍ້ມູນ;
- ຈັດຕັ້ງປະຕິບັດການສຳຫຼວດໃຫຍ່, ການສຳຫຼວດແບບຕົວແທນລະດັບຊາດ ແລະ ສຳຫຼວດສະເພາະທີ່ເຫັນວ່າເໝາະສົມ ເພື່ອຮັບໃຊ້ຂະບວນການຜະລິດຕົວຊີ້ບອກການພັດທະນາແບບຍືນຍົງໃຫ້ຄົບຖ້ວນ;
- ເກັບກຳຂໍ້ມູນຈາກລະບົບລາຍງານແບບບໍລິຫານ ໃຫ້ມີປະສິດທິພາບ ແລະ ສະໜອງ ໃຫ້ທັນເວລາໃນການຕິດຕາມເປົ້າໝາຍການພັດທະນາແບບຍືນຍົງ (SDGs);
- ຄົ້ນຄ້ວາ ແລະ ດຳເນີນນຳສະເໜີຂັ້ນເທິງ ສຳລັບການທົບທວນແຫຼ່ງຂໍ້ມູນທີ່ມີ ເພື່ອຕິດຕາມການຜະລິດຕົວຊີ້ບອກ ສຳລັບເປົ້າໝາຍການພັດທະນາແບບຍືນຍົງ (SDGIs);

- ສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນ ສຳລັບເຜີຍແຜ່ຂໍ້ມູນດ້ານ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃຫ້ທັນເວລາ;
- ປຸງແຕ່ງ ແລະວິໄຈໃນຫົວຂໍ້ຕ່າງໆ ເພື່ອໃຫ້ທັນກັບສະພາບການ ແລະສາມາດຕິດຕາມເປົ້າໝາຍການພັດທະນາແບບຍືນຍົງ (SDGs) ທີ່ມີການສ້າງບົດລາຍງານໃນແຕ່ລະໄລຍະ;
- ຂຶ້ນແຜນການສ້າງຄວາມເຂັ້ມແຂງ ແລະຄວາມຮູ້ຄວາມສາມາດທີ່ເໝາະສົມໃຫ້ພະນັກງານໃນຂັ້ນສູນກາງ ແລະທ້ອງຖິ່ນ ກ່ຽວກັບການເກັບກຳຂໍ້ມູນ, ການປຸງແຕ່ງ, ວິໄຈ ແລະການຄຸ້ມຄອງຖານຂໍ້ມູນ;
- ຄົ້ນຄວ້າ, ຄາດຄະເນຄວາມຕ້ອງການດ້ານງົບປະມານ ແລະລະດົມແຫຼ່ງທຶນ ຈາກພາກສ່ວນລັດຖະບານ ແລະ ຄູ່ຮ່ວມພັດທະນາ (ສະໜັບສະໜູນດ້ານການເງິນ ແລະວິຊາການ) ເພື່ອຊ່ວຍເຫຼືອທາງດ້ານວິຊາການ ແລະ ເຕັກນິກຕ່າງໆ ໃນການຈັດຕັ້ງການຜະລິດບັນດາຕົວຊີ້ບອກ ແລະຮັບປະກັນມາດຖານສາກົນ.

**<u>ແຜນງານ 10</u>:** ປັບປຸງການເຜີຍແຜ່, ສ້າງສຳນວນສຳເນົາ ຂໍ້ມູນຂ່າວສານສະຖິຕິທາງການ, ການແລກປ່ຽນຂໍ້ມູນຂ່າວສານ, ເພີ່ມການເຂົ້າເຖິງ ຖານຂໍ້ມູນເຜີຍແຜ່ ດ້ວຍວິທີການທີ່ຫຼາກຫຼາຍ ເພື່ອເຮັດໃຫ້ຜູ້ຊົມໃຊ້ສາມາດເຂົ້າໃຈງ່າຍ ແລະ ນຳໃຊ້ຖືກຕ້ອງຕາມຫຼັກການວິທະຍາສະຖິຕິ.

**<u>ກິດຈະກຳ:</u>**

ສູນສະຖິຕິແຫ່ງຊາດ ເປັນເຈົ້າການໃນການເຜີຍແຜ່, ຊຸກຍູ້ ແລະຮ່ວມມືກັບຜູ້ຜະລິດອື່ນໆ ທົ່ວລະບົບສະຖິຕິຕາມມາດຕະຖານການເຜີຍແຜ່ຂໍ້ມູນສະຖິຕິທາງການ ບັນດາກິດຈະກຳຕົ້ນຕໍ ທີ່ຈຳເປັນມີດັ່ງນີ້:

- ສ້າງ ແລະຊຸກຍູ້ການຈັດຕັ້ງຜັນຂະຫຍາຍ ຍຸດທະສາດການເຜີຍແຜ່ຂໍ້ມູນສະຖິຕິທາງການ ໃຫ້ຕິດພັນກັບຄວາມຕ້ອງການ ແລະ ການເຂົ້າເຖິງຂໍ້ມູນຂອງຜູ້ນຳໃຊ້ທາງພາຍໃນ ແລະຕ່າງປະເທດ ເຊັ່ນ: ກຳນົດນະໂຍບາຍການເຜີຍແຜ່ຂໍ້ມູນສະຖິຕິທາງການ ແລະ ແຈ້ງໃຫ້ຜູ້ນຳໃຊ້ຂໍ້ມູນຮັບຊາບກ່ຽວກັບເວລາໃນການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການສຳຫຼວດຕ່າງໆລ່ວງໜ້າ ໂດຍສ້າງເປັນບັນຊີລະອຽດຕາມລຳດັບ;
- ສ້າງສິ່ງໂຄສະນາຊວນເຊື່ອຕ່າງໆ ເພື່ອຮັບປະກັນການປຸກລະດົມຂົນຂວາຍໃຫ້ທຸກພາກສ່ວນປະກອບສ່ວນ ແລະ ໃຫ້ການໜັບສະໜູນຕໍ່ຂະບວນການຜະລິດຂໍ້ມູນສະຖິຕິທາງການໃນແຕ່ລະໄລຍະ;
- ປັບປຸງ ແລະຂະຫຍາຍວິທີການເຜີຍແຜ່ຂໍ້ມູນສະຖິຕິທາງການໃຫ້ໄດ້ໃນຫຼາຍຮູບແບບ ແລະທັນເວລາ, ໂດຍສະເພາະແມ່ນການນຳໃຊ້ລະບົບເວັບໄຊເພື່ອເຜີຍແຜ່ຜົນການສຳຫຼວດຕ່າງໆ. ສູນສະຖິຕິແຫ່ງຊາດ ຈະສ້າງແຜນເວລາການເຜີຍແຜ່, ການຈັດພິມ ແລະ ການເຜີຍແຜ່ທາງເວັບໄຊ, ນຳໃຊ້ລະບົບແຜນທີ່, ຮູບແບບຮູບພາບ (Info Graphics)ໃນການເຜີຍແຜ່ຂໍ້ມູນ. ນຳໃຊ້ ແລະພັດທະນາຊອບແວຣ໌ ລາວອິນໂຟ (Laoinfo), ດີຊາຍອິນໂຟ(Decide Info), ແອລນາດາ (LNADA) ເພື່ອເຜີຍແຜ່ບັນດາຕົວຊີ້ບອກຕ່າງໆ ສຳລັບສະຖິຕິເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມ;
- ຈັດຕັ້ງປະຕິບັດການເຜີຍແຜ່ຂໍ້ມູນສະຖິຕິທາງການ ທີ່ໄດ້ຈາກການສຳຫຼວດ ແລະ ລະບົບການລາຍງານແບບບໍລິຫານໃນຮູບແບບຖະແຫຼງຂ່າວຜ່ານສື່ຕ່າງໆ;
- ປັບປຸງລະບົບການສ້າງຖານຂໍ້ມູນ ແລະ ເອກະສານສຳນວນຂ່າວສານຂໍ້ມູນ ເພື່ອໃຫ້ໄປຕາມມາດຖານ E-GDDS ສຳລັບການເຜີຍແຜ່ຂໍ້ມູນທົ່ວໄປ;

- ສ້າງຖານຂໍ້ມູນເຜີຍແຜ່ໃນການເຊື່ອມໂຍງກັບສາກົນ ດ້ວຍລະບົບຂໍ້ມູນສະຖິຕິ ແລະ ການແລກປ່ຽນສຳນວນຂໍ້ມູນ (Statistical Data and Metadata Exchange (SDMX));
- ເຜີຍແຜ່ ແລະ ຊຸກຍູ້ສົ່ງເສີມການຮຽນຮູ້ສະຖິຕິຕິສຳລັບຜູ້ນຳໃຊ້ຂໍ້ມູນ;
- ສ້າງປື້ມວາລະສານສະຖິຕິປະຈຳປີ ແລະ ວາລະສານສະຖິຕິອື່ນໆ;
- ປັບປຸງ ແລະ ພັດທະນາລະບົບຫ້ອງສະໝຸດໃຫ້ເປັນລະບົບທັນສະໄໝ;
- ສ້າງ ແລະ ປັບປຸງສຳນວນສຳເນົາ ຂໍ້ມູນຂ່າວສານສະຖິຕິທາງການ ເພື່ອເພີ່ມທະວີຄວາມສາມາດໃນການນຳໃຊ້ຂໍ້ມູນສະຖິຕິ;
- ຄຸ້ມຄອງສາງ, ເກັບກຳ, ສັງລວມບັນດາເອກະສານມູນເຊື້ອສະຖິຕິ, ປະຫວັດສະຖິຕິ ແລະ ອຸປະກອນທາງດ້ານປະຫວັດສາດສະຖິຕິ, ຈັດຫາບັນດາສື່ຄວາມຮູ້ທີ່ເປັນສິ່ງພິມຕ່າງໆ;
- ຈັດຕັ້ງປະຕິບັດການສຳຫຼວດຄວາມພໍໃຈຂອງຜູ້ນຳໃຊ້ຂໍ້ມູນສະຖິຕິທາງການ ແລະ ຄຸນນະພາບເພື່ອຮັບປະກັນໃຫ້ສາມາດວັດແທກຄວາມເພິ່ງພໍໃຈ ແລະ ຄຳຄິດເຫັນທາງດ້ານເວລາ ໃນການຕອບສະໜອງຂໍ້ມູນຂ່າວສານ ແລະ ຄວາມຊັດເຈນຂອງຂໍ້ມູນ.

**<u>ແຜນງານ 11</u>:** ສ້າງລະບົບປ້ອງກັນຄວາມປອດໄພ ແລະ ການຮັກສາຂໍ້ມູນສະຖິຕິ ໃນບັນດາເຄືອຂ່າຍສະຖິຕິເພື່ອຫຼີກຫຼ່ຽງຖານຂໍ້ມູນສູນເສຍ, ຮັກສາຄວາມລັບຂອງຂໍ້ມູນສະຖິຕິ ແລະ ສ້າງສູນກາງເກັບກຳຂໍ້ມູນສະຖິຕິ (Data Center) ຢ່າງເປັນລະບົບມາດຖານສາກົນ.

**<u>ກິດຈະກຳ:</u>**

- ສ້າງສູນສັງລວມຂໍ້ມູນຢູ່ ສູນສະຖິຕິແຫ່ງຊາດ (Data Center) ເພື່ອຮັກສາຄັງຂໍ້ມູນ ແລະ ແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ ລະຫວ່າງ ສາຍຕັ້ງ ແລະ ສາຍຂວາງ;
- ສ້າງ ແລະ ພັດທະນາລະບົບການປ້ອງກັນ ແລະ ຮັກສາຖານຂໍ້ມູນສະຖິຕິໃນບັນດາເຄືອຂ່າຍສະຖິຕິ ເພື່ອຫຼີກຫຼ່ຽງການສູນເສຍຂໍ້ມູນສະຖິຕິ ແລະການເປີດເຜີຍຄວາມລັບຂອງຂໍ້ມູນສະຖິຕິ;
- ສ້າງ, ປັບປຸງ ແລະ ພັດທະນາຖານຂໍ້ມູນການສຳຫຼວດ, ຖານຂໍ້ມູນການລາຍງານໃຫ້ເປັນລະບົບລວມສູນ ພ້ອມໄປຕາມມາດຖານສາກົນໃນລະບົບສະຖິຕິແຫ່ງຊາດ;
- ຄົ້ນຄວ້າ ແລະພັດທະນາຕອບສະໜອງ ໂປຣແກຣມສະເພາະໃນການເກັບກຳສັງລວມຂໍ້ມູນ ແລະ ການຝຶກອົບຮົມໃຫ້ຂັ້ນທ້ອງຖິ່ນຢ່າງຕໍ່ເນື່ອງ;
- ສ້າງ, ປັບປຸງ ແລະພັດທະນາຄັງຖານຂໍ້ມູນສຳລັບການເຜີຍແຜ່ (Data Warehouse) ແຕ່ສູນກາງຮອດທ້ອງຖິ່ນ;
- ສ້າງ, ພັດທະນາຖານຂໍ້ມູນ, ໂປຣແກຣມເກັບກຳຂໍ້ມູນ ແລະຄຸ້ມຄອງລະບົບຖານຂໍ້ມູນການເກັບກຳສະຖິຕິຂັ້ນບ້ານ ເພື່ອຮອບຮອມໃນລະດັບເມືອງ ແລະແຂວງ ຈົນເຖິງ ສູນກາງ;
- ປຶກສາຫາລືກ່ຽວກັບການແລກປ່ຽນຂໍ້ມູນສະຖິຕິ, ສ້າງລະບົບເຄື່ອງມື ເພື່ອອຳນວຍຄວາມສະດວກໃນການເກັບກຳຂໍ້ມູນ, ການປຸງແຕ່ງ, ການເຜີຍແຜ່ຂໍ້ມູນ ແລະ ການເຊື່ອມໂຍງລະບົບເຄືອຂ່າຍໃນແຕ່ລະໄລຍະ ແຕ່ສູນກາງຮອດທ້ອງຖິ່ນ;
- ຄຸ້ມຄອງ ແລະ ພັດທະນາລະບົບສາງ ສຳລັບອຸປະກອນໄອຊີທີ ແລະແບບສອບຖາມການສຳຫຼວດ.

**<u>ແຜນງານ 12</u>:** ເພີ່ມທະວີການຮ່ວມມືກັບພາກພື້ນ ແລະ ສາກົນ ໃຫ້ມີຄວາມເຂັ້ມແຂງທາງດ້ານການຄຸ້ມຄອງບໍລິຫານ ແລະ ລະດັບວິຊາສະເພາະສະຖິຕິ ເພື່ອການແລກປ່ຽນປະສົບການ, ວິຊາການ ແລະ ການເຊື່ອມໂຍງເຂົ້າສູ່ມາດຕະຖານສາກົນ.

**ກິດຈະກຳ:**

- ສ້າງກົນໄກ ແລະຮັດແໜ້ນການຮ່ວມມື ເພື່ອເສີມສ້າງສາຍພົວພັນທາງດ້ານວິຊາການກັບບັນດາປະເທດສະມາຊິກອາຊຽນ ແລະອາຊີປາຊີຟິກ ກໍ່ຄືໃນໂລກ ທີ່ເຫັນວ່າຈຳເປັນສຳລັບການປັບປຸງວຽກງານສະຖິຕິຂອງ ສປປ ລາວ ແລະການເຊື່ອມໂຍງກັບສາກົນ;
- ໃຫ້ມີການຮ່ວມມືກັບບັນດາປະເທດອາຊຽນ ແລະຍາດແຍ່ງການຊ່ວຍເຫຼືອ ເພື່ອຍົກລະດັບ ແລະການສ້າງຄວາມອາດສາມາດ;
- ສ້າງກົນໄກ ແລະຮັດແໜ້ນການຮ່ວມມື ທາງດ້ານວິຊາການກັບບັນດາປະເທດ ແລະອົງການຈັດຕັ້ງສາກົນ ແລະຄູ່ຮ່ວມພັດທະນາທັງພາຍໃນ ແລະຕ່າງປະເທດ ເພື່ອປັບປຸງການສ້າງເຄື່ອງມືໃນການເກັບກຳ, ການຜະລິດສະຖິຕິທີ່ໜ້າເຊື່ອຖື ທັນເປັນທັນສະໄໝ ແລະ ບັນດາລະບອບວິທີວິທະຍາ, ການລາຍງານ, ການເຜີຍແຜ່ຂໍ້ມູນຂ່າວສານສະຖິຕິທາງການ ຂອງລະບົບສະຖິຕິແຫ່ງຊາດ;
- ສ້າງຕາໜ່າງຮ່ວມມືໃນລະດັບພາກພື້ນ ແລະ ສາກົນໂດຍສະເພາະໃນບັນດາປະເທດ (ອາຊຽນບວກ3), ເຂົ້າຮ່ວມກອງປະຊຸມສະຖິຕິໃນຂົງເຂດອາຊຽນ, ອາຊີ-ປາຊີຟິກ ເພື່ອແລກປ່ຽນບົດຮຽນໃນການບໍລິຫານຄຸ້ມຄອງວຽກງານສະຖິຕິ ທີ່ມີປະສິດພາບ ແລະປະສິດທິຜົນ ໃນຂະບວນວິວັດທະນາການ ແລະທັນເປັນທັນສະໄໝ;

**ແຜນງານ 13:** ຍົກສູງບົດບາດ ແລະ ໃຫ້ຄວາມສຳຄັນຕໍ່ການປະສານງານ ທັງພາຍໃນ ແລະ ພາຍນອກ ເພື່ອຫຼີກຫຼ່ຽງຄວາມຊ້ຳຊ້ອນ, ສິ້ນເປືອງງົບປະມານ ແລະ ເວລາ.

**ກິດຈະກຳ**

- ໂດຍອີງໃສ່ກົດໝາຍວ່າດ້ວຍ ສະຖິຕິ ແລະ ດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍ ສະຖິຕິ ເພື່ອເອກະພາບໃນການກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ແລະກຳນົດຕາຕະລາງເວລາການລາຍງານເຜີຍແຜ່ຂໍ້ມູນສະຖິຕິທາງການ ທີ່ສາມາດຈັດຕັ້ງປະຕິບັດໄດ້ ໂດຍຄຳນຶງເຖິງຄວາມຕ້ອງການຂອງລັດຖະບານ ແລະໃນເງື່ອນໄຂຄວາມເປັນຈິງ ໃນການເຄື່ອນໄຫວວຽກງານສະຖິຕິ;
- ປະເມີນກົນໄກການປະສານງານ ທີ່ນຳໃຊ້ຢູ່ໃນປະຈຸບັນ ຂອງບັນດາອົງການສະຖິຕິແຫ່ງຊາດໃນຂົງເຂດ, ໂດຍສະເພາະໃນບັນດາປະເທດອາຊຽນ;
- ສ້າງລະບົບຮັບປະກັນຄຸນພາບດ້ານສະຖິຕິ, ໂດຍສະເພາະ ກໍລະນີຜູ້ນຳໃຊ້ຂໍ້ມູນຈະມີການດຳເນີນກິດຈະກຳສະຖິຕິທາງການເຊັ່ນ: ການສຳຫຼວດ, ອອກແບບ, ຕ້ອງຜ່ານສູນສະຖິຕິແຫ່ງຊາດ ເພື່ອກວດກາທາງດ້ານຫຼັກວິທະຍາສາດສະຖິຕິເຊັ່ນ: ການນິຍາມ, ການນຳໃຊ້ລະບົບສາລະບານ, ການອອກແບບໃບສອບຖາມ, ການອອກແບບຕົວແທນ, ການວາງແຜນການສຳຫຼວດ ເພື່ອບັນລຸການນຳໃຊ້ຊັບພະຍາກອນ ແລະ ຫຼີກຫຼ່ຽງຄວາມບໍ່ຊັດເຈນຂອງຂໍ້ມູນ;
- ສ້າງຄະນະຮັບຜິດຊອບ ແລະ ໜ່ວຍງານວິຊາການໃນຂົງເຂດຕ່າງໆເຊັ່ນ: ຂົງເຂດສະຖິຕິການບັນຊີແຫ່ງຊາດ, ການຄ້າສາກົນ, ການລົງທຶນ, ການເງິນ, ເງິນຕາ, ດຸນການຊຳລະລະຫວ່າງປະເທດ, ການສຳຫຼວດຕ່າງໆ ແລະ ໜ່ວຍງານວິຊາການອື່ນໆ; ບັນດາໜ່ວຍງານດັ່ງກ່າວ ຕ້ອງຮັບຜິດຊອບ ແລະ ເຮັດວຽກຢ່າງຕໍ່ເນື່ອງ, ຮັບປະກັນຫຼັກວິທະຍາສາດສະຖິຕິ. ນອກນັ້ນ, ການດຳເນີນວິໄຈຄວາມທຸກຍາກ, ການຂຽນບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ ກໍ່ສາມາດຖືເປັນກົນໄກອັນໜຶ່ງ ລະຫວ່າງອົງກອນໃນການປະສານງານ;

– ເສີມສ້າງ ແລະປັບປຸງການປະສານກັບອົງການຈັດຕັ້ງສາກົນ ໃນວຽກງານສະຖິຕິ ໃຫ້ມີຄວາມເຂັ້ມແຂງໂດຍຜ່ານການຮ່ວມມືກັບກົມຮ່ວມມືສາກົນ ຂອງກະຊວງແຜນການ ແລະການລົງທຶນ, ສ້າງຕັ້ງໜ່ວຍງານດ້ານວິຊາການຮ່ວມ ລະຫວ່າງລັດຖະບານ ແລະ ອົງການຈັດຕັ້ງສາກົນໃນການກະກຽມ ແລະ ຈັດຫາຕົວຊີ້ບອກ ກ່ຽວກັບການພັດທະນາ ໂດຍສະເພາະແມ່ນຕົວຊີ້ບອກຢູ່ໃນເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ບັນດາຕົວຊີ້ບອກສຳຄັນຕໍ່ການປະເມີນປະເທດຂອງເຮົາ ໃນການຫຼຸດພົ້ນປະເທດທີ່ດ້ອຍພັດທະນາ (LDC) ໃນປີ 2020 (ລວມຍອດລາຍໄດ້ແຫ່ງຊາດ (GNI), ດັດຊະນີຊັບສິນມະນຸດ (HAI) ແລະ ດັດຊະນີຄວາມອ່ອນໄຫວທາງດ້ານເສດຖະກິດ (EVI));
– ສຶກສາຄົ້ນຄວ້າ ເພື່ອຫຼີກຫຼ່ຽງຄວາມຊໍ້າຊ້ອນໃນການຜະລິດສະຖິຕິ ໂດຍການວາງແຜນ, ການແບ່ງຄວາມຮັບຜິດຊອບ, ກຳນົດແຫຼ່ງຂໍ້ມູນ, ຮູບການການເກັບກຳ;

**<u>ແຜນງານ 14</u>:** ຍົກລະດັບຄວາມຮູ້, ຄວາມສາມາດ ແລະ ຄວາມຊຳນານວຽກຂອງພະນັກງານສະຖິຕິໃຫ້ສາມາດກ້າວໄປເປັນຊ່ຽວຊານທີ່ມີປະສິບການ ແລະ ມີຄວາມຊຳນານງານຕາມມາດຕະຖານສາກົນ.

**<u>ກິດຈະກຳ:</u>**

ການພັດທະນາຊັບພະຍາກອນມະນຸດ ໃຫ້ກັບ ລະບົບສະຖິຕິແຫ່ງຊາດ ແມ່ນຈຳເປັນທີ່ສຸດ ເພື່ອເພີ່ມປະສິດທິພາບ ແລະສ້າງຄວາມເຂັ້ມແຂງໃນຫຼາຍດ້ານ ຊຶ່ງສະແດງອອກໃນຫຼາຍກິດຈະກຳຕົ້ນຕໍດັ່ງນີ້:

– ສຶກສາຄວາມເປັນໄປໄດ້, ຄົ້ນຄ້ວາ ແລະ ສ້າງແຜນການຮ່ວມມືກັບມະຫາວິທະຍາໄລແຫ່ງຊາດເພື່ອສ້າງສາຂາວິຊາສະຖິຕິ ເຂົ້າໃນພາກວິຊາວິທະຍາສາດທຳມະຊາດ ຫຼື ພາກວິຊາເສດຖະສາດ;
– ຄົ້ນຄ້ວາ ແລະນຳສະເໜີ ສ້າງຕັ້ງພະແນກຝຶກອົບຮົມວຽກງານສະຖິຕິຂັ້ນສູນກາງ ພ້ອມດຽວກັນນັ້ນໃນຂັ້ນທ້ອງຖິ່ນ ກໍ່ຕ້ອງມີທີມງານຝຶກອົບຮົມວຽກງານສະຖິຕິ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວ;
– ຈັດຕັ້ງການຝຶກອົບຮົມທີ່ຈຳເປັນຕ່າງໆວິຊາການ, ການບໍລິຫານ ແລະ ການວາງແຜນຕ່າງໆ ໃຫ້ແກ່ການຈັດຕັ້ງສະຖິຕິແຫ່ງຊາດ ທັງສາຍຕັ້ງ ແລະ ສາຍຂວາງ ນັບແຕ່ສູນກາງ ຈົນເຖິງທ້ອງຖິ່ນ (ຂັ້ນເມືອງ) ໂດຍເລັ່ງໃສ່ເນື້ອໃນດັ່ງນີ້:
  - ວິຊາການດ້ານສະຖິຕິ ປະກອບມີ:
    - ຮູບແບບມາດຕະຖານສະຖິຕິ, ສະຖິຕິພື້ນຖານ, ສະຖິຕິການນຳໃຊ້, ການນຳໃຊ້ໂປຣແກຣມດ້ານສະຖິຕິຕ່າງໆ, ການວິເຄາະວິໄຈຊຸດຂໍ້ມູນ, ການບໍລິຫານການສຳຫຼວດ, ການຄຸ້ມຄອງລະບົບໄອທີ, ຂໍ້ມູນຂ່າວສານເຕັກໂນໂລຊີ, ພາສາຕ່າງປະເທດ, ການຄຸ້ມຄອງການເງິນ, ການຂຽນບົດລາຍງານ ແລະ ສະຖິຕິອື່ນໆ ໃຫ້ພະນັກງານໃນລະບົບສະຖິຕິແຫ່ງຊາດ;
    - ການນຳໃຊ້ ແລະ ໝູນໃຊ້ບັນດາວິທີການ, ລະບົບລະຫັດສາລະບານສາກົນໃນຂົງເຂດສະຖິຕິ;
    - ການສ້າງຖານຂໍ້ມູນ, ການປ້ອນຂໍ້ມູນນຳໃຊ້ສະແກນເນີ, ແທັບເລັດ, ເວັບໄຊ;
    - ການສ້າງເອກະສານສຳນວນຂໍ້ມູນຂ່າວສານສະຖິຕິສຳລັບການເຜີຍແຜ່ທົ່ວໄປລວມທັງການສະເໜີເຜີຍແຜ່ຂໍ້ມູນດິບຈາກການສຳຫຼວດ ອີງຕາມບົດແນະນຳ ນະໂຍບາຍການເຜີຍແຜ່ສະຖິຕິທາງການ;
  - ດ້ານການຄຸ້ມຄອງບໍລິຫານ, ການວາງແຜນ ແລະ ການປະເມີນຕ່າງໆ ປະກອບມີ:

- ການບໍລິການອີງກອນ ແລະ ການຄຸ້ມຄອງບໍລິຫານການດຳເນີນວຽກ, ການບໍລິຫານໂຄງການ, ການປະເມີນຄວາມຕ້ອງການ, ການກຳນົດຍຸດທະສາດ ແລະ ການວາງແຜນ;
- ວິທີການຈັດຕັ້ງປະຕິບັດ ຍຸດທະສາດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ ແລະ ວິໄສທັດ 2030;

– ການປຸງແຕ່ງຂໍ້ມູນເຊັ່ນ: ການປ້ອນຂໍ້ມູນ, ການກວດແກ້ຂໍ້ມູນ, ການໃສ່ລະຫັດສາລະບານສະຖິຕິການອະນາໄມຂໍ້ມູນ, ການວິເຄາະວິໄຈ, ການຄາດຄະເນ ແລະການສ້າງຕາຕະລາງສະເໜີຜົນ;

– ຄົ້ນຄວ້າ, ສ້າງບັນດາຫຼັກການໃນການອອກແບບຂະໜາດຕົວແທນ ແລະ ວິທີການຄັດເລືອກຕົວແທນຂອງການສຳຫຼວດ ໂດຍອີງໃສ່ມາດຖານ ແລະ ຫຼັກການຂອງສາກົນ;

– ສົ່ງລວມບົດຮຽນ, ຊຸກຍູ້ ແລະ ອຳນວຍຄວາມສະດວກເພື່ອໃຫ້ມີການຜັນຂະຫຍາຍຜົນຂອງການເຂົ້າຮ່ວມຝຶກອົບຮົມ ດ້ານສະຖິຕິຈາກພາຍໃນ ແລະຕ່າງປະເທດ ຂອງພະນັກງານພາຍໃນສູນສະ ຖິຕິແຫ່ງຊາດ;

– ສ້າງ ແລະ ພັດທະນາຄູ່ມືການຮຽນ-ການສອນ ການຝຶກອົບຮົມໄລຍະສັ້ນ,ໄລຍະກາງ, ໄລຍະຍາວກ່ຽວກັບການນຳໃຊ້ສະຖິຕິທົ່ວໄປ ລວມທັງການນຳໃຊ້ໂປຣແກຣມດ້ານສະຖິຕິ;

– ປະສານງານກັບບັນດາໂຮງຮຽນ, ສະຖາບັນຕ່າງໆທັງພາຍໃນ ແລະ ຕ່າງປະເທດໃນການສ້າງ ແລະ ພັດທະນາຫຼັກສູດການຮຽນ-ການສອນ ທາງດ້ານວິທະຍາສາດສະຖິຕິ;

– ເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດໃຫ້ທົ່ວລະບົບສະຖິຕິ;

– ຄົ້ນຄວ້າ ແລະ ສ້າງແຜນຮ່ວມກັນກັບບັນດາຂະແໜງການ ນັບແຕ່ສູນກາງຮອດທ້ອງຖິ່ນ ເພື່ອກຳນົດຄວາມຕ້ອງການ ການຍົກລະດັບຄວາມຮູ້ ແລະ ທັກສະທີ່ຈຳເປັນ ໃຫ້ແກ່ພະນັກງານສະຖິຕິ

– ປະເມີນການຈັດຕັ້ງສ້າງຄວາມອາດສາມາດດ້ານສະຖິຕິ ຂັ້ນສູນກາງ ແລະ ທ້ອງຖິ່ນ;

– ຍົກລະດັບໃຫ້ພະນັກງານ/ວິຊາການ ຈາກປະລິນຍາຕີ, ປະລິນຍາໂທ ແລະ ຈາກປະລິນຍາໂທໄປສູ່ປະລິນຍາເອກ.

**<u>ແຜນງານ 15.</u>** ຊຸກຍູ້ ແລະ ສະໜັບສະໜູນໃນການລະດົມທຶນຮອບຂ້ຳໃນວຽກງານສະຖິຕິ ເພື່ອໃຫ້ມີງົບປະມານໃນລະດັບອັນແນ່ນອນ ແລະ ສາມາດດຳເນີນການເຄື່ອນໄຫວວຽກງານສະຖິຕິ ຂອງລະບົບສະຖິຕິແຫ່ງຊາດ.

**<u>ກິດຈະກຳ:</u>**

– ເຜີຍແຜ່ຜົນສຳເລັດ, ຄວາມສຳຄັນ ແລະຜົນປະໂຫຍດຂອງວຽກງານສະຖິຕິ ເພື່ອຈັດຕັ້ງການປຸກລະດົມ, ຊຸກຍູ້ສົ່ງເສີມການລະດົມແຫຼ່ງທຶນຈາກຫຼາຍແຫຼ່ງ, ຫຼາຍພາກສ່ວນຈຳເປັນຕ້ອງໄດ້ສືບຕໍ່ໃຫ້ໄດ້ຕາມເປົ້າໝາຍ ໃນການລິເລີ່ມຈັດຕັ້ງປະຕິບັດກິດຈະກຳຕ່າງໆທີ່ກ່ຽວຂ້ອງ ເພື່ອຫຼີກຫຼ່ຽງຄວາມຫຼ້າຊ້າ;

– ການຄົ້ນຄວ້າ ແລະ ຂຸດຄົ້ນແຫຼ່ງທຶນຈັດຕັ້ງປະຕິບັດຍຸດທະສາດ ກໍ່ຄືແຜນດຳເນີນງານ ຂອງວຽກງານສະຖິຕິຕ້ອງພຽງພໍ ແລະ ຕອບສະໜອງຜ່ານຂະບວນການທາງກົດໝາຍ ໃນການຈັດສັນງົບປະມານສຳລັບວຽກງານການພັດທະນາສະຖິຕິ ຈາກລັດຖະບານ, ບັນດາກອງທຶນວິຊາການທີ່ກ່ຽວຂ້ອງ, ການປະກອບສ່ວນຂອງສັງຄົມ (ຫົວໜ່ວຍທຸລະກິດພາກລັດ, ເອກະຊົນ ແລະ ບຸກ

ຄົນ) ເພື່ອຕອບສະໜອງຂໍ້ມູນຂ່າວສານ ອັນຈຳເປັນເພື່ອຮັບປະກັນການສຳຫຼວດໃຫ່ຍ ແລະ ຕົວແທນທີ່ສຳຄັນໄດ້ຈັດຕັ້ງປະຕິບັດຕາມເປົ້າໝາຍ;

– ຄົ້ນຄວ້າ ແລະ ສ້າງແຜນງົບປະມານຂອງການຈັດຕັ້ງໃນແຕ່ລະຂັ້ນ, ບັນດາກະຊວງ, ແຂວງ ແລະ ເມືອງ ສ້າງແຜນ ແລະ ນຳສະເໜີງົບປະມານທີ່ຈຳເປັນປະຈຳປີ ໃຫ້ອົງການທີ່ຕິນຂຶ້ນກັບ;
– ເພີ່ມທະວີການປະສານສົມທົບ ລະຫວ່າງຜູ້ຜະລິດສະຖິຕິ ໃນລະບົບສາຍຕັ້ງ ແລະ ສາຍຂວາງ ເພື່ອແລກປ່ຽນ ແລະພ້ອມກັນຈັດຕັ້ງປະຕິບັດກິດຈະກຳການຝຶກອົບຮົມສ້າງຄວາມອາດສາມາດ;
– ຊຸກດັນໃຫ້ແຕ່ລະພາກສ່ວນ ຮັບຜິດຊອບການຕອບສະໜອງພະນັກງານໃຫ້ແຕ່ລະກົມ, ໜ່ວຍງານຫ້ອງການໃນລະບົບສະຖິຕິແຫ່ງຊາດຢ່າງພຽງພໍ, ຄົ້ນຄວ້າພິຈາລະນາສຶກສາວິທີການທີ່ຈະສົ່ງເສີມ, ເລື່ອນຊັ້ນ ແລະ ຂັ້ນທາງດ້ານວິຊາການຕະຫຼອດຮອດການໃຫ້ສິ່ງຈູງໃຈທາງພູມປັນຍາເພື່ອສາມາດຮັກສາພະນັກງານທີ່ມີທັກສະສູງ.

## 5. ຄວາມຕ້ອງການງົບປະມານ

ຜ່ານມາ, ການຈັດຕັ້ງປະຕິບັດຍຸດທະສາດໃນລະບົບສະຖິຕິແຫ່ງຊາດ ແຕ່ 2010-2015 ແມ່ນຍັງບໍ່ທັນຕອບສະໜອງຄວາມຕ້ອງ ການໄດ້ຢ່າງເຕັມສ່ວນ ໂດຍສະເພາະແມ່ນ ຄວາມພ້ອມຂອງບຸກຄະລາກອນ ແລະງົບປະມານ ເພື່ອຈັດຕັ້ງປະຕິບັດວຽກງານສະຖິຕິ. ສະນັ້ນ, ການຮັບປະກັນດ້ານງົບປະມານ ແລະ ແຫຼ່ງທຶນ ເພື່ອຈັດຕັ້ງປະຕິບັດວຽກງານສະຖິຕິ ລວມທັງ ການຍົກລະດັບຄຸນນະພາບຂອງບຸກຄະລາກອນໃນລະບົບສະຖິຕິແຫ່ງຊາດ ແມ່ນ ເປັນສິ່ງຈຳເປັນທີ່ສຸດ ແລະ ຄວນມີຢ່າງພຽງພໍ.

ເພື່ອຈັດຕັ້ງປະຕິບັດຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດ 2030 ນີ້, ໄດ້ມີການຄາດຄະເນງົບປະມານ ໂດຍພະຍາຍາມສັງລວມຄວາມຕ້ອງການທີ່ຈຳເປັນໃນການຈັດຕັ້ງປະຕິບັດວຽກງານສະຖິຕິ ເພື່ອເປັນບ່ອນອີງໃນການຊອກຫາແຫຼ່ງທຶນ. ແຫຼ່ງທຶນ ຫຼື ແຫຼ່ງງົບປະມານຫຼັກໃນການຈັດຕັ້ງປະຕິບັດວຽກງານສະຖິຕິ ແມ່ນມາຈາກ ລັດຖະບານ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ ແລະ ປະເທດເພື່ອນມິດ ພ້ອມທັງ ຜູ້ໃຫ້ທຶນອື່ນໆ ເພື່ອຮັບປະກັນ ແລະ ຫຼີກຫຼ່ຽງຂໍ້ຈຳກັດໃນການຈັດຕັ້ງປະຕິບັດການຜະລິດຂໍ້ມູນສະຖິຕິທີ່ມີຄຸນນະພາບ. ເຖິງຢ່າງ ໃດກໍ່ຕາມ, ງົບປະມານດັ່ງກ່າວ ກໍ່ຍັງບໍ່ທັນສາມາດກຳນົດກິດຈະກຳໃຫ້ຄອບຄຸມໄດ້ທັງໝົດໃນທົ່ວລະບົບສະຖິຕິ ຊຶ່ງບັນຫາເຫຼົ່ານີ້ຈະເຫັນແຈ້ງໂດຍຜ່ານການສະເໜີແຜນວຽກປະຈຳປີ.

ຈາກການຄາດຄະເນ ໂດຍສະເລ່ຍແລ້ວ ຄວາມຕ້ອງການງົບປະມານທັງໝົດແຕ່ປີ 2016-2025 ແມ່ນປະມານ 927.14 ຕື້ກີບ ຫຼື ສະເລ່ຍ 92.71 ຕື້ກີບຕໍ່ປີ ຊຶ່ງລວມຄວາມຕ້ອງການງົບປະມານການຈັດຕັ້ງປະຕິບັດ ຫຼື ການດຳເນີນງານທາງດ້ານສະຖິຕິ, ການພັດທະນາຊັບພະຍາກອນມະນຸດ, ການສຳຫຼວດ, ການບໍລິຫານ ແລະລາຍຈ່າຍອື່ນໆ (ບໍ່ລວມເອົາເງິນເດືອນຂອງພະນັກງານ); ງົບປະມານດັ່ງກ່າວຍັງບໍ່ລວມເອົາ ການກໍ່ສ້າງພື້ນຖານໂຄງລ່າງໄອຊີ ແລະ ສິ່ງອຳນວຍຄວາມສະດວກໃນການດຳເນີນງານ, ການສ້າງສູນຂໍ້ມູນຂ່າວສານໃຫ້ແກ່ ສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງແຕ່ສູນກາງລົງຮອດເມືອງ (ລະອຽດເບິ່ງເອກະສານຊ້ອນທ້າຍ IV.ກ-ຄ).

## ພາກທີ III: ມາດຕະການຈັດຕັ້ງປະຕິບັດຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025

ເພື່ອຮັບປະກັນການຈັດຕັ້ງປະຕິບັດຍຸດທະສາດ ເພື່ອການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ ຂອງ ສປປ ລາວ 2016-2025 ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ທຸກພາກສ່ວນຕ້ອງເປັນເຈົ້າການຈັດຕັ້ງປະຕິບັດວຽກງານສະຖິຕິທີ່ຕົນຮັບຜິດຊອບ, ມີພັນທະປະກອບສ່ວນ ແລະປະສານງານຢ່າງແໜ້ນແຟ້ນ ແລະແບ່ງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນຢ່າງຈະແຈ້ງ ແລະຕ້ອງປະຕິບັດ ການຕິດຕາມ, ກວດກາ ແລະປະເມີນຜົນໃນແຕ່ລະໄລຍະ ໂດຍໃຫ້ເອົາໃຈໃສ່ບາງມາດຕະການລຸ່ມນີ້:

1. ການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ ຕ້ອງໃຫ້ສອດຄ່ອງຕາມມະຕິກອງປະຊຸມໃຫຍ່ຄັ້ງທີ X ແລະ ຄັ້ງຕໍ່ໄປ ຂອງພັກ, ຕອບສະໜອງໃຫ້ແກ່ການຕິດຕາມ ແລະ ປະເມີນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ທີ IX, ບັນດາມະຕິຕົກລົງຂອງສະຖິຕິອົງການສະຫະປະຊາຊາດ, ອົງການສະຖິຕິອາຊີ ແລະ ປາຊີຟິກ ແລະ ຄະນະກໍາມະການສະຖິຕິອາຊຽນ;
2. ກະຊວງແຜນການ ແລະ ການລົງທຶນ ອອກຄໍາສັ່ງແນະນໍາໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດເພື່ອການພັດທະນາລະບົບສະຖິຕິແຫ່ງຊາດ ໂດຍສະເພາະແມ່ນ ການຜັນຂະຫຍາຍເນື້ອໃນຈິດໃຈ ຂອງເອກະສານຍຸດທະສາດສະບັບນີ້ໃຫ້ ແຜນແມ່ບົດ, ແຜນການ, ແຜນງານ, ໂຄງການ, ກິດຈະກໍາ, ຄາດໝາຍ, ບຸກຄະລາກອນ, ງົບປະມານ ແລະ ມາດຕະການຈັດຕັ້ງປະຕິບັດໃຫ້ລະອຽດ;
3. ເພື່ອຮັບປະກັນຄວາມສອດຄ່ອງ, ການສະໜັບສະໜູນຊຶ່ງກັນ ແລະກັນ ພ້ອມທັງຮັບປະກັນຄວາມເປັນເອກະພາບຂອງທຸກພາກສ່ວນ (ບັນດາກະຊວງ, ອົງການ, ຂະແໜງການ ແລະທ້ອງຖິ່ນ) ມີພັນທະ ແລະໜ້າທີ່ໃນການຈັດຕັ້ງປະຕິບັດ, ເຜີຍແຜ່, ແນະນໍາ ແລະ ບັນຈຸເຂົ້າໃນແຜນປະຕິບັດງານຂອງຕົນ ແລະຕ້ອງສ້າງເປັນ ແຜນແມ່ບົດ, ແຜນການ, ແຜນງານ, ໂຄງການ, ກໍານົດບັນດາກິດຈະກໍາ, ຄາດໝາຍ, ບຸກຄະລາກອນ, ງົບປະມານ ລວມທັງ ມາດຕະການຈັດຕັ້ງປະຕິບັດລະອຽດ;
4. ເພື່ອຮັບປະກັນວຽກງານ ສາມາດບັນລຸໄດ້ຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້, ທຸກພາກສ່ວນຄວນເອົາໃຈໃສ່ໃນການສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ໂດຍເລີ່ມຈາກການຍົກລະດັບຄວາມຮູ້ດ້ານສະຖິຕິພື້ນຖານໃນໄລຍະສັ້ນ ຫຼື ທັງເຮັດທັງຮຽນ ກ້າວໄປສູ່ການກໍ່ສ້າງໄລຍະກາງ ແລະໄລຍະຍາວ ສະນັ້ນ, ມັນຈໍາເປັນຕ້ອງໄດ້ຜັນຂະຫຍາຍ ແຜນພັດທະນາຊັບພະຍາກອນມະນຸດລວມຂອງລະບົບສະຖິຕິແຫ່ງຊາດ ເປັນຂອງຂະແໜງການໃຜມັນຢ່າງລະອຽດ;
5. ມອບໃຫ້ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະການລົງທຶນ ເປັນສູນກາງ ແລະ ໃຈກາງໃນການປະສານງານ ເພື່ອປັບປຸງລະບົບສະຖິຕິແຫ່ງຊາດ ທັງລະບົບສາຍຕັ້ງ ແລະ ສາຍຂວາງ; ພ້ອມດຽວກັນນັ້ນ, ການນໍາທຸກຂັ້ນຂອງລະບົບສາຍຂວາງ ຕ້ອງມີພັນທະປັບປຸງກົງຈັກການຈັດຕັ້ງ ແລະ ງົບປະມານຂອງຕົນໃຫ້ເໝາະສົມ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານສະຖິຕິໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ ໃຫ້ໄດ້ຮັບຜົນດີ ຊຶ່ງທຸກພາກສ່ວນໃນທຸກຂັ້ນ ແມ່ນໃຫ້ຖືເອົາ ວຽກງານສະຖິຕິ ເປັນວຽກໜຶ່ງ ທີ່ສໍາຄັນ ແລະ ກໍານົດເຂົ້າເປັນບູລິມະສິດໃນວຽກງານທີ່ຕົນຮັບຜິດຊອບ;
6. ການຈັດຕັ້ງປະຕິບັດວຽກງານໃນຍຸກປະຈຸບັນ ບົດບາດການປະສານງານດ້ານສະຖິຕິ ມີຄວາມຈໍາເປັນຢ່າງຍິ່ງ ເພື່ອບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍຂອງແຜນຍຸດທະສາດສະບັບນີ້ ໂດຍສະເພາະແມ່ນການຄຸ້ມຄອງບໍລິຫານວຽກງານສະຖິຕິເຊັ່ນ: ວຽກງານຈັດຕັ້ງ (ສະພາທີ່ປຶກສາແຫ່ງຊາດດ້ານສະຖິຕິ, ກົມ, ພະແນກ ແລະ ໜ່ວຍງານສະຖິຕິ); ການເຄື່ອນໄຫວວຽກງານລະຫວ່າງ ສາຍຕັ້ງ ແລະ ສາຍຂວາງ; ງົບປະມານ, ບຸກຄະລາກອນສະເພາະສະຖິຕິຂັ້ນບ້ານ ຈະຕ້ອງມີເອກະສານແນະນໍາຈະແຈ້ງ. ພ້ອມກັນນັ້ນກໍ່ໃຫ້ມີການຄົ້ນຄວ້າສ້າງ ສະພາທີ່ປຶກສາດ້ານສະຖິຕິ ຂຶ້ນຖ້າເຫັນວ່າມີຄວາມຈໍາເປັນ ແລະ ມີເງື່ອນໄຂທີ່

ເໝາະສົມ ເພື່ອຊ່ວຍໃນການຊຸກຍູ້ການຈັດຕັ້ງປະຕິບັດວຽກງານສະຖິຕິ ໃນແຕ່ລະຂົງເຂດໄປຕາມຫຼັກວິທະຍາສາດສະຖິຕິ;

7. ໃນຍຸກສະໄໝໃໝ່ ວຽກງານໂຄສະນາກໍ່ເປັນວຽກງານໜຶ່ງ ທີ່ມີບົດບາດສຳຄັນໃນການຊຸກຍູ້ວຽກງານສະຖິຕິໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ. ສະນັ້ນ, ວຽກງານມັນຮຽກຮ້ອງໃຫ້ທຸກພາກສ່ວນທີ່ມີສ່ວນມີພັນທະ ແລະ ປະກອບສ່ວນຮ່ວມກັບ ກະຊວງ, ອົງການທຽບເທົ່າ, ນະຄອນຫຼວງ, ແຂວງ ແລະ ເມືອງ;

8. ລັດຖະບານ ຕ້ອງໄດ້ຈັດສັນງົບປະມານແຫ່ງລັດ ພາກການລົງທຶນຂອງລັດ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຍຸດທະສາດພັດທະສາດພັດທະນາສະຖິຕິແຫ່ງຊາດ ຢ່າງເໝາະສົມ; ໃນກໍລະນີມີຄວາມຈຳເປັນໃນການຈັດຕັ້ງປະຕິບັດກິດຈະກຳອັນຮີບດ່ວນທາງດ້ານສະຖິຕິ ລັດຖະບານຈະຄົ້ນຄວ້າພິຈາລະນາການນຳໃຊ້ງົບປະມານຮັບໃຊ້ສະເພາະ;

9. ຄຽງຄູ່ກັບການຕອບສະໜອງແຫຼ່ງທຶນຈາກລັດຖະບານແລ້ວ ການນຳທຸກພາກສ່ວນ ແລະການຈັດຕັ້ງສະຖິຕິລະບົບສາຍຕັ້ງ ແລະ ສາຍຂວາງ ແຕ່ສູນກາງຮອດທ້ອງຖິ່ນ ຕ້ອງໄດ້ຍາດແຍ່ງການຊ່ວຍເຫຼືອ ແລະການລະດົມແຫຼ່ງທຶນຈາກຕ່າງປະເທດ ເຊັ່ນ: ການຮ່ວມມືສອງຝ່າຍ, ຫຼາຍຝ່າຍ, ອົງການຈັດຕັ້ງສາກົນ ແລະຄູ່ຮ່ວມພັດທະນາ ເພື່ອຈັດຕັ້ງປະຕິບັດວຽກວຽກງານສະຖິຕິ ສົມທົບກັບງົບປະມານຂອງລັດຖະບານ ໂດຍຜ່ານ:
   - ການສະເໜີບັນດາທິດທາງ, ແຜນງານ, ໂຄງການ ແລະ ກິດຈະກຳໃນແຕ່ລະໄລຍະ ໃຫ້ແກ່ພາກສ່ວນດັ່ງກ່າວຮັບຮູ້ ແລະ ເຂົ້າໃຈ ຊຶ່ງຈະສາມາດຈັດຕັ້ງປະຕິບັດໄດ້ໃນກອງປະຊຸມວຽກງານສະຖິຕິທັງພາຍໃນ ແລະ ຕ່າງປະເທດ, ຫຼື ຈັດການປະຊຸມສະເພາະ ຮ່ວມກັບຜູ້ໃຫ້ທຶນ;
   - ສູນສະຖິຕິແຫ່ງຊາດ ຮັບຜິດຊອບການປະສານງານໂດຍກົງກັບ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ປະສານກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດປົກຄອງທ້ອງຖິ່ນ ເພື່ອສ້າງກົນໄກໃນການລະດົມແຫຼ່ງທຶນໃຫ້ມີຄວາມເອກະພາບ ແລະ ສອດຄອງກັບຄວາມຕ້ອງການ ແຕ່ລະໄລຍະ;

10. ການຈັດຕັ້ງປະຕິບັດແຜນຍຸດທະສາດສະບັບນີ້ ຕ້ອງສອດຄ່ອງກັບແຜນຕ່າງໆຂອງບັນດາກະຊວງ, ອົງການນະຄອນຫຼວງ, ແຂວງ ແລະ ເມືອງ ໂດຍເນັ້ນໜັກແບບແຜນວິທີເຮັດວຽກບົນພື້ນຖານຫຼັກການລວມຄື: ເຮັດວຽກເປັນໝູ່ຄະນະບຸກຄົນຮັບຜິດຊອບ;

11. ທຸກພາກສ່ວນລວມທັງສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ມີໜ້າທີ່ຕິດຕາມ, ກວດກາ, ຕີລາຄາ, ປະເມີນຜົນ ແລະ ສະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນດຳເນີນງານຂອງຕົນໃນແຕ່ລະໄລຍະ, ລວມທັງການສະຫຼຸບ ແລະ ຕີລາຄາໝາກຜົນໃນໄລຍະກາງ ແລະ ໄລຍະທ້າຍຂອງການຈັດຕັ້ງປະຕິບັດແຜຍຍຸດທະສາດສະບັບນີ້ ທີ່ກ່ຽວພັນເຖິງ ຜົນສຳເລັດ ແລະ ສິ່ງທ້າທາຍໃນ ການບັນລຸເປົ້າໝາຍຕາມແຜນຍຸດທະສາດ ແລະ ກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດ ຫຼື ຍັງຄົງຄ້າງ ຊຶ່ງ 5 ປີທຳອິດ ແມ່ນສຸມໃສ່ ຜົນໄດ້ຮັບລວມ, ຄຸນະພາບ ແລະ ປັດໄຈຕ່າງໆທີ່ເປັນເງື່ອນໄຂ ແລະ ມີຜົນກະທົບຕໍ່ການຈັດຕັ້ງປະຕິບັດ; ໃນກໍລະນີ ທີ່ມີຄວາມຈຳເປັນ ກໍ່ຄວນມີການດັດປັບແຜນການຈັດຕັ້ງປະຕິບັດໃນຍຸດທະສາດສ່ວນທີ່ຍັງເຫຼືອ.

# ເອກະສານຊ້ອນທ້າຍ

# ລາຍການເອກະສານຊ້ອນທ້າຍ

1. ເອກະສານຊ້ອນທ້າຍ I:  ປະເພດສະຖິຕິທາງການຂອງ ສປປ ລາວ
2. ເອກະສານຊ້ອນທ້າຍ II: ສັງລວມຈຳນວນຕົວຊີ້ບອກ ແບ່ງປະເພດສະຖິຕິ ແລະ ຄາດໝາຍໃນການຜະລິດ, ປີ 2016-2025
3. ເອກະສານຊ້ອນທ້າຍ III: ສັງລວມບັນຊີການສຳຫຼວດ ແລະ ການເກັບກຳຂໍ້ມູນ, 2016-2025
4. ເອກະສານຊ້ອນທ້າຍ IV.ກ: ຄວາມຕ້ອງການງົບປະມານການໃຊ້ຈ່າຍທັງໝົດ 2016-2020
5. ເອກະສານຊ້ອນທ້າຍ IV.ຂ: ຄວາມຕ້ອງການງົບປະມານການໃຊ້ຈ່າຍທັງໝົດ 2021-2025
6. ເອກະສານຊ້ອນທ້າຍ IV.ຄ: ຄວາມຕ້ອງການງົບປະມານການໃຊ້ຈ່າຍທັງໝົດ 2016-2025

## ເອກະສານຊ້ອນທ້າຍ I. ປະເພດສະຖິຕິທາງການຂອງ ສປປ ລາວ

| ປະເພດສະຖິຕິທາງການ | ແຫຼ່ງຂໍ້ມູນຕົ້ນຕໍ |
|---|---|
| 1. ສະຖິຕິກະສິກຳ | ການສຳຫຼວດກະສິກຳ, ການສຳຫຼວດຄົວເຮືອນປະຈຳປີ, ການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ, ປຶ້ມສະຖິຕິບ້ານ, ການສຳຫຼວດຕົວແທນດ້ານກະສິກຳ, ລະບົບການເກັບກຳລາຍງານ ແບບບໍລິຫານ |
| 2. ສະຖິຕິອຸດສາຫະກຳ (ຂຸດຄົ້ນບໍ່ແຮ່, ອຸດສາຫະກຳປຸງແຕ່ງ, ຫັດຖະກຳແລະ ພະລັງງານ) | ການສຳຫຼວດວິສາຫະກິດ, ການສຳຫຼວດຕົວແທນວິສາຫະກິດປະຈຳປີ ແລະ ງວດ, ການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ, ລະບົບການເກັບກຳລາຍງານ ແບບບໍລິຫານ |
| 3. ສະຖິຕິການຄ້າພາຍໃນ | ການສຳຫຼວດວິສາຫະກິດ, ການສຳຫຼວດຕົວແທນວິສາຫະກິດປະຈຳປີ ແລະງວດ, ການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ,ລະບົບການເກັບກຳລາຍງານ ແບບບໍລິຫານ |
| 4. ສະຖິຕິຄົມມະນາຄົມ, ຂົນສົ່ງ, ໄປສະນີ, ໂທລະຄົມມະນາຄົມ, ກໍ່ສ້າງ ແລະ ສະຖິຕິອື່ນໆ | ການຂຶ້ນທະບຽນຍານພາຫະນະ, ການສຳຫຼວດສະເພາະຂອງການຂົນສົ່ງ, ການສຳຫຼວດວິສາຫະກິດ ການສຳຫຼວດຄົວເຮືອນປະຈຳປີ, ການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ ແລະ ລະບົບ ການເກັບກຳລາຍງານ ແບບບໍລິຫານ |
| 5. ສະຖິຕິທ່ອງທ່ຽວ | ການສຳຫຼວດການໃຊ້ຈ່າຍ ແລະ ຈຳນວນຄືນພັກຢູ່ໂຮງແຮມ, ການສຳຫຼວດຄົວເຮືອນປະຈຳປີ ແລະການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ ການສຳຫຼວດວິສາຫະກິດ, ການສຳ-ຫຼວດຄົວເຮືອນປະຈຳປີ, ການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ, ການສຳຫຼວດຕົວແທນສະເພາະ, ລະບົບການເກັບກຳລາຍງານ ແບບບໍລິຫານ ( ການບັນ ທຶກນັກທ່ອງທ່ຽວເຂົ້າອອກປະເທດ) |
| 6. ສະຖິຕິການລົງທຶນ | ການສຳຫຼວດວິສາຫະກິດ, ລະບົບການເກັບກຳລາຍງານ ແບບບໍລິຫານ |
| 7. ສະຖິຕິການຊ່ວຍເຫຼືອລ້າດ້ານວິຊາການຈາກຕ່າງປະເທດ | ລະບົບການເກັບກຳລາຍງານ ແບບບໍລິຫານ ( ກະຊວງ ການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ກະຊວງ ແຜນການ ແລະ ການລົງທຶນ) |
| 8. ສະຖິຕິການຄ້າຕ່າງປະເທດ | ລະບົບການເກັບກຳລາຍງານ ແບບບໍລິຫານ ( ກົມພາສີກະຊວງ ການເງິນ, ກະຊວງອຸດສາຫະກຳແລະການຄ້າ, ທະນາຄານ ແຫ່ງ ສ ປ ປລາວ) |
| 9. ສະຖິຕິດູນຊຳລະສະສາງ | ລະບົບການເກັບກຳລາຍງານ ແບບບໍລິຫານ (ກົມພາສີ ກະຊວງ ການເງິນ, ສະຖິຕິທະນາຄານ), ການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ ແລະ ການສຳຫຼວດ ສະເພາະອື່ນໆ |
| 10. ສະຖິຕິການເງິນ ແລະເງິນຕາ | ການສຳຫຼວດສະເພາະລະບົບການເງິນ ຂອງລະບົບທະນາຄານ, ການບັນທຶກແບບລະບົບບໍລິຫານ ຂອງ ທະນະຄານ ແຫ່ງ ສປປ ລາວ, ກະຊວງ ການເງິນ |
| 11. ສະຖິຕິການບັນຊີແຫ່ງຊາດ | ຂໍ້ມູນ ສະຖິຕິເສດຖະກິດ ແລະບັນດາຂະແໜງການ ຈາກການເກັບກຳ ໃນຮູບແບບ ລະບົບການເກັບກຳລາຍງານ ແບບບໍລິຫານ ແລະ ການສຳຫຼວດ |
| 12. ສະຖິຕິລາຄາ | ການສຳຫຼວດລາຄາ, ການສຳຫຼວດ ວິສາຫະກິດ, ການສຳຫຼວດ ການຊົມໃຊ້ ແລະ ໃຊ້ ຈ່າຍຄົວເຮືອນ ແລະ ລະບົບການເກັບກຳລາຍງານ ແບບບໍລິຫານ |
| 13. ສະຖິຕິພົນລະເມືອງ | ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ, ການສຳຫຼວດຄົວເຮືອນ, ການຈົດນັບພົນລະເມືອງກາງສະໄໝ |
| 14. ສະຖິຕິຄວາມທຸກຍາກ ແລະບົດບາດຍິງຊາຍ | ການສຳຫຼວດຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ, ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ, ລະບົບການເກັບກຳລາຍງານ ແບບບໍລິຫານ |
| 15. ສະຖິຕິການສຶກສາ | ລະບົບການເກັບກຳລາຍງານ ແບບບໍລິຫານ, ການສຳຫຼວດຄົວເຮືອນ ແລະ ທີ່ຢູ່ອາໄສ, ການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ, ການສຳຫຼວດແຕ້ມແຜ່ນທີ່ໂຮງຮຽນ |
| 16. ສະຖິຕິສາທາລະນະສຸກ | ລະບົບການເກັບກຳລາຍງານ ແບບບໍລິຫານ, ການສຳຫຼວດພົນລະເມືອງ ແລະທີ່ຢູ່ອາໃສ, ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ, ການສຳຫຼວດດັດຊະນີໝາຍສັງຄົມລາວ |
| 17. ສະຖິຕິແຮງງານ ແລະສະຫວັດດີການສັງຄົມ | ລະບົບລາຍງານບໍລິຫານ, ການສຳຫຼວດສະພາບກຳລັງແຮງງານ, ການສຳຫຼວດວິສາຫະກິດ, ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ |
| 18. ສະຖິຕິວັດທະນະທຳ ແລະກິລາ | ລະບົບການເກັບກຳລາຍງານ ແບບບໍລິຫານ, ການສຳຫຼວດການນຳໃຊ້ເວລາຂອງບຸກຄົນ (ການສຳຫຼວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ) |
| 19. ສະຖິຕິສິ່ງແວດລ້ອມ ແລະຊັບພະຍາກອນ ທຳມະຊາດ | |
| 19.1 ສະຖິຕິອຸຕຸນິຍົມ, | ລະບົບການເກັບກຳລາຍງານ ແບບບໍລິຫານ |
| 19.2 ສະຖິຕິອຸທົກກະສາດ, | ລະບົບການເກັບກຳລາຍງານ ແບບບໍລິຫານ |

| ປະເພດສະຖິຕິທາງການ | ແຫຼ່ງຂໍ້ມູນຕົ້ນຕໍ |
|---|---|
| 19.3 ສະຖິຕິພູມີປະເທດ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະການສຳຫຼວດ |
| 19.4 ສະຖິຕິທໍລະນີສາດ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະການສຳຫຼວດ |
| 19.5 ສະຖິຕິໄພພິບັດ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະການສຳຫຼວດ |
| 19.6 ສະຖິຕິມົນລະພິດ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະການສຳຫຼວດ |
| 19.7 ສະຖິຕິສິ່ງເສດເຫຼືອ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະການສຳຫຼວດ |
| 19.8 ສະຖິຕິອື່ນໆ | ລະບົບການລາຍງານ ແບບບໍລິຫານ ແລະ ການສຳຫຼວດ |
| 20. ສະຖິຕິການນຳໃຊ້ທີ່ດິນ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະການສຳຫຼວດ |
| 21. ສະຖິຕິຄວາມໝັ້ນຄົງ | |
| 21.1 ສະຖິຕິການຄໍ້າປະກັນສະບຽງອາຫານ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະ ການສຳຫຼວດ ການຊົມໃຊ້ ແລະ ໃຊ້ຈ່າຍຄົວເຮືອນ |
| 21.2 ສະຖິຕິປະກັນ ແລະສະຫັວດດີການສັງຄົມ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະການສຳຫຼວດຄົວເຮືອນປະຈຳປີ |
| 21.3 ຄວາມຢູ່ດີກິນດີ (ໂພສະນາການ) | ການສຳຫຼວດ ການຊົມໃຊ້ ແລະໃຊ້ຈ່າຍຄົວເຮືອນ |
| 21.4 ສະຖິຕິຄວາມສ່ຽງດ້ານການດຳລົງຊີວິດ | ລະບົບການເກັບກຳລາຍງານ ແບບບໍລິຫານ ແລະການສຳຫຼວດຄົວເຮືອນປະຈຳປີ |
| 21.5 ສະຖິຕິອື່ນໆ | ລະບົບການລາຍງານ ແບບບໍລິຫານ ແລະ ການສຳຫຼວດ |
| 22. ສະຖິຕິອື່ນໆ | ລະບົບການລາຍງານ ແບບບໍລິຫານ ແລະ ການສຳຫຼວດ |
| 22.1 ສະຖິຕິຄົນພິການ | ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ, ການສຳຫຼວດສະພາບກຳລັງແຮງງານ ແລະ ລະບົບການເກັບກຳລາຍງານ ແບບບໍລິຫານ |
| 22.2 ສະຖິຕິສານ ແລະ ຄະດີ | ລະບົບການເກັບກຳລາຍງານ ແບບບໍລິຫານ |
| 22.3 ສະຖິຕິອຸປະຕິເຫດ | ລະບົບການເກັບກຳລາຍງານ ແບບບໍລິຫານ |
| 22.4 ສະຖິຕິເຜົ່າ | ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ, ລະບົບການເກັບກຳ ແບບບໍລິຫານ |
| 22.5 ສະຖິຕິອົງການຈັດຕັ້ງສັງຄົມ | ລະບົບການເກັບກຳລາຍງານ ແບບບໍລິຫານ |
| 23. ສະຖິຕິການຂຶ້ນທະບຽນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ, ແລະ ຂຶ້ນທະບຽນພາຫະນະການຂົນສົ່ງ | ການສຳຫຼວດວິສາຫະກິດ ແລະ ການບັນທຶກການຂຶ້ນທະບຽນ ປະຈຳປີ, ລະບົບການເກັບກຳລາຍງານແບບບໍລິຫານ, ກະຊວງ ການເງິນ, ອຸດສາຫະກຳການຄ້າ ແລະໂຍທາທິການ |
| 24. ສະຖິຕິການຂຶ້ນທະບຽນລະຫັດສາລະບານແຂວງ, ເມືອງ, ບ້ານ. | ລະບົບການເກັບກຳລາຍງານ ແບບບໍລິຫານ ( ສະຖິຕິ ຂັ້ນບ້ານ) , ການສຳຫຼວດ ພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ |

## ເອກະສານຊ້ອນທ້າຍ II: ສັງລວມຈຳນວນຕົວຊີ້ບອກ ແບ່ງປະເພດສະຖິຕິ ແລະ ຄາດໝາຍໃນການຜະລິດ, 2016-2025

| ລ/ດ | ປະເພດ ສະຖິຕິ | ຕົວຊີ້ບອກລະດັບຊາດ | ຕົວຊີ້ບອກລະດັບຂະແໜງການ | ຕົວຊີ້ບອກລະດັບແຂວງ | ລວມ | ຄາດໝາຍການຜະລິດ 2016-2020 | ຄາດໝາຍການຜະລິດ 2021-2025 |
|---|---|---|---|---|---|---|---|
| I. | ສະຖິຕິເສດຖະກິດ | 210 | 357 | 203 | 409 | 311 | 363 |
| II. | ສະຖິຕິວັດທະນາທຳ ແລະ ສັງຄົມ | 247 | 322 | 136 | 339 | 260 | 339 |
| III. | ສະຖິຕິສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ | 16 | 53 | 21 | 68 | 61 | 66 |
| IV. | ສະຖິຕິຄວາມໝັ້ນຄົງ | 29 | 27 | 18 | 56 | 33 | 56 |
| **ລວມ** | | **502** | **759** | **378** | **872** | **665** | **824** |

<u>ໝາຍເຫດ:</u>

1. ເປັນພື້ນຖານທີ່ຖືກກຳນົດເພື່ອ ເປັນການລິເລີ່ມໃນການປຶກສາຫາລືກ່ຽວກັບຄວາມເປັນໄປໄດ້ ໃນການຕອບສະໜອງ (ຜະລິດຕະພັນສະຖິຕິ) ພາຍໃນລະບົບສະຖິຕິແຫ່ງຊາດ ໂດຍອີງໃສ່ປະເພດສະຖິຕິທາງການ ແລະ ຄຳນຶງເຖິງຄວາມຕ້ອງການລວມຂອງລັດຖະບານ (ຕົ້ນຕໍແມ່ນຄວາມຕ້ອງການສຳລັບແຜນພັດທະນາເສດຖະກິດ-ສັງຄົມ, ການຕິດຕາມແຜນງານລຶບລ້າງຄວາມທຸກຍາກແຫ່ງຊາດ; ການພັດທະນາຂອງອາຊຽນ ແລະ ການພັດທະນາມະນຸດ ຢູ່ ສປປ ລາວ. ເຖິງຢ່າງໃດກໍ່ຕາມ ບັນດາດັດຕົວຊີ້ບອກດັ່ງກ່າວ ຍັງຈະໄດ້ສືບຕໍ່ປັບປຸງໂດຍອີງໃສ່ຄວາມສາມາດຕົວຈິງ ຂອງລະບົບສະຖິຕິແຫ່ງຊາດໃນແຕ່ລະໄລຍະ ແລະ ໃຫ້ສອດຄ່ອງກັບຕົວຊີ້ບອກຕິດຕາມເປົ້າໝາຍການພັດທະນາແບບຍືນຍົງ.
2. ບັນຊີລະອຽດຕົວຊີ້ບອກແບ່ງຕາມປະເພດສະຖິຕິ ຈະບັນຈຸເຂົ້າໃນຄຳສັ່ງແນະນຳໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025.
   ບັນຊີ ແລະ ຈຳນວນຕົວຊີ້ບອກ ທີ່ໄດ້ກຳນົດ ແມ່ນເປັນຄວາມຕ້ອງການຕ່ຳສຸດ ຊຶ່ງໄດ້ທົບທວນໃນກາງປີ 2016.

**ເອກະສານຊ້ອນທ້າຍ III: ສັງລວມບັນຊີການສຳຫຼວດ ແລະ ການເກັບກຳຂໍ້ມູນ, 2016-2025**

| ລດ | ຫົວຂໍ້ການສຳຫຼວດ | 2016 | 2017 | 2018 | 2019 | 2020 | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|---|---|---|---|---|
| 1 | ການສຳຫຼວດວິສາຫະກິດປະຈຳງວດ (4ງວດ) | x | x | x | x | x | x | x | x | x | x |
| 2 | ການສຳຫຼວດວິສາຫະກິດປະຈຳປີ | x | x | x | x | x | x | x | x | x | x |
| 3 | ການສຳຫຼວດກະສິກຳທົ່ວປະເທດ (10ປີ/ຄັ້ງ) | | | x | x | x | | | | | - |
| 4 | ການສຳຫຼວດຄົວເຮືອນປະຈຳປີ | x | x | x | x | x | x | x | x | x | x |
| 5 | ການສຳຫຼວດເສດຖະກິດທົ່ວປະເທດ (5ປີ/ຄັ້ງ) | | | x | | | | | x | | |
| 6 | ການສຳຫຼວດການຊົມໃຊ້ ແລະ ໃຊ້ຈ່າຍຂອງຄົວເຮືອນ (5ປີ/ຄັ້ງ) | | x | x | | | | x | x | | |
| 7 | ການສຳຫຼວດດັດຊະນີໝາຍສັງຄົມລາວ | x | | | | | x | | | | |
| 8 | ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສ ປີ 2025 | | | | | | | | | | x |
| 9 | ການຈົດນັບພົນລະເມືອງ | | | | | x | | | | | |
| 10 | ການສຳຫຼວດແຮງງານ | x | | | | | x | | | | |
| 11 | ການຂຶ້ນທະບຽນການເກີດ-ການຕາຍ | x | x | x | x | x | x | x | x | x | x |
| 12 | ການເກັບກຳສະຖິຕິຄວາມທຸກຍາກປະຈຳປີ | x | x | x | x | x | x | x | x | x | x |
| 13 | ການເກັບກຳສະຖິຕິຂັ້ນບ້ານປະຈຳປີ | | x | x | x | x | x | x | x | x | x |
| 14 | ສຳຫຼວດຄວາມເພິ່ງພໍໃຈ | | | x | | x | | x | | x | |
| 15 | ສະຖິຕິການຂຶ້ນທະບຽນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ປະຈຳປີ | x | x | x | x | x | x | x | x | x | x |
| 16 | ສຳຫຼວດການເຄື່ອນໄຫວວິສາຫະກິດ ແລະ ຫ້າງຮ້ານໃນເຂດເສດຖະກິດພິເສດ ແລະ ສະເພາະ ປະຈຳປີ | | x | x | x | x | x | x | x | x | x |

**ເອກະສານຊ້ອນທ້າຍ III: ສັງລວມບັນຊີການສຳຫຼວດ ແລະ ການເກັບກຳຂໍ້ມູນ, 2016-2025 (ຕໍ່)**

| ລດ | ຫົວຂໍ້ການສຳຫຼວດ | 2016 | 2017 | 2018 | 2019 | 2020 | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|---|---|---|---|---|
| 17 | ການສຳຫຼວດລາຄາຜູ້ຜະລິດ(PPI) | x | x | x | x | x | x | x | x | x | x |
| 18 | ການສຳຫຼວດຕົວແທນເພື່ອຄິດໄລ່ດັດຊະນີລາຄາ ແລະ ອັດຕາເງິນເຟີ້ (CPI, Inflation) | x | x | x | x | x | x | x | x | x | x |
| 19 | ສຳຫຼວດເກັບກຳລາຄາເພື່ອການສົມທຽບອຳນາດຊື້ລະຫວ່າງ ປະເທດ (ICP, PPP) | | x | x | | | x | x | | | x |
| 20 | ການສຳຫຼວດປັດໃຈການຜະລິດ (Input-Output) | | | | x | | | | | x | |
| 21 | ການສຳຫຼວດ ເພື່ອຄິດໄລ່ GNI | | x | x | x | x | x | x | x | x | x |
| 22 | ການສຳຫຼວດການຄ້າຜ່ານແດນ (Shuttle Trade Survey) | | x | x | x | x | x | x | x | x | x |
| 23 | ການສຳຫຼວດການຄ້າລະຫວ່າງປະເທດດ້ານການບໍລິການ (SITS Survey) | | x | x | x | x | x | x | x | x | x |
| 24 | ການສຳຫຼວດການຖານະການລົງທຶນ ແລະ ໜີ້ສິນລະຫວ່າງ ປະເທດປະຈຳປີ (IIP & EDP Survey) | x | x | x | x | x | x | x | x | x | x |
| 25 | ການສຳຫຼວດອື່ນໆທີ່ເຫັນວ່າຈຳເປັນ ເພື່ອເພີ່ມຂໍ້ມູນສະຖິຕິ ທາງດ້ານສິ່ງແວດລ້ອມ, ຮັບໃຊ້ການຜະລິດຕົວຊີ້ບອກການ ພັດທະນາແບບຍືນຍົງ, ແລະ ການຫຼຸດພົ້ນອອກຈາກດ້ອຍ ພັດທະນາ ແລະ ຄວາມໝັ້ນຄົງ ແລະ ອື່ນໆຕາມຄວາມ ເ ໝາະສົມ | | x | x | x | x | x | x | x | x | x |

**ໝາຍເຫດ**: ການກຳນົດໃນແຕ່ລະປີ ແມ່ນອີງໃສ່ຮອບວຽນ ຂອງການສຳຫຼວດ ແລະ ຄຸນລັກສະນະໃນເວລາປະຕິບັດຕົວຈິງ (ກິດຈະກຳ) ຊຶ່ງກ່ຽວພັນກັບຄວາມຕ້ອງການງົບປະມານທີ່ຈະຕ້ອງໃຊ້;

ເອກະສານຊ້ອນທ້າຍ IV.ກ: ຄວາມຕ້ອງການງົບປະມານການໃຊ້ຈ່າຍທັງໝົດ, 2016-2020

| ລ/ດ | ລາຍການ | 2016 | 2017 | 2018 | 2019 | 2020 | 2016-2020 |
|---|---|---|---|---|---|---|---|
| | **ລວມ(ຕື້ກີບ)** | **65.71** | **76.02** | **81.82** | **67.44** | **118.75** | **409.74** |
| | **ລວມ ໂດລາສະຫະລັດ 8000ກີບ/ໂດລາ** | **8,213,290.95** | **9,502,452.20** | **10,227,779.08** | **8,429,428.99** | **14,844,005.39** | **51,216,957** |
| **I** | **ລາຍຈ່າຍໃນການດຳເນີນງານ ແລະ ການຍົກລະດັບ ແລະ ການພັດທະນາຊັບພະຍາກອນມະນຸດ** | **27,902,269,580** | **49,375,574,780** | **47,313,004,580** | **47,667,896,980** | **45,665,951,680** | **217,924,697,600** |
| *1.1* | *ການດຳເນີນງານ* | *27,902,269,580* | *39,719,574,780* | *37,657,004,580* | *38,011,896,980* | *36,009,951,680* | *179,300,697,600* |
| *1.2* | *ລາຍຈ່າຍສຳລັບການຍົກລະດັບ ແລະ ການພັດທະນາຊັບພະຍາກອນມະນຸດ* | *-* | *9,656,000,000* | *9,656,000,000* | *9,656,000,000* | *9,656,000,000* | *38,624,000,000* |
| **II** | **ລາຍຈ່າຍໃນການສຳຫຼວດ** | **34,232,758,000** | **21,180,766,000** | **28,499,623,570** | **13,156,970,000** | **65,814,470,000** | **162,884,587,570** |
| | *ໃນນັ້ນ, ມູນຄ່າການສຳຫຼວດທີ່ສະເໜີ ໃຫ້ລັດຖະບານພິຈາລະນາແມ່ນ:* | *12,772,745,000* | *19,510,041,000* | *11,263,569,000* | *10,238,245,000* | *25,570,745,000* | *79,355,345,000* |
| **III** | **ລາຍຈ່າຍບໍລິຫານ ແລະ ລາຍຈ່າຍອື່ນໆ** | **3,571,300,000** | **5,463,276,800** | **6,009,604,480.00** | **6,610,564,928.00** | **7,271,621,420.80** | **28,926,367,629** |

ເອກະສານຊ້ອນທ້າຍ IV.ຂ: ຄວາມຕ້ອງການງົບປະມານໃຊ້ຈ່າຍທັງໝົດ, 2021-2025

| ລ/ດ | ລາຍການ | 2021 | 2022 | 2023 | 2024 | 2025 | 2021-2025 |
|---|---|---|---|---|---|---|---|
| | **ລວມ(ຕື້ກີບ)** | **115.23** | **74.8** | **84.8** | **72.3** | **170.3** | **517.4** |
| | **ລວມ ໂດລາສະຫະລັດ 8000ກີບ/ໂດລາ** | **14,404,037.68** | **9,354,933.12** | **10,598,576.96** | **9,033,470.00** | **21,284,449.38** | **64,675,467** |
| **I** | **ລາຍຈ່າຍໃນການດຳເນີນງານ ແລະ ການຍົກລະດັບ ແລະ ການພັດທະນາຊັບພະຍາກອນມະນຸດ** | **41,492,504,080** | **42,723,318,780** | **42,727,504,080** | **42,182,504,080** | **42,766,613,480** | **211,892,444,500** |
| *1.1* | *ການດຳເນີນງານ* | *31,836,504,080* | *33,067,318,780* | *33,071,504,080* | *32,526,504,080* | *33,110,613,480* | *163,612,444,500* |
| *1.2* | *ລາຍຈ່າຍສຳລັບການຍົກລະດັບ ແລະ ການພັດທະນາຊັບພະຍາກອນມະນຸດ* | *9,656,000,000* | *9,656,000,000* | *9,656,000,000* | *9,656,000,000* | *9,656,000,000* | *48,280,000,000* |
| **II** | **ລາຍຈ່າຍໃນການສຳຫຼວດ** | **65,741,013,800** | **23,317,484,300** | **32,382,583,497** | **19,438,875,027** | **115,797,962,530** | **256,677,919,154** |
| | *ໃນນັ້ນ, ມູນຄ່າການສຳຫຼວດທີ່ສະເໜີ ໃຫ້ລັດຖະບານພິຈາລະນາແມ່ນ:* | *37,304,420,000* | *26,636,382,721* | *17,954,094,600* | *11,522,920,275* | *44,048,612,803* | *137,466,430,398* |
| **III** | **ລາຍຈ່າຍບໍລິຫານ ແລະ ລາຍຈ່າຍອື່ນໆ** | **7,998,783,563** | **8,798,661,919.2** | **9,678,528,111.1** | **10,646,380,922.2** | **11,711,019,014.4** | **48,833,373,530** |

### ເອກະສານຊ້ອນທ້າຍ IV: ຄ. ຄວາມຕ້ອງການງົບປະມານໃຊ້ຈ່າຍທັງໝົດ, 2016-2025

| ລ/ດ | ລາຍການ | 2016-2020 | 2021-2025 | 2016-2025 | ສະເລ່ຍຕໍ່ປີ |
|---|---|---|---|---|---|
| | ລວມ(ຕື້ກີບ) | **409.74** | **517.4** | **927.14** | **92.71** |
| | ລວມ ໂດລາສະຫະລັດ 8000ກີບ/ໂດລາ | **51,216,957** | **64,675,467** | **115,892,424** | **11,589,242** |
| **I** | **ລາຍຈ່າຍໃນການດຳເນີນງານ ແລະ ການຍົກລະດັບ ແລະ ການພັດທະນາຊັບພະຍາກອນມະນຸດ** | **217,924,697,600** | **211,892,444,500** | **429,817,142,100** | 42.98 |
| *1.1* | *ການດຳເນີນງານ* | *179,300,697,600* | *163,612,444,500* | *342,913,142,100* | 34.29 |
| *1.2* | *ລາຍຈ່າຍສຳລັບການຍົກລະດັບ ແລະ ການພັດທະນາ ຊັບພະຍາກອນມະນຸດ* | *38,624,000,000* | *48,280,000,000* | *86,904,000,000* | 8.69 |
| **II** | **ລາຍຈ່າຍໃນການສຳຫຼວດ** | **162,884,587,570** | **256,677,919,154** | **419,562,506,724** | 41.96 |
| | *ໃນນັ້ນ, ມູນຄ່າການສຳຫຼວດທີ່ສະເໜີ ໃຫ້ລັດຖະບານ ພິຈາລະນາແມ່ນ:* | *79,355,345,000* | *137,466,430,398* | *216,821,775,398* | 21.68 |
| **III** | **ລາຍຈ່າຍບໍລິຫານ ແລະ ລາຍຈ່າຍອື່ນໆ** | **28,926,367,629** | **48,833,373,530** | **77,759,741,159** | 7.78 |

**ໝາຍເຫດ:**

1. ລາຍຈ່າຍບໍລິຫານ ແລະ ລາຍຈ່າຍອື່ນໆ ແມ່ນບໍ່ລວມເອົາເງິນເດືອນ ແລະ ເງິນລົງທຶນ ຊຶ່ງຄາດຄະເນການປ່ຽນແປງທາງດ້ານລາຄາ ແລະ ອັດຕາເງິນເຟີ້ປະມານ 10% ຕໍ່ປີ
2. ລາຍຈ່າຍສຳລັບການຍົກລະດັບ ແລະ ການພັດທະນາຊັບພະຍາກອນມະນຸດ ແມ່ນມີພຽງແຕ່ການສົ່ງພະນັກງານໄປຍົກລະດັບປະລິນຍາໂທ ແລະ ປະລິນຍາເອກ ເທົ່ານັ້ນ, ບໍ່ລວມເອົາການຝຶກອົບຮົມ ແລະ ສຳມະນາ
3. ການໃຊ້ຈ່າຍງົບປະມານຂອງລັດຖະບານ ແມ່ນປະຕິບັດໄປຕາມລະບຽບການນຳໃຊ້ງົບປະມານຕາມຂໍ້ຕົກລົງ ຂອງກະຊວງການເງິນໃນແຕ່ລະໄລຍະ
4. ອັດຕາແລກປ່ຽນ: 8,000 ກີບ/ໂດລາສະຫະລັດ.

"ມີຂໍ້ມູນສະຖິຕິທີ່ດີ

ມີຊີວິດທີ່ດີຂຶ້ນ"

ສູນສະຖິຕິແຫ່ງຊາດ

LAO STATISTICS BUREAU

ໂທລະສັບ: +856 21 214740 , ແຟັກ: +856 20 242022

http://www.lsb.gov.la